ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ເອກະສານລາຍງານການເງິນກາງປີ

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ສາລະບານ

	ໜ້າ
ຂໍ້ມູນທົ່ວໄປ	1 - 2
ບົດລາຍງານຂອງຄະນະບໍລິຫານ	3
ບົດລາຍງານການທົບທວນຄືນເອກະສານລາຍງານການເງິນການປີ	4 - 5
ໃບລາຍງານຜົນກຳໄລ ຫຼື ຂາດທຶນການປີ	6
ໃບລາຍງານຜົນການດຳເນີນງານນອກການທຸລະກິດການປີ	7
ໃບລາຍງານຖານະການເງິນການປີ	8 - 9
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີ	10
ໃບລາຍງານກະແສເງິນສົດການປີ	11 - 12
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນການປີ	13 – 62

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປ

ບໍລິສັດ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ຈຳກັດ, ເປັນບໍລິສັດ ມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກທຄວ ອອກໂດຍ ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິສາຫະກິດສະບັບປັບປຸງລ່າສຸດ ເລກທີ 0222/ຈທວ ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການດຳເນີນກິດຈະກຳໃຫ້ເຊົ່າສິນເຊື່ອ. ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຮັບ ໃບຢັ້ງຢືນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດ (IPO) ເຊິ່ງອອກໂດຍຫ້ອງການຄະນະກຳມະການຫຼັກຊັບລາວ. ຮຸ້ນຂອງບໍລິສັດທັງ ໝົດແມ່ນ 301,500,000 ຮຸ້ນ (ພາຍໃຕ້ຊື່ "LALCO") ໄດ້ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການຕັ້ງແຕ່ວັນທີ 19 ສິງຫາ 2019 ເປັນຕົ້ນໄປ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊົ່າຊື້ໂດຍການສະໜອງສິນເຊື່ອເຊົ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດຕ່າງໆ ເພື່ອຊື້ລົດຈັກ, ລົດໃຫຍ່ ແລະ ອະສັງຫາລິມະຊັບ.

ທຶນຈົດທະບຽນທີ່ຖອກແລ້ວ

ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ນະວັນທີ 30 ມິຖຸນາ 2024 ແມ່ນ 30,150,000,000 ກີບ (31 ທັນວາ 2023 ແມ່ນ 30,150,000,000 ກີບ).

ທີ່ຕັ້ງ

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ສະພາອຳນວຍການ

ສະມາຊິກຂອງສະພາອຳນວຍການ ພາຍໃນໄລຍະ ແລະ ນະວັນທີປິດລາຍງານສະບັບນີ້ມີດັ່ງນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ ນາງ Yuki Scott	ປະທານ	ແຕ່ງຕັ້ງຄືນວັນທີ 28 ເມສາ 2022
ທ່ານ Mitsuteru Nagaya	ຮອງປະທານ	ແຕ່ງຕັ້ງວັນທີ 15 ກັນຍາ 2021
ທ່ານ Yoshihito Oshima	ສະມາຊິກ	ແຕ່ງຕັ້ງວັນທີ 13 ກັນຍາ 2022
ທ່ານ Hirofumi Inada	ສະມາຊິກ	ແຕ່ງຕັ້ງວັນທີ 15 ກັນຍາ 2021
ທ່ານ ນາງ Harumi Ide	ສະມາຊິກ	ແຕ່ງຕັ້ງຄືນວັນທີ 28 ເມສາ 2022

ຄະນະບໍລິຫານ

ສະມາຊິກຄະນະບໍລິຫານ ພາຍໃນໄລຍະ ແລະ ນະວັນທີປິດລາຍງານສະບັບນີ້ມີດັ່ງລຸ່ມນີ້:

ຊື່	*ຕຳແໜ່ງ*	*ວັນທີແຕ່ງຕັ້ງ*
ທ່ານ Yoshihito Oshima	ຜູ້ອຳນວຍການໃຫຍ່	ແຕ່ງຕັ້ງວັນທີ 13 ກັນຍາ 2022

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ຂໍ້ມູນທົ່ວໄປ (ຕໍ່)

ຕົວແທນທາງດ້ານກົດໝາຍ

ຕົວແທນທາງດ້ານກົດໝາຍຂອງບໍລິສັດພາຍໃນໄລຍະ ແລະ ນະວັນທີຂອງບົດລາຍງານສະບັບນີ້ແມ່ນ ທ່ານ Yoshihito Oshima – ຜູ້ອຳນວຍການໃຫຍ່.

ນັກກວດສອບບັນຊີ

ນັກກວດສອບບັນຊີຂອງບໍລິສັດແມ່ນ ບໍລິສັດ ເອີນ ແອນ ຢັ້ງ ລາວ ຈຳກັດ.

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ບົດລາຍງານຂອງຄະນະບໍລິຫານ

ຄະນະບໍລິຫານຂອງ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ມີຄວາມຍິນດີນຳສະເໜີບົດລາຍງານຂອງຕົນເອງ ແລະ ເອກະສານລາຍງານການເງິນຂອງບໍລິສັດນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024.

ຄວາມຮັບຜິດຊອບຂອງຄະນະບໍລິຫານຕໍ່ເອກະສານລາຍງານການເງິນ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບຕໍ່ເອກະສານລາຍງານການເງິນການປີ ທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຄວາມຍຸດຕິທຳຂອງຖານະການເງິນການປີຂອງບໍລິສັດ ແລະ ຜົນການດຳເນີນງານການປີ ແລະ ກະແສເງິນສົດການປີ. ໃນການກະກຽມເອກະສານລາຍງານການເງິນການປີ, ຄະນະບໍລິຫານຂອງບໍລິສັດຈະຕ້ອງ:

- ເລືອກເຟັ້ນເອົານະໂຍບາຍການບັນຊີທີ່ເໝາະສົມ ແລະ ນຳໃຊ້ຢ່າງສະໝ່ຳສະເໝີ;
- ພິຈາລະນາ ແລະ ຄາດຄະເນຢ່າງສົມເຫດສົມຜົນ ແລະ ຮອບຄອບ;
- ຖະແຫຼງການວ່າ ບັນດາມາດຕະຖານການບັນຊີທີ່ກ່ຽວຂ້ອງໄດ້ຖືກປະຕິບັດຕາມມາດຕະຖານ, ສິ່ງທີ່ໄດ້ປະຕິບັດແຕກຕ່າງຈາກມາດຕະຖານຈະຕ້ອງຖືກເປີດເຜີຍ ແລະ ອະທິບາຍຢູ່ໃນເອກະສານລາຍງານການເງິນການປີ; ແລະ
- ກະກຽມເອກະສານລາຍງານການເງິນການປີບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ ຍົກເວັ້ນໃນກໍລະນີທີ່ຄາດຄະເນວ່າບໍລິສັດຈະບໍ່ສາມາດດຳເນີນທຸລະກິດຕໍ່ໄປໄດ້.

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບເພື່ອຮັບປະກັນວ່າ ບັນດາຂໍ້ມູນທາງການບັນຊີທີ່ຖືກບັນທຶກໄວ້ ໄດ້ເປີດເຜີຍດ້ວຍເຫດຜົນທີ່ຖືກຕ້ອງຕະຫຼອດມາ, ຖານະການເງິນການປີຂອງບໍລິສັດ ແລະ ເພື່ອຮັບປະກັນວ່າການບັນທຶກການບັນຊີແມ່ນສອດຄ່ອງກັບຂອບຂ່າຍການບັນຊີທີ່ເໝາະສົມ. ບໍລິສັດຍັງຮັບຜິດຊອບຕໍ່ການຮັກສາຊັບສົມບັດຂອງບໍລິສັດ ແລະ ຮັບປະກັນວ່າບໍລິສັດມີຂັ້ນຕອນປ້ອງກັນ ແລະ ຄົ້ນຫາການສໍ້ໂກງ ແລະ ສິ່ງທີ່ຜິດປົກກະຕິອື່ນໆ.

ຄະນະບໍລິຫານຂອງບໍລິສັດໄດ້ຢັ້ງຢືນວ່າ ບໍລິສັດ ໄດ້ປະຕິບັດຕາມເງື່ອນໄຂຂ້າງເທິງໃນການກະກຽມເອກະສານລາຍງານການເງິນການປີ.

ຖະແຫຼງການຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດມີຄວາມຍິນດີຖະແຫຼງວ່າ, ໃນຄຳເຫັນຂອງບໍລິສັດ, ເອກະສານລາຍງານການເງິນທີ່ສະແດງໃຫ້ເຫັນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຄວາມຍຸດຕິທຳຂອງຖານະການເງິນການປີຂອງບໍລິສັດນະວັນທີ 30 ມິຖຸນາ 2024, ແລະ ຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ກະແສເງິນສົດການປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍສອດຄ່ອງກັບມາດຕະຖານການລາຍງານການເງິນສາກົນ.

ຕາງໜ້າ ແລະ ໃນນາມຄະນະບໍລິຫານ:

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

Ernst & Young Lao Co., Ltd
6th floor, Kolao Tower I, 23 Singha Road
Nongbone Village, Saysettha District
Vientiane Capital, Lao P.D.R.

Tel: +856 21 455 077
Fax: +856 21 455 078
ey.com

Building a better working world

ເລກທີອ້າງອີງ: 11729320/68456711 - LR

ບົດລາຍງານການທົບທວນຄືນເອກະສານລາຍງານການເງິນກາງປີ

ຮຽນ: ຜູ້ຖືຮຸ້ນ ຂອງບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນເອກະສານລາຍງານການເງິນກາງປີ ຂອງບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ"), ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນກາງປີ ນະວັນທີ 30 ມິຖຸນາ 2024, ແລະ ໃບລາຍງານຜົນກຳໄລ ຫຼື ຂາດທຶນ ກາງປີ ແລະ ໃບລາຍງານຜົນການດຳເນີນງານນອກການທຸລະກິດ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດກາງປີທີ່ສິ້ນສຸດວັນທີດັ່ງກ່າວ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ, ລວມໄປເຖິງບົດສະຫຼຸບນະໂຍບາຍບັນຊີທີ່ສຳຄັນ.

ໜ້າທີ່ຮັບຜິດຊອບຂອງຄະນະບໍລິຫານ

ຄະນະບໍລິຫານຂອງບໍລິສັດມີໜ້າທີ່ຮັບຜິດຊອບສຳລັບການກະກຽມ ແລະ ນຳສະເໜີຂໍ້ມູນທາງການເງິນກາງປີຢ່າງຍຸດຕິທຳ ເພື່ອໃຫ້ສອດຄ່ອງຕາມມາດຕະຖານການລາຍງານການເງິນສາກົນ (IFRSs) ແລະ ອີງຕາມຂໍ້ກຳນົດທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີຂໍ້ມູນທາງການເງິນກາງປີ ແລະ ສຳລັບການຄຸ້ມຄອງພາຍໃນຂອງຄະນະບໍລິຫານໄດ້ພິຈາລະນາເຖິງຄວາມຈຳເປັນໃນການກະກຽມ ແລະ ນຳສະເໜີຂໍ້ມູນທາງການເງິນກາງປີໂດຍບໍ່ມີການບິດເບືອນຂໍ້ມູນທີ່ແທ້ຈິງ ເຖິງແມ້ວ່າຈະມີການສໍ້ໂກງ ຫຼື ຂໍ້ຜິດພາດໃດໆກໍ່ຕາມ.

ໜ້າທີ່ຮັບຜິດຊອບຂອງນັກກວດສອບ

ໜ້າທີ່ຮັບຜິດຊອບຂອງພວກຂ້າພະເຈົ້າ ແມ່ນສະເໜີຂໍ້ສະຫຼຸບຕໍ່ກັບເອກະສານລາຍງານການເງິນ ກາງປີ ໂດຍອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານສາກົນວ່າດ້ວຍການທົບທວນຄືນ ເລກທີ 2410-ການທົບທວນຄືນຂໍ້ມູນທາງການເງິນກາງປີ ໄດ້ປະຕິບັດໂດຍນັກກວດສອບອິດສະຫຼະຂອງບໍລິສັດ".

ການທົບທວນຄືນເອກະສານລາຍງານການເງິນກາງປີ ແມ່ນປະກອບດ້ວຍການປະຕິບັດການສອບຖາມເບື້ອງຕົ້ນກັບບຸກຄົນທີ່ຮັບຜິດຊອບກ່ຽວກັບການເງິນ ແລະ ການບັນຊີທີ່ສຳຄັນ, ແລະ ນຳໃຊ້ຂັ້ນຕອນການວິເຄາະ ແລະ ວິທີການທົບທວນຄືນອື່ນໆ. ການທົບທວນຄືນນີ້ມີຂອບເຂດນ້ອຍກວ່າການດຳເນີນການກວດສອບທີ່ອີງຕາມມາດຕະຖານສາກົນດ້ານການກວດສອບ ແລະ ດ້ວຍເຫດນີ້, ພວກຂ້າພະເຈົ້າບໍ່ສາມາດຮັບປະກັນໄດ້ວ່າຈະພົບເຫັນໄດ້ເຖິງບັນຫາທີ່ສຳຄັນທັງໝົດຄືກັບການດຳເນີນການກວດສອບ. ດັ່ງນັ້ນ, ພວກຂ້າພະເຈົ້າຈຶ່ງບໍ່ອອກຄຳເຫັນຕໍ່ເອກະສານລາຍງານການເງິນ.

ການສະຫຼຸບ

ອີງຕາມການທົບທວນຄືນຂອງພວກຂ້າພະເຈົ້າ, ພົບວ່າບໍ່ມີສິ່ງໃດທີ່ຈະເປັນສິ່ງບົ່ງຊີ້ໃຫ້ເຮົາເຊື່ອວ່າ ເອກະສານລາຍງານການເງິນກາງປີ ຂອງບໍລິສັດບໍ່ໄດ້ຖືກນຳສະເໜີຖືກຕ້ອງຕາມຄວາມເປັນຈິງ ແລະ ຍຸດຕິທຳໃນທຸກປະການຂອງເອກະສານລາຍງານຖານະການເງິນກາງປີ ນະ ວັນທີ 30 ມິຖຸນາ 2024, ແລະ ຜົນໄດ້ຮັບຂອງຜົນການດຳເນີນງານ ແລະ ກະແສເງິນສົດສຳລັບຫົກເດືອນຕົ້ນປີທີ່ສິ້ນສຸດວັນທີດັ່ງກ່າວ ໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ (IFRSs) ແລະ ອີງຕາມຂໍ້ກຳນົດທີ່ກ່ຽວຂ້ອງໃນການກະກຽມ ແລະ ນຳສະເໜີຂໍ້ມູນທາງການເງິນກາງປີ.

A member firm of Ernst & Young Global Limited

Building a better working world

ບັນຫາທີ່ຄວນເອົາໃຈໃສ່

ພວກຂ້າພະເຈົ້າສະເໜີໃຫ້ເອົາໃຈໃສ່ຕໍ່ຍົກລະທິບາຍເລກທີ 19 ຂອງເອກະສານລາຍງານການເງິນກາງປີທີ່ເປີດເຜີຍ: ມີສ່ວນຕ່າງລະຫວ່າງ ອາກອນກຳໄລທີ່ຕ້ອງຈ່າຍນະວັນທີ 30 ມິຖຸນາ 2024 ຈຳນວນທີ່ຮັບຮູ້ໃນໃບລາຍງານການເງິນ ແລະ ບົດບັນທຶກການກວດກາຂອງເຈົ້າ ໜ້າທີ່ສ່ວຍສາອາກອນ. ບັນຫາດັ່ງກ່າວແມ່ນອາດຈະສົ່ງຜົນຕໍ່ການໄຫລ່ລຽງຄືນພັນທະອາກອນໂດຍເຈົ້າໜ້າທີ່ສ່ວຍສາອາກອນໃນອະນາ ຄົດ. ການສະຫຼຸບຂອງພວກຂ້າພະເຈົ້າແມ່ນບໍ່ໄດ້ມີເງື່ອນໄຂຕໍ່ກັບບັນຫາດັ່ງກ່າວ.

ໃນນາມ ແລະ ຕາງໜ້າ ບໍລິສັດ ເອິນ ແອນ ຢັ໋ງ ລາວ ຈຳກັດ

ອັນ ເລ
ຮຸ້ນສ່ວນ

ທະບຽນອະນຸຍາດດຳເນີນການກວດສອບ
ໃບຢັ້ງຢືນ ເລກທີ 018/LCPAA_APT-2019

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

A member firm of Ernst & Young Global Limited

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນກຳໄລ ຫຼື ຂາດທຶນກາງປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

	ປົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ລາຍຮັບດອກເບ້ຍຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ		203,878,869,453	208,510,878,177
ລາຍຮັບດອກເບ້ຍອື່ນໆ ແລະ ລາຍຮັບທີ່ຄ້າຍຄືກັນ		13,310,108,672	13,804,473,111
ລາຍຈ່າຍດອກເບ້ຍຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ		(1,147,859,937)	(1,243,280,057)
ລາຍຮັບດອກເບ້ຍສຸດທິ	**8**	**216,041,118,188**	**221,072,071,231**
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ	9	(6,074,599,185)	(4,456,474,695)
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຸດທິ		**(6,074,599,185)**	**(4,456,474,695)**
ກຳໄລສຸດທິຈາກອັດຕາແລກປ່ຽນ		49,341,228,515	149,022,301,454
ລາຍຮັບອື່ນໆຈາກການດຳເນີນງານ	10	932,073,404	1,199,843,509
ລວມລາຍຮັບຈາກການດຳເນີນງານ		**260,239,820,922**	**366,837,741,499**
(ລາຍຈ່າຍ)/ເກັບຄືນຂາດທຶນສິນເຊື່ອດ້ານຊັບສິນທາງການເງິນ	11	(1,328,285,964)	7,874,338,595
ລາຍຮັບຈາກການດຳເນີນງານສຸດທິ		**258,911,534,958**	**374,712,080,094**
ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ	12	(31,986,966,464)	(23,285,722,401)
ຄ່າຫຼຸ້ຍຫ້ຽນຂອງຊັບສິນບັດ ແລະ ອຸປະກອນ	18	(3,696,353,831)	(1,174,987,900)
ລາຍຈ່າຍອື່ນໆໃນການດຳເນີນງານ	13	(24,610,825,510)	(27,910,737,225)
ລວມລາຍຈ່າຍຈາກການດຳເນີນງານ		**(60,294,145,805)**	**(52,371,447,526)**
ກຳໄລກ່ອນຫັກອາກອນ		**198,617,389,153**	**322,340,632,568**
ລາຍຈ່າຍອາກອນກຳໄລພາຍໃນໄລຍະ	21	(31,085,328,951)	(29,175,314,604)
ກຳໄລສຸດທິສຳລັບໄລຍະ		**167,532,060,202**	**293,165,317,964**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນການດຳເນີນງານນອກການທຸລະກິດການປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

	ບົດອະທິບາຍ ເລກທີ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ກຳໄລສຸດທິສຳລັບໄລຍະ		**167,532,060,202**	**293,165,317,964**
ລາຍຮັບອື່ນໆນອກການທຸລະກິດ		-	-
ລວມລາຍຮັບນອກການທຸລະກິດພາຍໃນໄລຍະ		-	-
ລວມລາຍຮັບນອກການທຸລະກິດພາຍໃນໄລຍະ, ຫຼັງຫັກອາກອນ		**167,532,060,202**	**293,165,317,964**
ກຳໄລຕໍ່ຮຸ້ນ			
ພື້ນຖານ, ກຳໄລພາຍໃນໄລຍະປັນໃຫ້ກັບຜູ້ຖືຮຸ້ນສາມັນ	22	556	972

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນກາງປີ
ນະວັນທີ 30 ມິຖຸນາ 2024

	ບົດອະທິບາຍ ເລກທີ	*30 ມິຖຸນາ 2024 ກີບ*	*31 ທັນວາ 2023 ກີບ*
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ທຽບເທົ່າເງິນສົດ	14	202,288,823,255	191,315,208,217
ເງິນຝາກຢູ່ທະນາຄານ	15	30,937,669,818	8,352,510,192
ໜີ້ຕ້ອງຮັບສັນຍາເຊົ່າຊື້ – ສ່ວນທີ່ໝຸນວຽນ	16	1,104,526,270,171	995,388,274,173
ຊັບສິນໝຸນວຽນອື່ນໆ	17	521,229,436,731	455,789,830,366
ລວມຊັບສິນໝຸນວຽນ		**1,858,982,199,975**	**1,650,845,822,948**
ຊັບສິນບໍ່ໝຸນວຽນ			
ໜີ້ຕ້ອງຮັບສັນຍາເຊົ່າຊື້ – ສ່ວນທີ່ບໍ່ໝຸນວຽນ	16	69,601,945,377	74,830,916,499
ຊັບສິມບັດ ແລະ ອຸປະກອນ ແລະ ສິດໃນການນຳໃຊ້ຊັບສິນ	18	10,427,911,654	9,196,786,238
ຊັບສິນບໍ່ໝຸນວຽນອື່ນໆ		-	1,158,825
ລວມຊັບສິນບໍ່ໝຸນວຽນ		**80,029,857,031**	**84,028,861,562**
ລວມຊັບສິນ		**1,939,012,057,006**	**1,734,874,684,510**

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນກາງປີ (ຕໍ່)

ນະວັນທີ 30 ມິຖຸນາ 2024

	ບົດອະທິບາຍ ເລກທີ	*30 ມິຖຸນາ 2024 ກີບ*	*31 ທັນວາ 2023 ກີບ*
ໜີ້ສິນ			
ໜີ້ສິນໝຸນວຽນ			
ພັນທະທາງກົດໝາຍ	19	159,342,362,047	134,964,338,050
ເງິນກູ້ຢືມໄລຍະສັ້ນ	20	19,000,000,000	-
ໜີ້ສິນໝຸນວຽນອື່ນໆ		3,666,890,377	8,644,434,558
ລວມໜີ້ສິນໝຸນວຽນ		**182,009,252,424**	**143,608,772,608**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	20	20,512,487,642	22,307,655,164
ໜີ້ຕ້ອງສົ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງ	24	1,316,180,748	1,316,180,748
ລວມໜີ້ສິນບໍ່ໝຸນວຽນ		**21,828,668,390**	**23,623,835,912**
ລວມໜີ້ສິນ		**203,837,920,814**	**167,232,608,520**
ທຶນ			
ທຶນຈົດທະບຽນທີ່ຖອກແລ້ວ	23	30,150,000,000	30,150,000,000
ສ່ວນເພີ່ມມູນຄ່າຮຸ້ນ		155,497,646,314	155,497,646,314
ທຶນອື່ນໆ		290,000,000	290,000,000
ກຳໄລສະສົມ		1,534,161,489,878	1,366,629,429,676
ຄັງສຳຮອງຕາມລະບຽບການ		15,075,000,000	15,075,000,000
ລວມທຶນ		**1,735,174,136,192**	**1,567,642,075,990**
ລວມໜີ້ສິນ ແລະ ທຶນ		**1,939,012,057,006**	**1,734,874,684,510**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງການປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

	ທຶນຈົດທະບຽນທີ່ຖອກແລ້ວ ກີບ	*ຄັງສຳຮອງຕາມລະບຽບການ ກີບ*	*ສ່ວນເພີ່ມມູນຄ່າຮຸ້ນ ກີບ*	*ທຶນອື່ນໆ ກີບ*	*ກຳໄລສະສົມ ກີບ*	*ລວມ ກີບ*
ຍອດເຫຼືອນະວັນທີ 1 ມັງກອນ 2023	**30,150,000,000**	**-**	**155,497,646,314**	**290,000,000**	**1,018,166,056,605**	**1,204,103,702,919**
ກຳໄລພາຍໃນປີ	-	-	-	-	380,723,873,071	380,723,873,071
ຄັງສຳຮອງຕາມລະບຽບການ	-	15,075,000,000	-	-	(15,075,000,000)	-
ຈ່າຍເງິນປັນຜົນຂອງປີ 2021	-	-	-	-	(17,185,500,000)	(17,185,500,000)
ຍອດເຫຼືອນະວັນທີ 31 ທັນວາ 2023	**30,150,000,000**	**15,075,000,000**	**155,497,646,314**	**290,000,000**	**1,366,629,429,676**	**1,567,642,075,990**
ກຳໄລພາຍໃນໄລຍະ	-	-	-	-	167,532,060,202	167,532,060,202
ຍອດເຫຼືອນະວັນທີ 30 ມິຖຸນາ 2024	**30,150,000,000**	**15,075,000,000**	**155,497,646,314**	**290,000,000**	**1,534,161,489,878**	**1,735,174,136,192**

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດການປີ
ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

	ບົດອະທິບາຍ ເລກທີ	ໄລຍະຫົກເດືອນຕົ້ນປີທີ ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ	ໄລຍະຫົກເດືອນຕົ້ນປີທີ ສິ້ນສຸດວັນທີ 30 ມິຖຸນາ 2023 ກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນ		**198,617,389,153**	**322,340,632,568**
ດັດແກ້ສຳລັບ:			
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ	18	3,696,353,831	1,174,987,900
ການປ່ຽນແປງເງິນແຮສຳລັບການເສື່ອມມູນຄ່າໜີ້ສູນເສຍ	11	1,328,285,964	(7,874,338,595)
ລາຍຈ່າຍດອກເບ້ຍ		1,147,859,937	1,243,280,057
ລາຍຮັບດອກເບ້ຍ		(203,723,856,315)	(208,510,878,177)
ກຳໄລສຸດທິຈາກອັດຕາແລກປ່ຽນ		(105,277,141,527)	(106,507,090,808)
ການປ່ຽນແປງໃນຊັບສິນການດຳເນີນງານ			
ການປ່ຽນແປງສຸດທິໃນເງິນຝາກທະນາຄານ		(4,750,319,807)	-
ການປ່ຽນແປງສຸດທິໃນໜີ້ຕ້ອງຮັບສັນຍາເຊົ່າຊື້		(24,327,968,422)	45,297,331,482
ການປ່ຽນແປງສຸດທິໃນຊັບສິນອື່ນໆ		(39,031,780,099)	(203,716,361,520)
ການປ່ຽນແປງໃນໜີ້ສິນການດຳເນີນງານ			
ການປ່ຽນແປງສຸດທິໃນໜີ້ສິນອື່ນໆ		(8,358,109,211)	(4,769,312,152)
ດອກເບ້ຍທີ່ຈ່າຍ		(1,147,859,937)	(1,398,803,511)
ດອກເບ້ຍທີ່ໄດ້ຮັບ		183,850,148,163	167,184,712,305
ອາກອນກຳໄລທີ່ໄດ້ຊຳລະ		(3,326,739,927)	-
ກະແສເງິນສົດສຸດທິ(ນຳໃຊ້)/ຈາກກິດຈະກຳການດຳເນີນງານ		**(1,303,738,197)**	**4,464,159,549**
ກິດຈະກຳທາງການເງິນ			
ການຊື້ຊັບສິນບັດ ແລະ ອຸປະກອນ	18	(4,927,479,247)	(2,988,114,480)
ກະແສເງິນສົດສຸດທິໃຊ້ໃນກິດຈະກຳທາງການເງິນ		**(4,927,479,247)**	**(2,988,114,480)**
ກິດຈະກຳການຈັດຫາເງິນທຶນ			
ເງິນກູ້ທີ່ເບີກຖອນ		19,000,000,000	27,707,000,000
ການຊຳລະຄືນເງິນກູ້		(1,795,167,518)	(58,788,778,250)
ຈ່າຍເງິນປັນຜົນ		-	(3,437,100,000)
ກະແສເງິນສົດສຸດທິຈາກ/(ນຳໃຊ້)ກິດຈະກຳການຈັດຫາເງິນທຶນ		**17,204,832,482**	**(34,518,878,250)**
ການປ່ຽນແປງສຸດທິຂອງເງິນສົດ ແລະ ທຽບເທົ່າເງິນສົດ		**10,973,615,038**	**(33,042,833,181)**
ເງິນສົດ ແລະ ທຽບເທົ່າເງິນສົດໃນຕົ້ນໄລຍະ	**14**	**191,315,208,217**	**189,632,451,441**
ເງິນສົດ ແລະ ທຽບເທົ່າເງິນສົດໃນທ້າຍໄລຍະ	**14**	**202,288,823,255**	**156,589,618,260**

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດກາງປີ (ຕໍ່)

ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີ
ນະວັນທີ ແລະ ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024

1. ຂໍ້ມູນບໍລິສັດ

ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ") ກ່ອນໜ້ານີ້ແມ່ນ ບໍລິສັດ ລາວ ອາຊຽນ ເຊົ່າສິນເຊື່ອ ຈຳກັດ, ເປັນ ບໍລິສັດມະຫາຊົນທີ່ດຳເນີນທຸລະກິດໃນ ສປປ ລາວ ອີງຕາມໃບທະບຽນວິສາຫະກິດ ເລກທີ 081/ກທຄວ ອອກໂດຍ ກົມ ທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ລົງວັນທີ 5 ກຸມພາ 2015 ແລະ ໃບທະບຽນວິສາຫະ ກິດສະບັບປັບປຸງລ່າສຸດ ເລກທີ 0222/ຈຫວ, ລົງວັນທີ 19 ກຸມພາ 2019. ບໍລິສັດໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ (ທຫລ) ລົງວັນທີ 2 ກຸມພາ 2015 ແລະ ສະບັບປັບປຸງລ່າສຸດ ວັນທີ 14 ກັນຍາ 2017 ໃນການດຳເນີນກິດຈະກຳໃຫ້ເຊົ່າ ສິນເຊື່ອ. ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຮັບໃບຢັ້ງຢືນການສະເໜີຂາຍຮຸ້ນຕໍ່ສາທາລະນະຄັ້ງທຳອິດ (IPO) ເຊິ່ງອອກໂດຍ ຫ້ອງການຄະນະກຳມະການຫຼັກຊັບລາວ. ຮຸ້ນຂອງບໍລິສັດທັງໝົດແມ່ນ 301,500,000 ຮຸ້ນ (ພາຍໃຕ້ຊື່ "LALCO") ໄດ້ເຂົ້າຈົດ ທະບຽນໃນຕະຫຼາດຫຼັກຊັບລາວຢ່າງເປັນທາງການຕັ້ງແຕ່ວັນທີ 19 ສິງຫາ 2019 ເປັນຕົ້ນໄປ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນການບໍລິການໃຫ້ເຊົ່າຊື້ໂດຍການສະໜອງສິນເຊື່ອເຊົ່າຊື້ສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດ ຕ່າງໆເພື່ອຊື້ລົດຈັກ, ລົດໃຫຍ່ ແລະ ອະສັງຫາລິມະຊັບ.

ທຶນຈົດທະບຽນທີ່ຖອກແລ້ວຂອງບໍລິສັດ ກາງປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ແມ່ນ 30,150,000,000 ກີບ (31 ທັນວາ 2023 ແມ່ນມີ 30,150,000,000 ກີບ).

ສຳນັກງານໃຫຍ່ຂອງບໍລິສັດຕັ້ງຢູ່ ຊັ້ນ 2, ອາຄານ NNN, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ.

ນະວັນທີ 30 ມິຖຸນາ 2024 ບໍລິສັດມີພະນັກງານທັງໝົດ 465 ຄົນ (2023: 352 ຄົນ).

2. ພື້ນຖານການກະກຽມ

ເອກະສານລາຍງານການເງິນຂອງບໍລິສັດສຳລັບຫົກເດືອນຕົ້ນປີຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການ ລາຍງານການເງິນ ("IFRSs") ທີ່ອອກໂດຍຄະນະກຳມະການກຳນົດມາດຕະຖານການບັນຊີສາກົນ ("IASB").

ບໍລິສັດ ໄດ້ບັນທຶກບັນຊີເປັນສະກຸນເງິນກີບລາວ ("ກີບ") ເຊິ່ງເປັນສະກຸນເງິນຫຼັກທີ່ບໍລິສັດນຳໃຊ້ເຂົ້າໃນລາຍການເຄື່ອນໄຫວ ທຸລະກິດ ແລະ ນຳສະເໜີເອກະສານລາຍງານການເງິນກາງປີເປັນສະກຸນເງິນກີບລາວ.

ປີການບັນຊີຂອງບໍລິສັດແມ່ນ ເລີ່ມແຕ່ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

3. ຖະແຫຼງການຂອງການປະຕິບັດຕາມ

ເອກະສານລາຍງານການເງິນກາງປີຂອງບໍລິສັດຖືກກະກຽມໂດຍສອດຄ່ອງກັບມາດຕະຖານສາກົນດ້ານການລາຍງານການເງິນ ("IFRSs") ທີ່ອອກໂດຍ IASB.

4. ການນຳສະເໜີເອກະສານລາຍງານການເງິນກາງປີ

ເອກະສານລາຍງານການເງິນກາງປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ແມ່ນໄດ້ຖືກກະກຽມໂດຍສອດຄ່ອງກັບມາດຕະຖານ IFRSs. ບໍລິສັດໄດ້ກະກຽມເອກະສານລາຍງານການເງິນໂດຍອີງໃສ່ພື້ນຖານຄວາມສືບເນື່ອງໃນການດຳເນີນການ. ຄະນະຜູ້ບໍລິຫານ ພິຈາລະນາວ່າບໍ່ມີຄວາມບໍ່ແນ່ນອນທີ່ອາດຈະກໍ່ໃຫ້ເກີດຄວາມສົງໄສກ່ຽວກັບການຕັ້ງສົມມຸດຕິຖານນີ້. ພວກເຂົາໄດ້ມີຮູບແບບໃນການວິນິດໄສວ່າມີການຄາດການທີ່ສົມເຫດສົມຜົນ ທີ່ບໍລິສັດມີຊັບພະຍາກອນທີ່ພຽງພໍເພື່ອສືບຕໍ່ ໃນການດຳເນີນງານເພື່ອອະນາຄົດ ແລະ ບໍ່ຕ່ຳກວ່າ 12 ເດືອນນັບແຕ່ທ້າຍໄລຍະຂອງປີການບັນຊີ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານກາງປີການເງິນ ໂດຍສອດຄ່ອງກັບການກະກຽມເອກະສານລາຍງານການເງິນປະຈຳປີຂອງບໍລິສັດສຳລັບທ້າຍປີ 31 ທັນວາ 2023, ຍົກເວັ້ນການນຳໃຊ້ມາດຕະຖານໃໝ່ທີ່ມີຜົນນຳໃຊ້ໃນວັນທີ 1 ມັງກອນ 2024. ບໍລິສັດຍັງບໍ່ທັນໄດ້ຮັບຮອງເອົາມາດຕະຖານ, ການຕີຄວາມໝາຍ ຫຼື ການປັບປຸງອັນໃດອັນໜຶ່ງທີ່ອອກມາແຕ່ຍັງບໍ່ທັນມີຜົນນຳໃຊ້ເທື່ອ. ການປັບປຸງຕ່າງໆແມ່ນຈະຖືກນຳໃຊ້ໃນປີ 2024 ແຕ່ເຖິງຢ່າງໃດກໍ່ຕາມການປັບປຸງແມ່ນຈະບໍ່ສົ່ງຜົນກະທົບຕໍ່ເອກະສານລາຍງານການເງິນກາງປີຂອງບໍລິສັດ.

ນະໂຍບາຍລຸ່ມນີ້ແມ່ນນະໂຍບາຍການບັນຊີທີ່ສຳຄັນທີ່ບໍລິສັດໄດ້ນຳໃຊ້ໃນການກະກຽມເອກະສານລາຍງານການເງິນກາງປີ:

5.1 ການປ່ຽນຄ່າເງິນຕາຕ່າງປະເທດ

ການເຄື່ອນໄຫວຕ່າງໆໃນສະກຸນເງິນຕາຕ່າງປະເທດ ແມ່ນບັນທຶກຕາມອັດຕາແລກປ່ຽນຂອງສະກຸນເງິນທີ່ໃຊ້ໃນມື້ທີ່ມີລາຍການເຄື່ອນໄຫວ. ຊັບສິນ ແລະ ໜີ້ສິນທາງການເງິນທີ່ສະແດງມູນຄ່າເປັນເງິນຕາຕ່າງປະເທດແມ່ນໄດ້ມີການຕີມູນຄ່າມາເປັນສະກຸນເງິນກີບຕາມອັດຕາແລກປ່ຽນ ນະວັນທີລາຍງານ (ເບິ່ງລາຍການອັດຕາແລກປ່ຽນທີ່ໃຊ້ໃນການຕີມູນຄ່າມາເປັນສະກຸນເງິນກີບ ນະວັນທີ 30 ມິຖຸນາ 2024 ແລະ 30 ມິຖຸນາ 2023 ໄດ້ນຳສະເໜີໃນບົດອະທິບາຍເລກທີ 32). ສ່ວນຕ່າງຂອງອັດຕາແລກປ່ຽນທີ່ຍັງບໍ່ທັນເກີດຂຶ້ນຈິງຈາກການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນທາງການເງິນແມ່ນໄດ້ຖືກລາຍງານໃນໃບລາຍງານຜົນກຳໄລ ຫຼື ຂາດທຶນກາງປີ.

5.2 ການຮັບຮູ້ລາຍຮັບດອກເບ້ຍ

5.2.1 ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ ("EIR")

ພາຍໃຕ້ IFRS 9, ລາຍຮັບດອກເບ້ຍແມ່ນຖືກບັນທຶກໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບການວັດແທກມູນຄ່າຊັບສິນທາງການເງິນຕາມຕົ້ນທຶນຄ່າເສື່ອມ. ເຊັ່ນດຽວກັນກັບລາຍຈ່າຍດອກເບ້ຍກໍ່ຖືກຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງສຳລັບບັນດາທຸກໜີ້ສິນທາງການເງິນທີ່ຖືກອງຕາມຕົ້ນທຶນຄ່າເສື່ອມ. ອັດຕາດອກເບ້ຍທີ່ແທ້ຈິງແມ່ນອັດຕາສ່ວນຫຼຸດມູນຄ່າການຮັບເງິນສົດໃນອະນາຄົດທີ່ຖືກຄາດຄະເນຜ່ານອາຍຸທີ່ຄາດການໄວ້ຂອງຊັບສິນ ຫຼື ໜີ້ສິນທາງການເງິນ ຫຼື ເມື່ອເໝາະສົມ ເຊິ່ງເປັນຊ່ວງໄລຍະເວລາທີ່ສັ້ນກວ່າ ໂດຍຕີມູນຄ່າຕາມບັນຊີລວມຂອງຊັບສິນທາງການເງິນນັ້ນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.2 *ການຮັບຮູ້ລາຍຮັບດອກເບ້ຍ* (ຕໍ່)

5.2.1 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ ("EIR")* (ຕໍ່)

ອັດຕາດອກເບ້ຍທີ່ແທ້ຈິງ (ແລະ ຕົ້ນທຶນຄ່າເສື່ອມຂອງຊັບສິນທາງການເງິນ) ແມ່ນຖືກຄິດໄລ່ໂດຍການນຳເອົາຕົ້ນທຶນໃນການເຮັດທຸລະກຳ ແລະ ທຸກໆສ່ວນຫຼຸດ ຫຼື ສ່ວນເພີ່ມ ໃນການໄດ້ມາເຊິ່ງຊັບສິນທາງການເງິນ ພ້ອມກັນກັບ ຄ່າທຳນຽມ ແລະ ຕົ້ນທຶນຕ່າງໆ ທີ່ເປັນສ່ວນປະກອບລວມເຂົ້າໃນ ອັດຕາດອກເບ້ຍທີ່ແທ້ຈິງ. ບໍລິສັດຮັບຮູ້ລາຍຮັບດອກເບ້ຍທີ່ໄດ້ນຳໃຊ້ອັດຕາຜົນຕອບແທນທີ່ສະແດງໃຫ້ເຫັນເຖິງການຄາດຄະເນທີ່ດີທີ່ສຸດຂອງ ອັດຕາຜົນຕອບແທນຄົງທີ່ຕະຫຼອດອາຍຸ ທີ່ຄາດໄວ້ຂອງໜີ້ຕ້ອງຮັບສັນຍາເຊົ່າຊໍ. ສະນັ້ນ, ການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງຍັງໄດ້ພິຈາລະນາເຖິງຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໄດ້ເຊິ່ງອາດຈະຖືເປັນຄ່າໃຊ້ຈ່າຍໃນຫຼາຍຂັ້ນຂອງອາຍຸທີ່ຄາດການໄວ້ຂອງຊັບສິນທາງການເງິນ ແລະ ລັກສະນະພິເສດອື່ນໆຂອງທຸລະບວນຂອງຜະລິດຕະພັນ (ເຊິ່ງລວມທັງການຈ່າຍລ່ວງໜ້າ, ປັບໄໝດອກເບ້ຍ ແລະ ຄ່າທຳນຽມ).

ຖ້າຫາກວ່າການຄາດການກະແສເງິນສົດຂອງຊັບສິນ ຫຼື ໜີ້ສິນທາງການເງິນທີ່ເປັນອັດຕາຄົງທີ່ຖືກປັບປຸງໃໝ່ໂດຍເຫດຜົນທີ່ນອກເໜືອຈາກຄວາມສ່ຽງທາງດ້ານສິນເຊື່ອ. ດັ່ງນັ້ນ, ສ່ວນປ່ຽນແປງໃນກະແສເງິນສົດຕາມສັນຍາໃນອະນາຄົດແມ່ນຖືກຫຼຸດຄ່າທີ່ອັດຕາດອກເບ້ຍທີ່ແທ້ຈິງເດີມກັບການດັດແກ້ທີ່ນຳມາພາຍຫຼັງຂອງມູນຄ່າຕາມບັນຊີ. ສ່ວນແຕກຕ່າງຈາກມູນຄ່າທີ່ຖືຢູ່ກ່ອນໜ້າແມ່ນຖືກບັນທຶກເປັນການດັດແກ້ທີ່ເປັນຄ່າ ບວກ ຫຼື ລົບໃຫ້ແກ່ມູນຄ່າຕາມບັນຊີຂອງ ຊັບສິນ ຫຼື ໜີ້ສິນທາງການເງິນໃນເອກະສານລາຍງານຖານະການເງິນພ້ອມກັບ ການເພີ່ມຂຶ້ນ ຫຼື ຫຼຸດລົງໃນ ລາຍຮັບ/ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

5.2.2 *ດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືດອກເບ້ຍ ແລະ ລາຍຈ່າຍ*

ລາຍຮັບສຸດທິຈາກດອກເບ້ຍປະກອບດ້ວຍລາຍຮັບດອກເບ້ຍ ແລະ ລາຍຈ່າຍດອກເບ້ຍທີ່ໄດ້ຄິດໄລ່ໂດຍນຳໃຊ້-ວິທີອັດຕາດອກເບ້ຍທີ່ແທ້ຈິງ ແລະ ວິທີອື່ນໆ. ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນຖືກເປີດເຜີຍໂດຍແຍກກັນຢູ່ໜ້າເອກະສານລາຍງານຜົນການດຳເນີນງານ.

ລາຍຮັບ/ລາຍຈ່າຍດອກເບ້ຍຄິດໄລ່ໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ, ບໍລິສັດລວມເອົາດອກເບ້ຍຂອງບັນດາເຄື່ອງມືທາງດ້ານການເງິນເທົ່ານັ້ນ ເຊິ່ງໄດ້ອະທິບາຍໃນບົດອະທິບາຍເລກທີ 5.2.1 ດ້ານເທິງ.

ບໍລິສັດຄິດໄລ່ລາຍຮັບດອກເບ້ຍຂອງຊັບສິນທາງການເງິນຍົກເວັ້ນບັນດາຊັບສິນທີ່ເສື່ອມມູນຄ່າດ້ານສິນເຊື່ອທີ່ໄດ້ພິຈາລະນາໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບມູນຄ່າຕາມບັນຊີຂອງຊັບສິນທາງການເງິນ.

ເມື່ອຊັບສິນທາງດ້ານການເງິນເກີດເສື່ອມມູນຄ່າທາງດ້ານສິນເຊື່ອ ແລະ ຖືວ່າເປັນ'ຂັ້ນທີ 3', ບໍລິສັດຄິດໄລ່ລາຍຮັບດອກເບ້ຍໂດຍການນຳໃຊ້ອັດຕາດອກເບ້ຍທີ່ແທ້ຈິງກັບຕົ້ນທຶນຄ່າເສື່ອມມູນຄ່າສຸດທິຂອງຊັບສິນທາງການເງິນ. ຖ້າຫາກວ່າຊັບສິນທາງການເງິນບໍ່ມີການເສື່ອມມູນຄ່າທາງດ້ານສິນເຊື່ອອີກຕໍ່ໄປ, ບໍລິສັດສາມາດກັບຄືນໄປຄິດໄລ່ລາຍຮັບດອກເບ້ຍຕາມພື້ນຖານຈຳນວນເຕັມໄດ້.

5.3 *ຂາດທຶນສຸດທິຈາກການຢຸດຮັບຮູ້ຊັບສິນທາງການເງິນທີ່ຄິດໄລ່ຈາກຕົ້ນທຶນຄ່າເສື່ອມ*

ຂາດທຶນສຸດທິຂອງຊັບສິນທາງການເງິນທີ່ຄິດໄລ່ຈາກຕົ້ນທຶນຄ່າເສື່ອມລວມທັງຂາດທຶນ (ຫຼື ລາຍຮັບ) ທີ່ຮັບຮູ້ຈາກການຂາຍ ຫຼື ການຢຸດຮັບຮູ້ຂອງຊັບສິນທາງດ້ານການເງິນທີ່ຄິດໄລ່ຈາກສ່ວນຕ່າງລະຫວ່າງມູນຄ່າບັນຊີ (ລວມຄ່າເສື່ອມມູນຄ່າ) ແລະ ລາຍໄດ້ທີ່ໄດ້ຮັບ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.4 *ເຄື່ອງມືທາງດ້ານການເງິນ - ການຮັບຮູ້ໃນເບື້ອງຕົ້ນ*

5.4.1 *ວັນທີຂອງການຮັບຮູ້*

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດ, ຍົກເວັ້ນໜີ້ຕ້ອງຮັບສັນຍາເຊົ່າຊື້, ຖືກຮັບຮູ້ເບື້ອງຕົ້ນໃນມື້ທີ່ຖືກຊື້ - ຂາຍເຊັ່ນ ມື້ທີ່ ບໍລິສັດກາຍເປັນພາກສ່ວນໜຶ່ງໃນພັນທະສັນຍາຂອງເຄື່ອງມືທາງການເງິນ. ນຶ່ລວມທັ ງ "ວິທີການຊື້-ຂາຍແບບທົ່ວໄປ" - ການຊື້ ຫຼື ການຂາຍຂອງຊັບສິນທາງການເງິນ ທີ່ຮຽກຮ້ອງໃຫ້ມີການນຳສົ່ງຕາມກຳນົດເວລາທີ່ໄດ້ຖືກກຳນົດໂດຍກົດໝາຍ ຫຼື ລະບຽບ ການເງິນໃນສະຖານທີ່ຊື້ຂາຍ. ໜີ້ຕ້ອງຮັບສັນຍາເຊົ່າຊື້ ແມ່ນໄດ້ຖືກຮັບຮູ້ເມື່ອມີການໂອນຊຳລະຄ່າງວດພາຍໃຕ້ສັນຍາເຊົ່າຊື້.

5.4.2 *ການວັດແທກເບື້ອງຕົ້ນຂອງເຄື່ອງມືທາງການເງິນ*

ການຈັດປະເພດຂອງເຄື່ອງມືທາງການເງິນທີ່ຮັບຮູ້ມູນຄ່າເບື້ອງຕົ້ນ ແມ່ນຂຶ້ນກັບອາຍຸຂອງສັນຍາ ແລະ ຮູບແບບການບໍລິຫານ ເຄື່ອງມືທາງການເງິນຂອງບໍລິສັດ, ເຊິ່ງໄດ້ອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 5.6.1.1 ແລະ 5.6.1.2. ເຄື່ອງມືທາງການ ເງິນທັງໝົດໃນເບື້ອງຕົ້ນ ແມ່ນຖືກວັດແທກຕາມມູນຄ່າຍຸດຕິທຳ (ຕາມທີ່ລະບຸໄວ້ໃນບົດອະທິບາຍເລກທີ 5.6), ຍົກເວັ້ນໃນ ກໍລະນີຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນທີ່ບັນທຶກໄວ້ໃນ FVTPL, ຄ່າໃຊ້ຈ່າຍໃນທຸລະກຳທີ່ມີການເພີ່ມ ຫຼື ຫັກ ອອກຈາກ, ຈຳນວນນີ້. ໜີ້ຕ້ອງຮັບທາງການເງິນ ແມ່ນວັດແທກໂດຍລາຄາຂອງທຸລະກຳ. ເມື່ອມູນຄ່າຍຸດຕິທຳຂອງເຄື່ອງມືທາງ ການເງິນທີ່ຮັບຮູ້ໃນເບື້ອງຕົ້ນແຕກຕ່າງຈາກລາຄາການເຮັດທຸລະກຳ, ບໍລິສັດຈະບັນທຶກກຳໄລ ຫຼື ຂາດທຶນນະນີ້ທີ 1, ດັ່ງທີ່ ອະທິບາຍຂ້າງລຸ່ມນີ້.

5.4.3 *ກຳໄລ ຫຼື ຂາດທຶນ 'ມື້ທີ 1"*

ເມື່ອລາຄາໃນມື້ທີ່ເກີດການເຄື່ອນໄຫວ ຕ່າງຈາກມູນຄ່າຍຸດຕິທຳຂອງລາຄາຕາມທ້ອງຕະຫຼາດໃນປັດຈຸບັນ ແລະ ມູນຄ່າ ຍຸດຕິທຳແມ່ນອີງຕາມຮູບແບບການນຳໃຊ້ເຕັກນິກໂດຍການສຳຫຼວດການເຄື່ອນໄຫວໃນຕະຫຼາດ, ບໍລິສັດຮັບຮູ້ສ່ວນຜິດດ່ຽງ ລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າຍຸດຕິທຳໃນລາຍຮັບສຸດທິຈາກການຄ້າ. ໃນກໍລະນີທີ່ມູນຄ່າຍຸດຕິ ທຳຖືກກຳນົດຕາມຖານຂໍ້ມູນທີ່ບໍ່ໄດ້ຖືກສຳຫຼວດ, ສ່ວນຜິດດ່ຽງລະຫວ່າງລາຄາໃນມື້ທີ່ການເຄື່ອນໄຫວເກີດຂຶ້ນ ແລະ ມູນຄ່າທີ່ ໄດ້ຈາກການນຳໃຊ້ເຕັກນິກການຕີມູນຄ່າດັ່ງກ່າວ ແມ່ນຈະຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານກ່ຶ ຕໍ່ເມື່ອຂໍ້ມູນທີ່ນຳໃຊ້ ສາມາດສັງເກດເຫັນໄດ້ຈະແຈ້ງ ຫຼື ເມື່ອເຄື່ອງມືທາງການເງິນຖືກສະສາງອອກຈາກບັນຊີ.

5.4.4 *ປະເພດການຕີມູນຄ່າຂອງຊັບສິນ ແລະ ໜີ້ສິນທາງການເງິນ*

ບໍລິສັດຈັດປະເພດຊັບສິນທາງການເງິນທັງໝົດອີງຕາມແບບຈຳລອງທຸລະກິດສຳລັບການບໍລິຫານຊັບສິນ ແລະ ເງື່ອນໄຂສັນຍາ ຂອງຊັບສິນ, ເຊິ່ງຕີມູນຄ່າດັ່ງລຸ່ມນີ້:

- ຕົ້ນທຶນຄ່າເສື່ອມ, ດັ່ງທີ່ອະທິບາຍໃນບົດອະທິບາຍເລກທີ 5.6.1;
- FVOCI (ບໍລິສັດບໍ່ມີຊັບສິນທາງດ້ານການເງິນຈັດຢູ່ໃນ FVOCI);
- FVTPL (ບໍລິສັດບໍ່ມີຊັບສິນທາງດ້ານການເງິນຈັດຢູ່ໃນ FVTPL);

ໜີ້ສິນທາງການເງິນແມ່ນຖືກຕີມູນຄ່າໃນຕົ້ນທຶນຄ່າເສື່ອມມູນຄ່າ ຫຼື FVTPL ເມື່ອຖືກຖືເປັນການຊື້ຂາຍ ຫຼື ນຳໃຊ້ການກຳນົດ ມູນຄ່າຍຸດຕິທຳ (ບໍລິສັດບໍ່ມີໜີ້ສິນທາງການເງິນທີ່ຈັດຢູ່ໃນ FVTPL).

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.5 *ການກຳນົດມູນຄ່າຍຸຕິທຳ*

ບໍລິສັດໃຊ້ເຕັກນິກການປະເມີນມູນຄ່າທີ່ໃຊ້ໂດຍທົ່ວໄປຂອງຜູ້ມີສ່ວນຮ່ວມໃນຕະຫຼາດໃນການກຳນົດລາຄາເຄື່ອງມືທາງດ້ານການເງິນ ແລະ ເຕັກນິກທີ່ໄດ້ຮັບການສາທິດເພື່ອໃຫ້ການປະເມີນລາຄາມີຄວາມໜ້າເຊື່ອຖືຂອງທຸລະກຳໃນຕະຫຼາດໂຕຈິງ ເພື່ອສະແດງໃຫ້ເຫັນວ່າມູນຄ່າຍຸຕິທຳນັ້ນມີທີ່ມາແນວໃດ, ເຄື່ອງມືທາງດ້ານການເງິນແມ່ນຖືກຈັດປະເພດໂດຍອີງໃສ່ເຕັກນິກການຈັດລຳດັບຂັ້ນຂອງການປະເມີນມູນຄ່າ, ດັ່ງສະຫຼຸບລຸ່ມນີ້:

- ເຄື່ອງມືທາງການເງິນໃນ ລະດັບທີ 1 - ຂໍ້ມູນທີ່ຖືກໃຊ້ໃນການຕີມູນຄ່າແມ່ນ ລາຄາສະເໜີ ຊື້ - ຂາຍທີ່ບໍ່ໄດ້ດັດແກ້ຈາກຕະຫຼາດຊື້ຂາຍຄ່ອງສຳລັບຊັບສິນ ຫຼື ໜີ້ສິນທີ່ຄືກັນທຸກຢ່າງທີ່ບໍລິສັດມີ ນະວັນທີການຕີມູນຄ່າ. ບໍລິສັດຈະພິຈາລະນາວ່າຕະຫຼາດນັ້ນເປັນຕະຫຼາດຊື້ຂາຍຄ່ອງ ຖ້າຫາກວ່າມີກິດຈະກຳການຄ້າທີ່ພຽງພໍເຊິ່ງກ່ຽວພັນກັບບໍລິມາດ ແລະ ສະພາບຄ່ອງຂອງຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ແລະ ເມື່ອມີການຜູກມັດ ແລະ ມີລາຄາທີ່ສາມາດໃຊ້ສິດ ແຈ້ງວ່າ ສາມາດທີ່ຈະນຳໃຊ້ໄດ້ ນະວັນທີທີ່ລາຍງານ.
- ເຄື່ອງມືທາງການເງິນໃນ ລະດັບທີ 2 - ຂໍ້ມູນທີ່ຖືກໃຊ້ສຳລັບການຕີມູນຄ່າ ແລະ ມີຄວາມສຳຄັນ ເຊິ່ງມາຈາກຂໍ້ມູນຕະຫຼາດທີ່ໄດ້ສັງເກດ ໂດຍກົງ ຫຼື ທາງອ້ອມ ຕະຫຼອດໄລຍະຂອງອາຍຸຂອງເຄື່ອງມື. ຂໍ້ມູນດັ່ງກ່າວນັ້ນແມ່ນປະກອບດ້ວຍ ລາຄາສະ ເໜີຊື້ - ຂາຍສຳລັບຊັບສິນ ຫຼື ໜີ້ສິນທີ່ຄ້າຍຄືກັນໃນຕະຫຼາດຊື້ຂາຍຄ່ອງ, ລາຄາສະເໜີຊື້ - ຂາຍສຳລັບ ຊັບສິນ ຫຼື ໜີ້ສິນ ທີ່ຄືກັນທຸກຢ່າງ ໃນຕະຫຼາດທີ່ບໍ່ແມ່ນຕະຫຼາດຊື້ຂາຍຄ່ອງ, ແລະ ຂໍ້ມູນທີ່ສາມາດສັງເກດໄດ້ນອກຈາກ ລາຄາ ສະເໜີຊື້ - ຂາຍ ເຊັ່ນວ່າ ອັດຕາດອກເບ້ຍ ແລະ ເສັ້ນອັດຕາຜົນຕອບແທນ, ຄວາມເໜັງຕີງ, ແລະ ການແຜ່ຂະຫຍາຍຂອງສິນເຊື່ອ. ນອກຈາກນີ້, ການດັດແກ້ແມ່ນອາດຈະຕ້ອງການ ສຳລັບເງື່ອນໄຂ ຫຼື ຖານະຂອງຊັບສິນ ຫຼື ສ່ວນຂະຫຍາຍທີ່ກ່ຽວຂ້ອງກັບລາຍການທີ່ສາມາດປຽບທຽບໄດ້ໃນເຄື່ອງມືທີ່ມີລາຄາ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າການດັດແກ້ນັ້ນ ແມ່ນຖືກອີງໃສ່ຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີໃນສຳຄັນຕໍ່ການຕີມູນຄ່າທັງໝົດ, ບໍລິສັດຈະຈັດບໍລິສັດເຄື່ອງມືນັ້ນ ເປັນ ລະດັບທີ 3.
- ເຄື່ອງມືທາງດ້ານການເງິນໃນ ລະດັບທີ 3 - ບັນດາເຄື່ອງມືທາງການເງິນເຫຼົ່ານີ້ແມ່ນລວມຢູ່ໃນ ໜຶ່ງ ຫຼື ຫຼາຍຂໍ້ມູນທີ່ບໍ່ສາມາດສັງເກດໄດ້ຢ່າງມີສາລະສຳຄັນຕໍ່ການຕີມູນຄ່າໂດຍທັງໝົດ.

ບໍລິສັດປະເມີນການຈັດລະດັບໃນແຕ່ລະໄລຍະການລາຍງານເທື່ອລະເຄື່ອງມື ແລະ ຈັດປະເພດເຄື່ອງມືຄືນເມື່ອຈຳເປັນໂດຍອີງຕາມຄວາມເປັນຈິງໃນທ້າຍໄລຍະການລາຍງານ.

5.6 *ຊັບສິນ ແລະ ໜີ້ສິນທາງການເງິນ*

5.6.1 *ໜີ້ຕ້ອງຮັບຈາກທະນາຄານອື່ນ, ໜີ້ຕ້ອງຮັບສັນຍາເຊົ່າຊື້ ແລະ ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ*

ບໍລິສັດໄດ້ປະເມີນໜີ້ຕ້ອງຮັບຈາກທະນາຄານອື່ນ, ຕ້ອງຮັບສັນຍາເຊົ່າຊື້ ແລະ ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງທີ່ວັດແທກຕາມຄ່າເສື່ອມ ຖ້າຫາກວ່າສອດຄ່ອງກັບເງື່ອນໄຂລຸ່ມນີ້:

- ຊັບສິນການເງິນແມ່ນຖືເອົາເປັນຮູບແບບທຸລະກິດໂດຍມີຈຸດປະສົງເພື່ອຖືຊັບສິນທາງການເງິນ ເພື່ອເກັບກຳກະແສເງິນສົດຕາມສັນຍາ;
- ເງື່ອນໄຂຕາມສັນຍາຂອງຊັບສິນທາງການເງິນເຮັດໃຫ້ວັນທີກຳນົດຂອງກະແສເງິນສົດທີ່ເປັນການຈ່າຍເງິນຕົ້ນ ແລະ ດອກເບ້ຍ (SPPI) ໃນຍອດຍັງເຫຼືອຂອງຈຳນວນເງິນຕົ້ນ.

ລາຍລະອຽດຂອງເງື່ອນໄຂເຫຼົ່ານີ້ແມ່ນໄດ້ລະບຸໄວ້ຂ້າງລຸ່ມນີ້.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.6 ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

5.6.1.1 ການປະເມີນຕົວແບບທຸລະກິດ

ບໍລິສັດພິຈາລະນາຕົວແບບທຸລະກິດໃນລະດັບທີ່ສະທ້ອນໄດ້ດີທີ່ສຸດເຖິງວິທີບໍລິຫານກຸ່ມຂອງຊັບສິນທາງການເງິນເພື່ອບັນລຸວັດຖຸປະສົງຂອງທຸລະກິດ:

- ຄວາມສ່ຽງທີ່ມີຜົນຕໍ່ກັບການດຳເນີນງານຂອງຮູບແບບທາງທຸລະກິດ (ແລະ ຊັບສິນທາງການເງິນທີ່ຖືໃນຮູບແບບທຸລະກິດ) ແລະ ໂດຍສະເພາະແມ່ນວິທີການຈັດການຄວາມສ່ຽງເຫຼົ່ານັ້ນ;
- ວິທີທີ່ຜູ້ບໍລິຫານຂອງທຸລະກິດນັ້ນຖືກຕອບແທນແນວໃດ (ຕົວຢ່າງ ຄ່າຕອບແທນແມ່ນຖືກອີງໃສ່ມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ບໍລິຫານ ຫຼືວ່າ ຕາມກະແສເງິນສົດຕາມສັນຍາທີ່ເກັບໄດ້).

ການປະເມີນຮູບແບບທຸລະກິດແມ່ນຖືກອີງໃສ່ສະຖານະການທີ່ຄາດການໄວ້ຢ່າງສົມເຫດສົມຜົນໂດຍທີ່ບໍ່ໄດ້ຄຳນຶງເຖິງສະຖານະການໃນ 'ກໍລະນີທີ່ຮ້າຍແຮງທີ່ສຸດ' ຫຼື 'ກໍລະນີທີ່ກົດດັນ'. ຖ້າຫາກວ່າກະແສເງິນສົດຫຼັງຈາກການຮັບຮູ້ໃນເບື້ອງຕົ້ນແມ່ນຖືກຮັບຮູ້ໃນທາງທີ່ແຕກຕ່າງຈາກສິ່ງທີ່ຄາດຫວັງໄວ້ດັ່ງເດີມຂອງບໍລິສັດ, ບໍລິສັດຈະບໍ່ປ່ຽນແປງການຈັດປະເພດຂອງຊັບສິນທາງການເງິນທີ່ເຫຼືອຢູ່ທີ່ຖືຄອງໃນຮູບແບບທຸລະກິດ ແຕ່ວ່າ ລວມຂໍ້ມູນດັ່ງກ່າວເຂົ້າກັນເມື່ອປະເມີນຊັບສິນທາງການເງິນທີ່ເກີດໃໝ່ ຫຼື ຊື້ເຂົ້າໃໝ່ໃນອະນາຄົດ.

5.6.1.2 ການທົດສອບ SPPI

ດັ່ງຂັ້ນຕອນທີສອງຂອງຂັ້ນຕອນການຈັດປະເພດ ບໍລິສັດປະເມີນເງື່ອນໄຂຕາມສັນຍາຂອງຊັບສິນທາງການເງິນເພື່ອລະບຸວ່າກົງກັບເງື່ອນໄຂຂອງການທົດສອບ SPPI ຫຼື ບໍ່.

'ເງິນຕົ້ນ' ສຳລັບຈຸດປະສົງຂອງການທົດສອບນີ້ແມ່ນຖືກລະບຸໃນມູນຄ່າຍຸດຕິທຳຂອງຊັບສິນທາງການເງິນໃນການຮັບຮູ້ເບື້ອງຕົ້ນ ແລະ ອາດຈະປ່ຽນແປງຕະຫຼອດອາຍຸຂອງຊັບສິນທາງການເງິນ (ຕົວຢ່າງ ຖ້າຫາກວ່າມີການຊຳລະເງິນຕົ້ນ ຫຼື ຄ່າເສື່ອມມູນຄ່າຂອງ ສ່ວນເພີ່ມ/ສ່ວນຫຼຸດ).

ອົງປະກອບທີ່ສຳຄັນທີ່ສຸດຂອງດອກເບ້ຍພາຍໃຕ້ສັນຍາການປ່ອຍກູ້ໂດຍທົ່ວໄປແລ້ວແມ່ນໄດ້ຮັບການພິຈາລະນາມູນຄ່າເງິນຕາມເວລາ ແລະ ຄວາມສ່ຽງດ້ານສິນເຊື່ອ. ເພື່ອທີ່ຈະສ້າງການປະເມີນ SPPI, ບໍລິສັດໄດ້ນຳໃຊ້ການປະເມີນ ແລະ ພິຈາລະນາປັດໄຈທີ່ກ່ຽວຂ້ອງເຊັ່ນວ່າ ສະກຸນເງິນທີ່ຊັບສິນທາງການເງິນນັ້ນຖືກກຳນົດ ແລະ ໄລຍະເວລາທີ່ກຳນົດອັດຕາດອກເບ້ຍ.

ໃນທາງກົງກັນຂ້າມ, ເງື່ອນໄຂສັນຍາທີ່ແນະນຳຄວາມສ່ຽງ ຫຼື ການເໜັງຕີງຂອງກະແສເງິນສົດຕາມສັນຍາທີ່ບໍ່ກ່ຽວຂ້ອງກັບການຈັດການເງິນກູ້ພື້ນຖານບໍ່ໄດ້ເຮັດໃຫ້ເກີດກະແສເງິນສົດຕາມສັນຍາທີ່ເປັນການຈ່າຍເງິນຕົ້ນ ແລະ ດອກເບ້ຍພຽງແຕ່ຈຳນວນທີ່ຄົງຄ້າງ. ໃນກໍລະນີດັ່ງກ່າວ, ຊັບສິນທາງດ້ານການເງິນແມ່ນຕ້ອງການທີ່ຈະໄດ້ຮັບການວັດແທກຢູ່ທີ່ FVTPL.

5.7 ການຈັດປະເພດຂອງຊັບສິນທາງການເງິນ

ບໍລິສັດບໍ່ໄດ້ຈັດປະເພດຊັບສິນທາງດ້ານການເງິນຄືນໃໝ່ຕາມການຮັບຮູ້ເບື້ອງຕົ້ນຂອງພວກເຂົາ, ນອກຈາກກໍລະນີພິເສດທີ່ບໍລິສັດໄດ້ມາ, ລົບລ້າງ, ຫຼື ຍົກເລີກສາຍທຸລະກິດ. ໜີ້ສິນທາງການເງິນບໍ່ເຄີຍຖືກຈັດປະເພດໃໝ່.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.8 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ

5.8.1 ການຢຸດຮັບຮູ້ຍ້ອນການດັດແກ້ຢ່າງສຳຄັນພາຍໃຕ້ເງື່ອນໄຂ ແລະ ຂໍ້ກຳນົດ

ບໍລິສັດຈະຢຸດຮັບຮູ້ຊັບສິນທາງການເງິນເຊັ່ນວ່າ ໜີ້ຕ້ອງຮັບສັນຍາເຊົ່າຊື້, ເມື່ອຂໍ້ກຳນົດ ແລະ ເງື່ອນໄຂໄດ້ຖືກເຈລະຈາຄືນ ເຊິ່ງຈະກາຍເປັນໜີ້ຕ້ອງຮັບສັນຍາເຊົ່າຊື້ ພ້ອມກັບ ສ່ວນຕ່າງທີ່ຖືກຮັບຮູ້ເປັນກຳໄລ ຫຼື ຂາດທຶນຈາກການຢຸດຮັບຮູ້, ຖ້າຫາກວ່າລາຍຈ່າຍຄ່າເສື່ອມມູນຄ່າໜີ້ເສຍຍັງບໍ່ທັນໄດ້ຖືກບັນທຶກເທື່ອ. ໜີ້ຕ້ອງຮັບສັນຍາເຊົ່າຊື້ທີ່ຖືກຮັບຮູ້ໃໝ່ຈະຖືກຈັດປະເພດໃໝ່ໃນຂັ້ນທີ 1 ເພື່ອຈຸດປະສົງການຕີມູນຄ່າ.

ເມື່ອປະເມີນວ່າຈະຢຸດຮັບຮູ້ໜີ້ຕ້ອງຮັບສັນຍາເຊົ່າຊື້ ຫຼື ບໍ່ ໂດຍພາຍໃຕ້ເງື່ອນໄຂຕ່າງໆ ບໍລິສັດຈະພິຈາລະນາປັດໃຈດັ່ງລຸ່ມນີ້:

- ການປ່ຽນແປງໃນສະກຸນເງິນຂອງໜີ້ຕ້ອງຮັບສັນຍາເຊົ່າຊື້
- ການປ່ຽນແປງໃນຄູ່ສັນຍາ; ແລະ
- ຖ້າຫາກວ່າການດັດແກ້ເຄື່ອງມືດັ່ງກ່າວຈະບໍ່ກົງກັບ SPPI ອີກຕໍ່ໄປ

ຖ້າຫາກວ່າການດັດແກ້ບໍ່ມີຜົນກະທົບໃນກະແສເງິນສົດທີ່ມີສ່ວນຕ່າງເປັນວົງກວ້າງດັ່ງທີ່ກຳນົດໄວ້ລຸ່ມນີ້, ການດັດແກ້ນັ້ນຈະບໍ່ມີຜົນໃນການຢຸດຮັບຮູ້. ອີງຕາມສ່ວນປ່ຽນແປງສ່ວນຫຼຸດໃນກະແສເງິນສົດຕໍ່ກັບອັດຕາດອກເບ້ຍທີ່ແທ້ຈິງເດີມ, ບໍລິສັດຈະບັນທຶກການດັດແກ້ເປັນກຳໄລ ຫຼື ຂາດທຶນ ເມື່ອຂາດທຶນຈາກຄ່າເສື່ອມມູນຄ່າຍັງບໍ່ໄດ້ຖືກບັນທຶກ. ສຳລັບໜີ້ສິນທາງດ້ານການເງິນ, ບໍລິສັດພິຈາລະນາການດັດແກ້ຕ່າງໆ ໂດຍອີງໃສ່ປັດໃຈດ້ານຄຸນນະພາບ ແລະ ຖ້າຜົນທີ່ໄດ້ຮັບມີຄວາມແຕກຕ່າງລະຫວ່າງມູນຄ່າສ່ວນຫຼຸດທີ່ຖືກດັດແກ້ມູນຄ່າປັດຈຸບັນ ແລະ ມູນຄ່າຕາມບັນຊີເບື້ອງຕົ້ນຂອງໜີ້ສິນທາງດ້ານການເງິນ, ຫຼື ຫຼາຍກວ່າສິບສ່ວນຮ້ອຍ (10%). ສຳລັບຊັບສິນທາງດ້ານການເງິນ, ການປະເມີນນີ້ແມ່ນອີງໃສ່ປັດໃຈດ້ານຄຸນນະພາບ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.8 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

5.8.2 ຊັບສິນທາງການເງິນ

ຊັບສິນທາງການເງິນ (ຫຼື, ສ່ວນໜຶ່ງຂອງຊັບສິນທາງການເງິນ ຫຼື ສ່ວນໜຶ່ງຂອງກຸ່ມຊັບສິນການເງິນທີ່ຄ້າຍຄືກັນ) ຈະຖືກຢຸດຮັບຮູ້ເປັນຊັບສິນ ກໍ່ຕໍ່ເມື່ອສິດທິທີ່ຈະໄດ້ຮັບກະແສເງິນສົດຈາກຊັບສິນໄດ້ໝົດອາຍຸແລ້ວ. ນອກຈາກນີ້, ບໍລິສັດຍັງຢຸດຮັບຮູ້ເປັນຊັບສິນ ຖ້າຊັບສິນດັ່ງກ່າວຖືກໂອນ ແລະ ການໂອນດັ່ງກ່າວສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້.
ບໍລິສັດຖືວ່າໄດ້ໂອນຊັບສິນຖ້າຫາກວ່າ:

- ບໍລິສັດໄດ້ໂອນກຳມະສິດທັງໝົດໃນການຮັບກະແສເງິນສົດຈາກຊັບສິນ;
  ຫຼື
- ບໍລິສັດຮັກສາສິດທິໃນການຮັບກະແສເງິນສົດ ແຕ່ຕ້ອງມີພັນທະຜູກພັນທີ່ຈະຕ້ອງຊຳລະກະແສເງິນສົດທີ່ຈະໄດ້ຮັບເຕັມຈຳນວນໂດຍປາສະຈາກການລ່າຊ້າທີ່ສຳຄັນໃຫ້ພາກສ່ວນທີສາມພາຍໃຕ້ສັນຍາ 'ການສິ່ງຕໍ່'.

ສັນຍາການສິ່ງຕໍ່ ເປັນການເຮັດທຸລະກຳຜ່ານບໍລິສັດຖືເປັນລາຍການທີ່ເກີດຂຶ້ນ ເມື່ອບໍລິສັດຖືສິດຕາມສັນຍາ ເພື່ອຮັບກະແສເງິນສົດຂອງຊັບສິນທາງການເງິນ (ຊັບສິນເດີມ), ແຕ່ຖືເປັນພັນທະຜູກພັນຕາມສັນຍາທີ່ຈະຕ້ອງຊຳລະກະແສເງິນສົດໃຫ້ແກ່ກິດຈະການຢ່າງໜ້ອຍໜຶ່ງແຫ່ງ (ຜູ້ຮັບສຸດທ້າຍ), ເມື່ອຖືກຕ້ອງຕາມເງື່ອນໄຂ. ນະວັນທີ 30 ມິຖຸນາ 2024 ບໍລິສັດບໍ່ມີຊັບສິນທາງການເງິນທີ່ຢູ່ພາຍໃຕ້ການຈັດການດັ່ງກ່າວຕາມເງື່ອນໄຂທັງສາມຂໍ້ດັ່ງຕໍ່ໄປນີ້:

- ບໍລິສັດບໍ່ມີພັນທະຜູກພັນທີ່ຈະຈ່າຍໃຫ້ແກ່ຜູ້ໄດ້ຮັບສຸດທ້າຍ ຍົກເວັ້ນວ່າ ມີມູນຄ່າເທົ່າທຽມທີ່ເກັບໄດ້ຈາກຊັບສິນເດີມເຊິ່ງບໍ່ລວມຊຳລະລ່ວງໜ້າໄລຍະສັ້ນໂດຍອີງກອນ ພ້ອມກັບສິດເຕັມສ່ວນໃນການຟື້ນຟູມູນຄ່າທີ່ໃຫ້ກູ້ຢືມບວກກັບດອກເບ້ຍຄ້າງຈ່າຍໃນອັດຕາຕະຫຼາດ;
- ບໍລິສັດບໍ່ສາມາດຂາຍ ຫຼື ຈຳນຳຊັບສິນເດີມນອກຈາກຫຼັກຊັບເພື່ອຄ້ຳປະກັນໃຫ້ແກ່ຜູ້ໄດ້ຮັບສຸດທ້າຍສຳລັບພັນທະຜູກພັນທີ່ຈ່າຍກະແສເງິນສົດ; ແລະ
- ບໍລິສັດຈະຕ້ອງສົ່ງກະແສເງິນສົດທີ່ຮວບຮວມໃນນາມຂອງຜູ້ໄດ້ຮັບສຸດທ້າຍໂດຍປາສະຈາກຄວາມລ່າຊ້າ. ນອກຈາກນີ້, ບໍລິສັດແມ່ນບໍ່ມີສິດທີ່ຈະລົງທຶນຄືນໃນກະແສເງິນສົດດັ່ງກ່າວ; ຍົກເວັ້ນສຳລັບການລົງທຶນໃນເງິນສົດ ຫຼື ທຽບເທົ່າເງິນສົດ ,ໃນລະຫວ່າງໄລຍະເວລາສະສາງອັນສັ້ນຈາກມື້ທີ່ຮວບຮວມເຖິງມື້ທີ່ຮຽກຮ້ອງໃຫ້ມີການມອບແກ່ຜູ້ໄດ້ຮັບສຸດທ້າຍ, ແລະ ດອກເບ້ຍທີ່ໄດ້ຮັບໃນຫຼັກຊັບດັ່ງກ່າວແມ່ນຖືກສົ່ງໃຫ້ຜູ້ໄດ້ຮັບສຸດທ້າຍ.

ການໂອນຈະສອດຄ່ອງກັບເງື່ອນໄຂການຢຸດຮັບຮູ້ ກໍ່ຕໍ່ເມື່ອ:

- ບໍລິສັດໄດ້ໂອນຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນດັ່ງກ່າວ;
  ຫຼື
- ບໍລິສັດບໍ່ໄດ້ໂອນຄວາມສ່ຽງ ຫຼື ຮັກສາຄວາມສ່ຽງທັງໝົດໄວ້ ແລະ ຜົນຕອບແທນຂອງຊັບສິນທັງໝົດ, ແຕ່ໄດ້ໂອນການຄວບຄຸມຊັບສິນດັ່ງກ່າວແລ້ວ.

ບໍລິສັດພິຈາລະນາວ່າ ການຄວບຄຸມຈະຖືກໂອນຖ້າຫາກຜູ້ຮັບໂອນມີຄວາມສາມາດໃນການຂາຍຊັບສິນໃຫ້ແກ່ບຸກຄົນທີສາມທີ່ບໍ່ກ່ຽວຂ້ອງກັນ ແລະ ສາມາດໃຊ້ຄວາມສາມາດດັ່ງກ່າວໄດ້ພຽງຝ່າຍດຽວ ແລະ ບໍ່ມີຂໍ້ຈຳກັດໃດໆກ່ຽວກັບການໂອນ.

ເມື່ອບໍລິສັດໄດ້ໂອນສິດໃນການຮັບເງິນສົດຈາກຊັບສິນການເງິນ ຫຼື ໄດ້ເຂົ້າຮ່ວມໃນຮູບແບບການຕິດພັນ, ແລະ ບໍ່ໄດ້ໂອນ ຫຼື ຍັງຄົງຮັກສາຄວາມສ່ຽງ ແລະ ຜົນຕອບແທນທັງໝົດຂອງຊັບສິນ ຫຼື ໄດ້ໂອນສິດໃນການຄວບຄຸມຊັບສິນ, ຊັບສິນຈະຖືກຮັບຮູ້ໃນເວລາທີ່ບໍລິສັດຍັງມີສ່ວນກ່ຽວຂ້ອງກັບຊັບສິນນັ້ນໆ. ໃນກໍລະນີນີ້ບໍລິສັດຍັງຮັບຮູ້ເປັນໜີ້ສິນທີ່ຕິດພັນ. ຊັບສິນທີ່ຖືກໂອນ ແລະ ໜີ້ສິນທີ່ຕິດພັນແມ່ນ ຖືກປະເມີນບົນພື້ນຖານທີ່ສະທ້ອນເຖິງສິດ ແລະ ພັນທະຂອງບໍລິສັດທີ່ມີຢູ່.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.8 ການຢຸດຮັບຮູ້ຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

5.8.2 ຊັບສິນທາງການເງິນ (ຕໍ່)

ການສືບຕໍ່ຂອງຮູບແບບຂອງການຄ້ຳປະກັນຕໍ່ຊັບສິນທີ່ໄດ້ໂອນ ແມ່ນຖືກຕີມູນຄ່າໃນລະດັບຕ່ຳກວ່າມູນຄ່າເດີມຂອງຊັບສິນ ແລະ ມູນຄ່າສູງສຸດຂອງການພິຈາລະນາວ່າ ບໍລິສັດມີຄວາມສາມາດໃນການຊຳລະໜີ້.

ຖ້າຫາກວ່າການສືບຕໍ່ຂອງຮູບແບບຂອງການສິດທີ່ໄດ້ຂຽນ ຫຼື ທາງເລືອກໃນການຊື້ (ຫຼື ທັງສອງ) ຕໍ່ຊັບສິນທີ່ໄດ້ໂອນ, ການສືບຕໍ່ແມ່ນຖືກຕີມູນຄ່າໃນມູນຄ່າທີ່ບໍລິສັດຈະຕ້ອງຈ່າຍເພື່ອຊື້ຄືນ. ໃນກໍລະນີທີ່ການສິດໃນການຊື້ໃນຊັບສິນທີ່ຖືກຕີມູນຄ່າເປັນມູນຄ່າຍຸດຕິທຳ, ຂອບເຂດຂອງການສືບຕໍ່ຂອງອົງກອນແມ່ນຖືກຈຳກັດໃນລະດັບຕ່ຳກວ່າມູນຄ່າຍຸດຕິທຳຂອງຊັບສິນທີ່ໄດ້ໂອນ ແລະ ການສິດລາຄາທີ່ໄດ້ໃຊ້.

5.8.3 ໜີ້ສິນທາງການເງິນ

ໜີ້ສິນທາງການເງິນຈະຖືກຢຸດຮັບຮູ້ໃນບັນຊີ ເມື່ອພັນທະຕ່ຳກັບໜີ້ສິນດັ່ງກ່າວໄດ້ສິ້ນສຸດ ຫຼື ໄດ້ມີການຍົກເລີກ ຫຼື ໝົດອາຍຸ. ເມື່ອໜີ້ສິນທາງການເງິນທີ່ມີຢູ່ຖືກແທນທີ່ດ້ວຍໜີ້ສິນອື່ນໆຈາກເຈົ້າໜີ້ຜູ້ເກົ່າໃນເງື່ອນໄຂທີ່ແຕກຕ່າງກັນ, ຫຼື ປັບປຸງເງື່ອນໄຂຂອງໜີ້ສິນທີ່ມີຢູ່ ເຊັ່ນ: ການປ່ຽນແປງ ຫຼື ການປັບປຸງຖືກປະຕິບັດເຊັ່ນດຽວກັບການສະສາງບັນຊີໜີ້ສິນເດີມອອກ ແລະ ຮັບຮູ້ໜີ້ສິນໃໝ່. ສ່ວນຜິດຕ່ຽງຂອງມູນຄ່າຕາມບັນຊີຂອງໜີ້ສິນເດີມ ແລະ ການພິຈາລະນາທີ່ໄດ້ຈ່າຍຈະຖືກຮັບຮູ້ໃນກຳໄລ ຫຼື ຂາດທຶນ.

5.8.4 ການຫັກລົບຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນ

ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນຖືກຫັກລົບກັນ ແລະ ມູນຄ່າສຸດທິແມ່ນລາຍງານໃນເອກະສານລາຍງານຖານະການເງິນ ຖ້າໃນປັດຈຸບັນມີສິດທິທາງກົດໝາຍທີ່ບັງຄັບໃຊ້ ເພື່ອຫັກລົບມູນຄ່າທີ່ຮັບຮູ້ໄດ້ ແລະ ມີຈຸດປະສົງທີ່ຈະຊຳລະບົນພື້ນຖານສຸດທິ, ເພື່ອຮັບຮູ້ຊັບສິນ ແລະ ຊຳລະໜີ້ສິນພ້ອມໆກັນ.

ຊັບສິນທາງການເງິນ ແລະ ໜີ້ສິນທາງການເງິນໂດຍທົ່ວໄປແມ່ນ ລາຍງານລວມທັງໝົດໃນເອກະສານລາຍງານຖານະການເງິນ ຍົກເວັ້ນເມື່ອມີເງື່ອນໄຂການຫັກລົບຕາມມາດຕະຖານການລາຍງານບັນຊີສາກົນ.

ເຄື່ອງມືທາງການເງິນອື່ນໆພຽງແຕ່ຖືກຫັກລົບ ແລະ ລາຍງານສຸດທິເມື່ອ, ນອກເໜືອຈາກມີສິດບັງຄັບໃຊ້ທາງກົດໝາຍທີ່ບໍ່ມີເງື່ອນໄຂທີ່ຈະຫັກລົບມູນຄ່າທີ່ຖືກຮັບຮູ້ ໂດຍບໍ່ໄດ້ຂຶ້ນກັບເຫດການໃນອະນາຄົດ ແລະ ບໍລິສັດຍັງຈຸດປະສົງທີ່ຈະຊຳລະບົນພື້ນຖານສຸດທິໃນທຸກສະພາບການຕໍ່ໄປນີ້:

- ທຸລະກິດປົກກະຕິ;
- ເຫດການຜິດນັດຊຳລະ;
- ເຫດການການລົ້ມລະລາຍ ຫຼື ການລົ້ມລະລາຍຂອງບໍລິສັດ ແລະ/ຫຼື ຄູ່ຄ້າຂອງຕົນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 ການເສື່ອມມູນຄ່າຂອງຊັບສິນທາງການເງິນ

5.9.1 ພາບລວມຂອງຫຼັກການໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ

ບໍລິສັດນຳໃຊ້ວິທີການຄິດໄລ່ໜີ້ເສຍການເຊົ່າຊື້ທີ່ເກີດຂຶ້ນກັບຂໍ້ມູນທີ່ເປັນການຄາດການລ່ວງໜ້າໃນວິທີການໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ. ບໍລິສັດໄດ້ບັນທຶກເງິນແຮສຳລັບໜີ້ເສຍທາງສິນເຊື່ອທີ່ຄາດວ່າຈະເກີດຂຶ້ນໃນທຸກສັນຍາການເຊົ່າຊື້ ແລະ ໜີ້ສິນຂອງຊັບສິນທາງການເງິນອື່ນໆ ທີ່ບໍ່ໄດ້ລະບຸໄວ້ໃນ FVTPL ໃນພາກສ່ວນນີ້ເອີ້ນວ່າ 'ເຄື່ອງມືທາງການເງິນ'.

ເງິນແຮຈາກໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ (ECL) ແມ່ນອີງຕາມການໜີ້ສິນຄາດວ່າຈະເສຍຕະຫຼອດອາຍຸຂອງຊັບສິນ (ຕະຫຼອດອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດ), ຍົກເວັ້ນວ່າບໍ່ມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງດ້ານສິນເຊື່ອນັບແຕ່ເລີ່ມຕົ້ນ, ເຊິ່ງໃນກໍລະນີນີ້, ເງິນແຮແມ່ນອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດໃນ 12 ເດືອນ ດັ່ງທີ່ໄດ້ລະບຸໃນບົດອະທິບາຍເລກທີ 5.9.2. ນະໂຍບາຍຂອງບໍລິສັດ ສຳລັບການກຳນົດຖ້າມີການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອແມ່ນໄດ້ອະທິບາຍໃນ ບົດອະທິບາຍເລກທີ 29.1.

ໜີ້ເສຍທີ່ຄາດວ່າຈະເກີດຂອງ 12 ເດືອນ ແມ່ນສ່ວນໜຶ່ງອາຍຸຂອງໜີ້ເສຍທີ່ຄາດວ່າຈະເກີດທີ່ໄດ້ສະແດງເຖິງໜີ້ເສຍທີ່ມີຜົນມາຈາກການຜິດນັດຊຳລະໃນເຄື່ອງມືທາງການເງິນທີ່ເປັນໄປໄດ້ພາຍໃນ 12 ເດືອນຫຼັງຈາກວັນທີລາຍງານ.

ທັງໜີ້ເສຍທີ່ຄາດວ່າຈະເກີດ ຕະຫຼອດອາຍຸ ແລະ ໜີ້ເສຍທີ່ຄາດວ່າຈະເກີດພາຍໃນ 12 ເດືອນ ແມ່ນຖືກຄິດໄລ່ບໍ່ວ່າຈະເປັນໜີ້ຕ້ອງຮັບສັນຍາເຊົ່າຊື້ຂອງບໍລິສັດທີ່ບໍ່ສາມາດຍອມຮັບໄດ້ໃນເອກະສານລາຍງານການເງິນຂອງບໍລິສັດ. ບໍລິສັດຈັດປະເພດໜີ້ຕ້ອງຮັບສັນຍາເຊົ່າຊື້ໃຫ້ລູກຄ້າອີງຕາມປະເພດຂອງຜະລິດຕະພັນ.

ບໍລິສັດໄດ້ສ້າງນະໂຍບາຍເພື່ອທີ່ຈະປະຕິບັດການປະເມີນ ໃນແຕ່ລະທ້າຍໄລຍະການລາຍງານ ວ່າຄວາມສ່ຽງສິນເຊື່ອຂອງເຄື່ອງມືທາງດ້ານການເງິນມີການເພີ່ມຂຶ້ນຢ່າງສຳຄັນ ຫຼື ບໍ່ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ, ໂດຍການພິຈາລະນາສ່ວນປ່ຽນແປງໃນຄວາມສ່ຽງຂອງການຜິດນັດຊຳລະທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມືທາງດ້ານການເງິນທີ່ເຫຼືອຢູ່. ເຊິ່ງໄດ້ອະທິບາຍລະອຽດເພີ່ມເຕີມໃນບົດອະທິບາຍເລກທີ 29.1.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.9.1 ພາບລວມຂອງຫຼັກການໜີ້ເສຍທີ່ຄາດວ່າຈະເກີດ (ຕໍ່)

ໂດຍອີງຕາມຂັ້ນຕອນທາງເທິງ, ບໍລິສັດໄດ້ຈັດກຸ່ມການເຊົ່າຊື້ເປັນ ຂັ້ນທີ 1, ຂັ້ນທີ 2 ແລະ ຂັ້ນທີ 3 ເຊິ່ງໄດ້ອະທິບາຍດັ່ງລຸ່ມນີ້:

- ຂັ້ນທີ 1 ເມື່ອການເຊົ່າຊື້ຖືກຮັບຮູ້ຄັ້ງທຳອິດ, ບໍລິສັດຮັບຮູ້ເງິນແຮອີງໃສ່ໜີ້ເສຍທີ່ຄາດວ່າຈະເກີດ ພາຍໃນ 12 ເດືອນ. ການເຊົ່າຊື້ຂັ້ນທີ 1 ຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ການເຊົ່າຊື້ໄດ້ຖືກຈັດບໍລິສັດຄືນໃໝ່ຈາກ ຂັ້ນທີ 2.

- ຂັ້ນທີ 2 ເມື່ອການເຊົ່າຊື້ໄດ້ສະແດງການເພີ່ມຂຶ້ນຢ່າງສຳຄັນໃນຄວາມສ່ຽງສິນເຊື່ອນັບຕັ້ງແຕ່ເລີ່ມປ່ອຍສິນເຊື່ອ, ບໍລິສັດບັນທຶກເງິນແຮສຳລັບ ECL ຕະຫຼອດອາຍຸ. ເງິນກູ້ ຂັ້ນທີ 2 ແມ່ນຍັງໄດ້ລວມເອົາສິ່ງທີ່ເອື້ອອຳນວຍຄວາມສ່ຽງສິນເຊື່ອໄດ້ປັບປຸງ ແລະ ການເຊົ່າຊື້ໄດ້ຖືກຈັດບໍລິສັດຄືນໃໝ່ຈາກ ຂັ້ນທີ 3.

- ຂັ້ນທີ 3 ການເຊົ່າຊື້ທີ່ຖືກພິຈາລະນາຄ່າເສື່ອມສິນເຊື່ອ (ດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍເລກທີ 29.1.). ບໍລິສັດບັນ ທຶກເງິນແຮຂອງໜີ້ເສຍທີ່ຄາດວ່າຈະເກີດຕະຫຼອດອາຍຸ.

ສຳລັບຊັບສິນທາງດ້ານການເງິນທີ່ບໍລິສັດບໍ່ມີການຄາດການທີ່ສົມເຫດສົມຜົນ ໃນການກູ້ຄືນບໍ່ວ່າຈະປັນມູນຄ່າຄົງຄ້າງທັງໝົດ ຫຼື ຕາມສັດສ່ວນ ສະນັ້ນ, ມູນຄ່າຕາມບັນຊີຂອງຊັບສິນທາງດ້ານການເງິນຈະຖືກຫຼຸດລົງ. ເຊິ່ງນີ້ເປັນການຢຸດຮັບຮູ້ຊັບສິນທາງດ້ານການເງິນ (ບາງສ່ວນ).

5.9.2 ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ

ບໍລິສັດຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດໂດຍອີງໃສ່ສະຖານະການຄວາມອາດຈະເປັນໄປໄດ້ແບບຖ່ວງນ້ຳໜັກ 3 ກໍລະນີ ເພື່ອຕີມູນຄ່າການຂາດແຄນເງິນສົດທີ່ຄາດການໄວ້, ອັດຕາສ່ວນຫຼຸດໂດຍປະມານຕໍ່ອັດຕາດອກເບ້ຍທີ່ແທ້ຈິງ. ການຂາດແຄນເງິນສົດແມ່ນສ່ວນຕ່າງລະຫວ່າງກະແສເງິນສົດທີ່ຄົບກຳນົດຕາມສັນຍາ ແລະ ກະແສເງິນສົດທີ່ບໍລິສັດຄາດວ່າຈະໄດ້ຮັບ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 *ການເສື່ອມມູນຄ່າຂອງຊັບສິນທາງການເງິນ* (ຕໍ່)

5.9.2 *ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ* (ຕໍ່)

ກົນໄກຂອງການຄຳນວນ ໜີ້ເສຍທີ່ຄາດວ່າຈະເກີດ ແມ່ນຖືກສະແດງຢູ່ດ້ານລຸ່ມ ແລະ ມີອົງປະກອບທີ່ສຳຄັນດັ່ງລຸ່ມນີ້:

- ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ ("PD") — ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນການຄາດຄະເນຄວາມອາດຈະເປັນໄປໄດ້ຂອງການຜິດນັດຊຳລະໃນຕະຫຼອດຊ່ວງເວລາທີ່ກຳນົດ. ການຜິດນັດຊຳລະອາດຈະເກີດຂຶ້ນໃນຊ່ວງເວລາທີ່ແນ່ນອນໃດໜຶ່ງຕະຫຼອດໄລຍະການປະເມີນ, ຖ້າຫາກວ່າຄວາມສ່ຽງທີ່ເອື້ອອຳນວຍບໍ່ໄດ້ຖືກຢຸດຮັບຮູ້ໃນກ່ອນໜ້າ ແລະ ຍັງມີຢູ່ໃນກຸ່ມຫຼັກຊັບ. ແນວຄວາມຄິດຂອງຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.
- ຍອດໜີ້ເມື່ອຜິດນັດຊຳລະ ("EAD") — ຍອດໜີ້ເມື່ອຜິດນັດຊຳລະ ແມ່ນການປະມານການຍອດໜີ້ໃນວັນທີຜິດນັດຊຳລະໃນອະນາຄົດ, ໂດຍພິຈາລະນາສ່ວນປ່ຽນແປງທີ່ຄາດການໄວ້ໃນຍອດໜີ້ຫຼັງຈາກມື້ລາຍງານ ເຊິ່ງລວມເອົາການຊຳລະຄືນທັງເງິນຕົ້ນ ແລະ ດອກເບ້ຍ, ບໍ່ວ່າຈະຕາມກຳນົດໃນສັນຍາ ຫຼື ບໍ່ກໍຕາມ, ການເປີກຖອນທີ່ຄາດການໄວ້, ແລະ ດອກເບ້ຍຄ້າງຈ່າຍຈາກການຜິດນັດຊຳລະ. EAD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.
- ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ ("LGD") — ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະແມ່ນການປະມານການຄວາມເສຍຫາຍທີ່ມາຈາກກໍລະນີທີ່ການຜິດນັດຊຳລະເກີດຂຶ້ນໃນເວລາທີ່ກຳນົດ. ເຊິ່ງຂຶ້ນກັບສ່ວນຕ່າງລະຫວ່າງກະແສເງິນສົດຕາມສັນຍາທີ່ຄົບກຳນົດ ແລະ ບັນດາມູນຄ່າຕ່າງໆ ທີ່ຜູ້ໃຫ້ກູ້ຍືມຄາດວ່າຈະໄດ້ຮັບ, ເຊິ່ງລວມຈາກການຮັບຮູ້ບັນດາຫຼັກຊັບຄ້ຳປະກັນຕ່າງໆ. ໂດຍປົກກະຕິ LGD ແມ່ນຖືກສະແດງເປັນອັດຕາສ່ວນຮ້ອຍຂອງ EAD. LGD ແມ່ນຖືກອະທິບາຍເພີ່ມເຕີມໃນບົດອະທິບາຍເລກທີ 29.1.

ເມື່ອມີການຄາດຄະເນ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ, ບໍລິສັດຈະຄິດໄລ່ສະເລ່ຍຖ່ວງນ້ຳໜັກຂອງການຄາດຄະເນຕາມເສດຖະກິດມະຫາພາກຈາກແຫຼ່ງຂໍ້ມູນພາຍນອກ. ຈາກນັ້ນ, ບໍລິສັດໄດ້ພິຈາລະນາຜົນກະທົບຂອງປັດໃຈເສດຖະກິດໄປສູ່ PD ແບບວິງຈອນໂດຍນຳໃຊ້ດຸນພິນິດຂອງຜູ້ຊ່ຽວຊານ.

ລາຍຈ່າຍຄ່າເສື່ອມມູນຄ່າ ແລະ ການສູນເສຍຈະຖືກບັນທຶກ ແລະ ສະເໜີແຍກຕ່າງຫາກປັດໃຈຈາກການດັດແກ້ກຳໄລ ຫຼື ຂາດທຶນທີ່ເກີດຈາກການດັດແກ້ມູນຄ່າຕາມບັນຊີລວມຂອງຊັບສິນທາງການເງິນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.9 ການເສື່ອມມູນຄ່າຂອງຊັບສິນທາງການເງິນ (ຕໍ່)

5.9.2 ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ (ຕໍ່)

ກົນໄກຂອງວິທີຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດ ແມ່ນຖືກສະຫຼຸບດັ່ງລຸ່ມນີ້:

- ຂັ້ນທີ 1 ໜີ້ເສຍທີ່ຄາດວ່າຈະເກີດ 12 ເດືອນແມ່ນຖືກຄິດໄລ່ເປັນສ່ວນໜຶ່ງຂອງ ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ ຕະຫຼອດອາຍຸຂອງຊັບສິນທີ່ສະແດງເຖິງ ໜີ້ເສຍທີ່ຄາດວ່າຈະເກີດ ທີ່ມີຜົນມາຈາກເຫດການການຜິດນັດຊຳລະໃນເຄື່ອງມືທາງດ້ານການເງິນທີ່ເປັນໄປໄດ້ໃນ 12 ເດືອນຫຼັງຈາກມື້ລາຍງານ. ບໍລິສັດຄຳນວນເງິນແຮ ໜີ້ເສຍທີ່ຄາດວ່າຈະເກີດ 12 ເດືອນໂດຍອີງໃສ່ການຄາດການການຜິດນັດຊຳລະທີ່ເກີດຂຶ້ນໃນ 12 ເດືອນຫຼັງຈາກມື້ລາຍງານ. ຄວາມອາດຈະເປັນໄປໄດ້ໃນການຜິດນັດຊຳລະ 12 ເດືອນທີ່ຄາດການໄວ້ນີ້ແມ່ນຖືກນຳໃຊ້ເພື່ອຄາດຄະເນ EAD ແລະ ຄູນກັບ LGD ທີ່ຄາດການໄວ້ ແລະ ຫຼຸດໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ. ການຄຳນວນນີ້ແມ່ນຖືກສ້າງຂຶ້ນສຳລັບແຕ່ລະກໍລະນີ ທັງ 3 ກໍລະນີດັ່ງທີ່ໄດ້ອະທິບາຍຂ້າງເທິງ.
- ຂັ້ນທີ 2 ເມື່ອການເຊົ່າຊື້ໄດ້ສະແດງໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມສ່ຽງສິນເຊື່ອຢ່າງມີຄວາມສຳຄັນຕັ້ງແຕ່ເລີ່ມຕົ້ນ, ບໍລິສັດບັນທຶກເງິນແຮໜີ້ເສຍທີ່ຄາດວ່າຈະເກີດຕະຫຼອດອາຍຸຂອງຊັບສິນ. ກົນໄກນີ້ແມ່ນຄ້າຍຄືກັບທີ່ໄດ້ອະທິບາຍຂ້າງເທິງທີ່ລວມເຖິງການນຳໃຊ້ຫຼາຍກໍລະນີ ແຕ່ວ່າ PDs ແລະ LGDs ແມ່ນຖືກຄາດຄະເນຕະຫຼອດອາຍຸຂອງເຄື່ອງມື. ການຂາດແຄນເງິນສົດທີ່ຄາດການໄວ້ແມ່ນຖືກຫຼຸດລ່ຳໂດຍອັດຕາດອກເບ້ຍທີ່ແທ້ຈິງເດີມໂດຍປະມານ.
- ຂັ້ນທີ 3 ສຳລັບການເຊົ່າຊື້ທີ່ພິຈາລະນາວ່າມີການເສື່ອມມູນຄ່າສິນເຊື່ອ, ບໍລິສັດຮັບຮູ້ລາຍຈ່າຍໜີ້ເສຍທີ່ຄາດການໄວ້ຕະຫຼອດອາຍຸສຳລັບເງິນກູ້ເງິ່ນີ. ວິທີນີ້ແມ່ນຄ້າຍຄືກັບ ຂັ້ນທີ 2 ພ້ອມກັບ PD ທີ່ຕັ້ງໄວ້ທີ່ 100%.

5.9.3 ຂໍ້ມູນທີ່ເປັນການຄາດການລ່ວງໜ້າ

ໃນແບບຈຳລອງໜີ້ເສຍທີ່ຄາດວ່າຈະເກີດ, ບໍລິສັດໄດ້ນຳໃຊ້ຂໍ້ມູນທີ່ເປັນການຄາດການລ່ວງໜ້າເປັນຂໍ້ມູນທາງເສດຖະກິດເຊັ່ນ:

- ອັດຕາການເຕີບໂຕຂອງ GDP
- ອັດຕາການແລກປ່ຽນເງິນຕາຕ່າງປະເທດ

ຂໍ້ມູນ ແລະ ແບບຈຳລອງທີ່ໄດ້ນຳໃຊ້ໃນການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນອາດຈະບໍ່ກຳໄດ້ລັກສະນະພິເສດທັງໝົດຂອງຕະຫຼາດໃນວັນທີຂອງເອກະສານລາຍງານທາງດ້ານການເງິນໄດ້ຕະຫຼອດ. ເພື່ອທີ່ຈະສະທ້ອນໃຫ້ເຫັນສິ່ງເຫຼົ່ານີ້, ຈຶ່ງມີການດັດແກ້ແບບຄຸນນະພາບ ຫຼື ການທັບຊ້ອນ ເຊິ່ງເປັນການດັດແກ້ຊົ່ວຄາວເມື່ອສ່ວນຕ່າງເຫຼົ່ານັ້ນຖືວ່າມີຜົນຢ່າງສຳຄັນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.10 ການລ້າງອອກ

ຊັບສິນທາງດ້ານການເງິນຖືກລ້າງອອກ ເມື່ອບໍລິສັດບໍ່ມີຄວາມຄາດຄະເນທີ່ສົມເຫດສົມຜົນທີ່ຈະກູ້ຄືນຊັບສິນທາງດ້ານການເງິນ. ຖ້າຈຳນວນເງິນທີ່ຈະຖືກລ້າງອອກແມ່ນຫຼາຍກ່ວາເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍສະສົມ, ໃນເບື້ອງຕົ້ນໃຫ້ຖືສ່ວນຕ່າງເປັນສ່ວນເພີ່ມຈາກຄ່າເສື່ອມທີ່ນຳໃຊ້ກັບມູນຄ່າລວມຕາມບັນຊີລວມ. ທຸກໆການກູ້ຄືນທີ່ເກີດຕາມຫຼັງແມ່ນໃຫ້ລວມເຂົ້າກັບລາຍຮັບອື່ນໆ.

5.11 ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດທີ່ກ່າວເຖິງໃນໃບລາຍງານກະແສເງິນສົດປະກອບມີ ເງິນຝາກຢູ່ທະນາຄານທີ່ມີ ກຳນົດ 3 ເດືອນ ຫຼື ຕ່ຳກວ່ານັ້ນ ແລະ ເງິນສົດໃນຄັງ.

5.12 ຊັບສິນບັດ ແລະ ອຸປະກອນ

ຊັບສິນບັດ ແລະ ອຸປະກອນ ແມ່ນໄດ້ລາຍງານ ຕາມຕົ້ນທຶນຂອງການບໍລິການມື້ຕໍ່ມື້ລົບຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເສື່ອມສະສົມ. ການປ່ຽນແປງຂອງອາຍຸການນຳໃຊ້ ແມ່ນໄດ້ລົງບັນຊີຕາມການປ່ຽນແປງຂອງໄລຍະການເສື່ອມຄ່າ ຫຼື ວິທີຫັກຄ່າເສື່ອມຕາມຄວາມເໝາະສົມ ແລະ ເຮັດໃຫ້ມີການປ່ຽນແປງຕາມການຄາດຄະເນທາງການບັນຊີ.

ຄ່າຫຼຸ້ຍຫ້ຽນຖືກຄິດໄລ່ອີງຕາມພື້ນຖານການຄິດໄລ່ຄ່າຫຼຸ້ຍຫ້ຽນແບບສະເໝີຕົ້ວ ເພື່ອຫຼຸດຕົ້ນທຶນຂອງຊັບສິນບັດ ແລະ ອຸປະກອນໃຫ້ຖືກຕາມມູນຄ່າທີ່ຍັງເຫຼືອຕົວຈິງຕາມອາຍຸການໃຊ້ງານ.

ອາຍຸການນຳໃຊ້ທີ່ໄດ້ຄາດຄະເນແມ່ນມີດັ່ງລຸ່ມນີ້:

ອຸປະກອນຄອມພິວເຕີ	20%
ເຟີນີເຈີ ແລະ ສິ່ງຕິດຕັ້ງ	20%
ພາຫະນະ	20%

ຊັບສິນ ແລະ ອຸປະກອນ ຈະບໍ່ຖືກຮັບຮູ້ເມື່ອມີການສະສາງອອກ ຫຼື ເມື່ອເຫັນວ່າບໍ່ມີຜົນປະໂຫຍດຕໍ່ທຸລະກິດໃນອະນາຄົດຈາກການນຳໃຊ້ຊັບສິນບັດ ແລະ ອຸປະກອນດັ່ງກ່າວ. ກຳໄລ ຫຼື ຂາດທຶນທີ່ເກີດຈາກການສະສາງຊັບສິນບັດ (ຄິດໄລ່ໄດ້ລະຫວ່າງມູນຄ່າສະສາງອອກ ແລະ ມູນຄ່າຍັງເຫຼືອຂອງຊັບສິນບັດ) ແມ່ນຖືກຮັບຮູ້ເປັນ "ລາຍຮັບອື່ນໆຈາກການດຳເນີນງານ" ໃນໃບລາຍງານຜົນກຳໄລ ຫຼື ຂາດທຶນຂອງປີທີ່ຊັບສິນບັດໄດ້ຖືກສະສາງອອກ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.13 ການເຊົ່າ

ບໍລິສັດປະເມີນສັນຍາໃນເບື້ອງຕົ້ນວ່າ ເປັນສັນຍາເຊົ່າ ຫຼື ປະກອບດ້ວຍການເຊົ່າ, ຖ້າສັນຍາສະແດງສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ໄດ້ລະບຸໄວ້ໃນໄລຍະເວລາໃດໜຶ່ງໂດຍການແລກປ່ຽນເພື່ອພິຈາລະນາ.

5.13.1 ບໍລິສັດໃນຖານະເປັນຜູ້ເຊົ່າ

ບໍລິສັດນຳໃຊ້ວິທີການຮັບຮູ້ ແລະ ວັດແທກແບບດ່ຽວ ສຳລັບສັນຍາເຊົ່າທັງໝົດ ຍົກເວັ້ນການເຊົ່າໄລຍະສັ້ນ ແລະ ການເຊົ່າຊັບສິນທີ່ມີມູນຄ່າຕ່ຳ. ບໍລິສັດຮັບຮູ້ໜີ້ສິນຕາມສັນຍາເຊົ່າເພື່ອດຳເນີນການຊຳລະຄ່າເຊົ່າ ແລະ ສິດນຳໃຊ້ຊັບສິນທີ່ກຳນົດການນຳໃຊ້ຊັບສິນທີ່ກ່ຽວຂ້ອງ.

ສິດນຳໃຊ້ຊັບສິນ

ບໍລິສັດຮັບຮູ້ສິດນຳໃຊ້ຊັບສິນໃນວັນທີເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ, ວັນທີທີ່ຊັບສິນທີ່ກ່ຽວຂ້ອງສາມາດນຳໃຊ້ໄດ້). ສິດນຳຊັບສິນແມ່ນຖືກວັດແທກເປັນຕົ້ນທຶນ, ເຊິ່ງຈະມີການຫຼຸດລົງດ້ວຍ ຄ່າຫຼ້ຽຫ່ຽນສະສົມ ແລະ ຄ່າເສື່ອມມູນຄ່າ ແລະ ດັດແກ້ເພື່ອປະເມີນຄືນໜີ້ສິນການເຊົ່າ. ຕົ້ນທຶນສິດນຳໃຊ້ຊັບສິນລວມມີ ມູນຄ່າໜີ້ສິນທີ່ຖືກຮັບຮູ້, ຄ່າໃຊ້ຈ່າຍໂດຍກົງໃນເບື້ອງຕົ້ນທີ່ເກີດຂຶ້ນ, ແລະ ການຊຳລະຄ່າເຊົ່າ ນະ ຫຼື ກ່ອນວັນທີເລີ່ມຕົ້ນສັນຍາໂດຍໄດ້ຮັບເງື່ອນໄຂກະຕຸ້ນຈາກການເຊົ່າທີ່ໜ້ອຍກວ່າ. ສິດການນຳໃຊ້ຊັບສິນແມ່ນມີການຫຼ້ຽຫ່ຽນໂດຍພື້ນຖານການຄິດໄລ່ແບບສະໝ່ຳສະເໝີຕົວໃນໄລຍະສັນຍາເຊົ່າ.

ໜີ້ສິນຕາມສັນຍາເຊົ່າ

ນະວັນທີເລີ່ມຕົ້ນຂອງການເຊົ່າ, ບໍລິສັດໄດ້ຮັບຮູ້ໜີ້ສິນການເຊົ່າທີ່ໄດ້ວັດແທກເປັນໃນມູນຄ່າປັດຈຸບັນຂອງການຊຳລະຄ່າເຊົ່າ ທີ່ຈະເກີດຂຶ້ນໃນໄລຍະສັນຍາເຊົ່າ. ການຊຳລະຄ່າເຊົ່າລວມມີການຈ່າຍແບບຄົງທີ່ (ບໍ່ມີເງື່ອນໄຂກະຕຸ້ນຈາກການເຊົ່າທີ່ຈະໄດ້ຮັບ). ການຊຳລະຄ່າເຊົ່າແບບບໍ່ຄົງທີ່ ທີ່ຂຶ້ນກັບດັດສະນີ ຫຼື ອັດຕາ, ແລະ ຈຳນວນທີ່ຄາດວ່າຈະຈ່າຍພາຍໃຕ້ການຄ້ຳປະກັນມູນຄ່າທີ່ເໜືອ. ການຊຳລະຄ່າເຊົ່າຍັງລວມມີ ລາຄາທີ່ນຳໃຊ້ຂອງທາງເລືອກການຊື້ຢ່າງສົມເຫດສົມຜົນທີ່ແນ່ນອນ ທີ່ຈະປະຕິບັດໂດຍ ບໍລິສັດ ແລະ ການຊຳລະຄ່າປັບໃໝສຳລັບການຍຸຕິການເຊົ່າ, ຖ້າວ່າສັນຍາເຊົ່າສະທ້ອນໃຫ້ເຫັນການໃຊ້ສິດໃນການຍຸຕິ. ການຊຳລະຄ່າເຊົ່າທີ່ບໍ່ຄົງທີ່ໂດຍບໍ່ຂຶ້ນກັບດັດສະນີ ຫຼື ອັດຕາ ແມ່ນຖືກຮັບຮູ້ເປັນລາຍຈ່າຍໃນໄລຍະເວລາທີ່ມີເຫດການ ຫຼື ເງື່ອນໄຂທີ່ກໍ່ໃຫ້ເກີດການຊຳລະເກີດຂຶ້ນ.

5.14 *ການເສື່ອມມູນຄ່າຂອງຊັບສິນທີ່ບໍ່ແມ່ນທາງດ້ານການເງິນ*

ບໍລິສັດປະເມີນນະມື້ສ້າງປົດລາຍງານ ວ່າມີຊັບສິນໃດທີ່ມີການເສື່ອມຄ່າ ຫຼື ບໍ່. ຖ້າມີ ຫຼື ເມື່ອເຮັດການທົດສອບການເສື່ອມຄ່າຊັບສິນປະຈຳປີຕາມທີ່ໄດ້ກຳນົດ ບໍລິສັດປະເມີນຈຳນວນເງິນທີ່ເກັບກູ້ຄືນໄດ້ຂອງຊັບສິນ. ຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ຂອງຊັບສິນ ແມ່ນໄດ້ຈາກມູນຄ່າທີ່ສູງກວ່າລະຫວ່າງ ມູນຄ່າຍຸດຕິທຳຂອງຊັບສິນ ຫຼື ມູນຄ່າຍຸດຕິທຳຂອງຫົວໜ່ວຍຊັບສິນທີ່ກໍ່ໃຫ້ເກີດເງິນສົດ (CGU) ລົບໃຫ້ຕົ້ນທຶນຂາຍ ແລະ ມູນຄ່າທີ່ຖືກນຳໃຊ້. ເມື່ອຍອດຍົກມາ ຂອງຊັບສິນ ຫຼື ມູນຄ່າຂອງ CGU ຫຼາຍກວ່າມູນຄ່າທີ່ສາມາດເກັບກູ້ຄືນໄດ້, ຊັບສິນຈະຖືວ່າເສື່ອມຄ່າ ແລະ ຈະຫຼຸດມູນຄ່າລົງໃຫ້ເທົ່າກັບມູນຄ່າທີ່ສາມາດເກັບກູ້ຄືນໄດ້.

ໃນການປະເມີນມູນຄ່າທີ່ຖືກນຳໃຊ້, ກະແສເງິນສົດທີ່ຖືກປະເມີນໃນອະນາຄົດແມ່ນຫຼຸດລົງ ເພື່ອໃຫ້ໄດ້ມູນຄ່າປັດຈຸບັນ ໂດຍການນຳໃຊ້ອັດຕາສ່ວນຫຼຸດກ່ອນອາກອນ ທີ່ສະທ້ອນຕໍ່ການປະເມີນມູນຄ່າຕາມທ້ອງຕະຫຼາດໃນປັດຈຸບັນຂອງເງິນ ແລະ ຄວາມສ່ຽງສະເພາະຂອງຊັບສິນ. ໃນການກຳນົດມູນຄ່າຍຸດຕິທຳລົບໃຫ້ຕົ້ນທຶນຂາຍ, ແບບວິທີການຕີມູນຄ່າທີ່ເໝາະສົມຈະຖືກນຳໃຊ້. ການຄິດໄລ່ຈະຖືກປະຕິບັດໂດຍການຕີມູນຄ່າທີ່ຫຼາກຫຼາຍ, ລາຄາຮຸ້ນທີ່ສະເໜີຂາຍສຳລັບບໍລິສັດທີ່ຂາຍທົ່ວໄປ ຫຼື ຕົວຊີ້ບອກມູນຄ່າຍຸດຕິທຳອື່ນໆ.

ສຳລັບຊັບສິນທີ່ບໍ່ລວມຄ່ານິຍົມ, ການປະເມີນຈະຖືກເຮັດໃນມື້ສ້າງປົດລາຍງານ ເພື່ອເບິ່ງວ່າອາດຈະມີຕົວຊີ້ບອກເຖິງການເສື່ອມຄ່າຂອງຊັບສິນທີ່ຜ່ານມານັ້ນຈະບໍ່ເກີດຂຶ້ນອີກ ຫຼື ອາດຫຼຸດລົງ. ຖ້າຫາກມີຕົວຊີ້ບອກ, ບໍລິສັດຈະຄາດຄະເນ ຈຳນວນເງິນທີ່ສາມາດຮຽກເກັບຄືນມາໄດ້ຂອງຊັບສິນ. ການເສື່ອມຄ່າຜ່ານມາຈະສາມາດຮຽກເກັບຄືນມາໄດ້ກໍ່ຕໍ່ເມື່ອມັນ ມີການປ່ຽນແປງໃນການກຳນົດມູນຄ່າທີ່ສາມາດເກັບຄືນໄດ້ຂອງຊັບສິນ ນັບຕັ້ງແຕ່ການເສື່ອມຄ່າຄັ້ງສຸດທ້າຍໄດ້ຖືກຮັບຮູ້. ການປົ້ນຄືນແມ່ນຖືກກຳນົດຂຶ້ນ. ສະນັ້ນ, ຍອດຍົກມາຂອງຊັບສິນແມ່ນບໍ່ເກີນມູນຄ່າທີ່ສາມາດເກັບຄືນໄດ້ ຫຼື ບໍ່ເກີນຍອດ ຍົກມາທີ່ຖືກກຳນົດລົບໃຫ້ຄ່າຫລຸ້ຍຫ້ຽນ, ບໍ່ມີຄ່າເສື່ອມຂອງຊັບສິນໃນປີຜ່ານມາ. ການປົ້ນຄືນແມ່ນຖືກຮັບຮູ້ໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ.

5.15 *ຜົນປະໂຫຍດຂອງພະນັກງານ*

ຜົນປະໂຫຍດພາຍຫຼັງອອກການ

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ໃນເວລາທີ່ພະນັກງານອອກບຳນານຂອງບໍລິສັດ ໂດຍກົມກອງທຶນສະຫວັດດີການສັງຄົມທີ່ຂຶ້ນກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ບໍລິສັດຕ້ອງໄດ້ປະກອບສ່ວນເຂົ້າໃນຜົນປະໂຫຍດພະນັກງານຫຼັງອອກການ ໂດຍການຈ່າຍຄ່າເບ້ຍປະກັນສັງຄົມໃຫ້ແກ່ຕົວແທນປະກັນສັງຄົມໃນອັດຕາ 6% ຂອງເງິນເດືອນພື້ນຖານຂອງພະນັກງານໃນແຕ່ລະເດືອນ, ບໍລິສັດບໍ່ມີພັນທະອື່ນໆທີ່ກ່ຽວຂ້ອງກັບຜົນປະໂຫຍດພາຍຫຼັງອອກການຂອງພະນັກງານ.

ຜົນປະໂຫຍດໃນການຍົກເລີກສັນຍາຈ້າງງານ

ອີງຕາມມາດຕາ 82 ຂອງກົດໝາຍແຮງງານສະບັບປັບປຸງ ເລກທີ 43/ສພຊ ອອກໂດຍປະທານປະເທດແຫ່ງ ສປປ ລາວ ລົງວັນທີ 28 ມັງກອນ 2014, ບໍລິສັດມີພັນທະຈ່າຍຊົດເຊີຍໃຫ້ແກ່ພະນັກງານຜູ້ທີ່ລາອອກອີງຕາມເງື່ອນໄຂລຸ່ມນີ້:

- ກໍລະນີພະນັກງານຂາດທັກສະຄວາມຊຳນິຊຳນານ ຫຼື ມີສຸຂະພາບບໍ່ແຂງແຮງ ແລະ ບໍ່ສາມາດສືບຕໍ່ເຮັດວຽກໄດ້;
- ກໍລະນີບໍລິສັດພິຈາລະນາວ່າຈຳເປັນຕ້ອງຫຼຸດພະນັກງານ ເພື່ອປັບປຸງການເຮັດວຽກພາຍໃນອົງກອນ.

ສຳລັບການຍົກເລີກສັນຍາຈ້າງງານໃນຂົງເຂດທີ່ໄດ້ກ່າວມາຂ້າງເທິງນັ້ນ, ນາຍຈ້າງຕ້ອງຈ່າຍເງິນເບ້ຍລ້ຽງໃຫ້ພະນັກງານ ໂດຍອີງໃສ່ພື້ນຖານການຄິດໄລ່ 10% ຂອງເງິນເດືອນພື້ນຖານ ເດືອນສຸດທ້າຍຄູນໃຫ້ຈຳນວນເດືອນທີ່ເຮັດວຽກກັບບໍລິສັດ. ໃນວັນທີ 30 ມິຖຸນາ 2024, ບໍ່ມີພະນັກງານບໍລິສັດຖືກຢຸດຈ້າງຕາມເງື່ອນໄຂທີ່ລະບຸໄວ້ຂ້າງເທິງ. ດັ່ງນັ້ນ ບໍລິສັດບໍ່ໄດ້ຫັກຄັງແຮສຳລັບການຍົກເລີກການຈ້າງດັ່ງກ່າວໃນເອກະສານລາຍງານການເງິນ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.16 ເງິນແຮ

ເງິນແຮຈະຖືກຮັບຮູ້ກໍ່ຕໍ່ເມື່ອບໍລິສັດມີພັນທະ (ທາງດ້ານກົດໝາຍ ຫຼື ທາງປາລິຍາຍ) ເນື່ອງມາຈາກເຫດການທີ່ຜ່ານມາ ແລະ ມີຄວາມເປັນໄປໄດ້ວ່າຈະມີລາຍຈ່າຍ ເພື່ອຊຳລະສະສາງໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ມູນຄ່າຄາດຄະເນດັ່ງກ່າວຕ້ອງເຊື່ອຖືໄດ້. ໃນເວລາທີ່ຜົນກະທົບຂອງມູນຄ່າເງິນເວລາ, ບໍລິສັດກຳນົດລະດັບເງິນແຮດ້ວຍວິທີຄິດໄລ່ອັດຕາສ່ວນຫຼຸດກະແສເງິນສົດທີ່ຄາດວ່າຈະໄດ້ຮັບ ໂດຍອັດຕາກ່ອນອາກອນ ເຊິ່ງແມ່ນອັດຕາການປັດຈຸບັນທີ່ກຳນົດໄວ້ສະເພາະກັບໜີ້ສິນ. ລາຍຈ່າຍທີ່ກ່ຽວຂ້ອງກັບຄັງແຮຖືກລາຍງານໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ ພາຍຫຼັງໄດ້ຮັບເງິນຄືນ.

5.17 ອາກອນກຳໄລ

ອາກອນພາຍໃນປີ

ຊັບສິນ ແລະ ໜີ້ສິນອາກອນພາຍໃນປີ ສຳລັບປີປັດຈຸບັນ ແລະ ປີກ່ອນ ແມ່ນຖືກຕີມູນຄ່າຕາມຈຳນວນທີ່ຄາດວ່າຈະເກັບ ຄືນ ຫຼື ຈ່າຍໃຫ້ກົມສ່ວຍສາອາກອນ. ອັດຕາອາກອນ ແລະ ກົດໝາຍວ່າດ້ວຍສ່ວຍສາອາກອນທີ່ຖືກນຳໃຊ້ຄິດໄລ່ອາກອນແມ່ນມີຜົນສັກສິດນຳໃຊ້ໃນມື້ສ້າງໃບລາຍງານຖານະການເງິນ ພາຍໃນປະເທດທີ່ບໍລິສັດດຳເນີນທຸລະກິດ ແລະ ແຍກລາຍຮັບທີ່ຕ້ອງເສຍອາກອນ.

ອາກອນລາຍໄດ້ພາຍໃນປີທີ່ກ່ຽວຂ້ອງກັບລາຍການທີ່ບັນທຶກໃນບັນຊີທຶນແມ່ນຖືກຮັບຮູ້ໃນທຶນເຈົ້າຂອງ ແລະ ບໍ່ໄດ້ມີການບັນທຶກໃນບັນຊີກຳໄລ ຫຼື ຂາດທຶນ, ຄະນະບໍລິຫານໄດ້ມີການປະເມີນສະຖານະການປະຕິບັດອາກອນເປັນແຕ່ລະໄລຍະໂດຍອີງຕາມກົດລະບຽບທາງດ້ານອາກອນ ເພື່ອການຕີລາຄາຄືນ ແລະ ສ້າງຄັງແຮໃນເວລາທີ່ເໝາະສົມ.

ອາກອນລໍຖ້າສະສາງ

ອາກອນລໍຖ້າສະສາງ ແມ່ນຖືກຄິດໄລ່ ຈາກສ່ວນຜິດຕ່ຽງຊົ່ວຄາວ ຕາມມື້ທີ່ອອກບົດລາຍງານ ລະຫວ່າງຊັບສິນ ແລະ ໜີ້ສິນອາກອນ ແລະ ຍອດຍົກມາສຳລັບການລາຍງານການເງິນ. ໜີ້ຕ້ອງສົ່ງອາກອນລໍຖ້າສະສາງແມ່ນຖືກຮັບຮູ້ເປັນສ່ວນຕ່າງອາກອນຊົ່ວຄາວ, ຍົກເວັ້ນເມື່ອໜີ້ສິນອາກອນລໍຖ້າສະສາງເກີດຂຶ້ນຈາກການຮັບຮູ້ເບື້ອງຕົ້ນຂອງຊັບສິນ ຫຼື ໜີ້ສິນ ໃນການເຄື່ອນໄຫວທີ່ບໍ່ແມ່ນການລວມກິດຈະການ ແລະ ໃນເວລານັ້ນການເຄື່ອນໄຫວບໍ່ມີຜົນກະທົບຕໍ່ກຳໄລທາງດ້ານບັນຊີ ຫຼື ກຳໄລ ແລະ ຂາດທຶນທີ່ຖືກອາກອນ.

ຍອດຍົກມາຂອງໜີ້ຕ້ອງຮັບທາງອາກອນ ແມ່ນຖືກກວດກາຄືນໃນມື້ສ້າງບົດລາຍງານ ແລະ ຫຼຸດລົງ ຖ້າມີຄວາມເປັນໄປໄດ້ວ່າຈະບໍ່ມີກຳໄລທີ່ຖືກເສຍອາກອນທີ່ອະນຸຍາດໃຫ້ ຫຼື ພາກສ່ວນໜຶ່ງຂອງໜີ້ ຕ້ອງຮັບອາກອນຈະຖືກອະນຸຍາດໃຫ້ຫັກ. ໜີ້ຕ້ອງຮັບອາກອນທີ່ບໍ່ຖືກຮັບຮູ້ ແມ່ນຖືກປະເມີນຄືນໃນມື້ກະກຽມບົດລາຍງານ ແລະ ຖືກຮັບຮູ້ເມື່ອມີຄວາມເປັນໄປໄດ້ວ່າກຳໄລທີ່ຖືກເສຍອາກອນໃນອະນາຄົດ ຈະອະນຸຍາດໃຫ້ໜີ້ຕ້ອງຮັບອາກອນ ສາມາດຫັກອອກໄດ້.

ໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າສະສາງແມ່ນຖືກໄລ່ລຽງຕາມອັດຕາອາກອນທີ່ຄາດວ່າຈະນຳໄປໃຊ້ ພາຍໃນໄລຍະເມື່ອຊັບສິນຖືກຮັບຮູ້ມູນຄ່າຕົວຈິງ ຫຼື ໜີ້ສິນຖືກສະສາງ ອີງຕາມອັດຕາອາກອນ (ແລະ ກົດໝາຍສ່ວຍສາອາກອນ) ທີ່ໄດ້ປະກາດໃຊ້ນະມື້ລາຍງານ.

5. ສະຫຼຸບກ່ຽວກັບນະໂຍບາຍດ້ານການບັນຊີທີ່ສຳຄັນ (ຕໍ່)

5.17 ອາກອນກຳໄລ (ຕໍ່)

ອາກອນລໍຖ້າສະສາງ (ຕໍ່)

ອາກອນພາຍໃນປີ ແລະ ອາກອນລໍຖ້າສະສາງຈະຖືກຮັບຮູ້ຜົນປະໂຫຍດທາງອາກອນ ຫຼື ຄ່າໃຊ້ຈ່າຍໃນໃບລາຍງານຜົນກຳໄລ ຫຼື ຂາດທຶນ, ຍົກເວັ້ນອາກອນທີ່ກ່ຽວຂ້ອງກັບການຕີມູນຄ່າຕາມລາຄາຍຸດຕິທຳຂອງຊັບສິນທີ່ມີໄວ້ສຳລັບການຂາຍ, ການຜິດກ່ຽງອັດຕາແລກປ່ຽນ ແລະ ມູນຄ່າສຸດທິຂອງກະແສເງິນສົດ, ເຊິ່ງສາມາດຄິດຄ່າທຳນຽມ ຫຼື ບັນທຶກບັນຊີເປັນ OCI. ຂໍ້ຍົກເວັ້ນເຫຼົ່ານີ້ແມ່ນໄດ້ຖືກຈັດບໍລິສັດຄືນໃໝ່ ຈາກ OCI ໄປໃບລາຍງານຜົນກຳໄລ ຫຼື ຂາດທຶນ ໃນບັນຊີກຳໄລ ຫຼື ຂາດທຶນລໍຖ້າຊຳລະສະສາງ. ບໍລິສັດຍັງໄດ້ຮັບຮູ້ອາກອນພາຍຫຼັງທີ່ມີການຊຳລະສະສາງ ທີ່ກ່ຽວຂ້ອງກັບເຄື່ອງມືທາງດ້ານການເງິນທີ່ຖືກຈັດບໍລິສັດເປັນທຶນເຈົ້າຂອງ.

ບໍລິສັດຫັກລ້າງໜີ້ຕ້ອງຮັບ ແລະ ໜີ້ຕ້ອງສົ່ງອາກອນລໍຖ້າສະສາງ ເມື່ອມີທັງສິດທາງດ້ານກົດໝາຍ ແລະ ບໍລິສັດມີຈຸດປະສົງທີ່ຈະຫັກລ້າງກັນບົນພື້ນຖານມູນຄ່າສຸດທິ.

5.18 ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້

ມາດຕະຖານ ແລະ ການຕີຄວາມໝາຍໃໝ່ ແລະ ສະບັບປັບປຸງທີ່ອອກ, ແຕ່ຍັງບໍ່ທັນມີຜົນບັງຄັບໃຊ້, ຈົນຮອດວັນທີອອກເອກະສານລາຍງານການເງິນຂອງບໍລິສັດແມ່ນໄດ້ເປີດເຜີຍຂ້າງລຸ່ມນີ້. ບໍລິສັດມີວັດຖຸປະສົງທີ່ຈະຮັບຮອງເອົາມາດຕະຖານ ແລະ ການຕີຄວາມໃໝ່ເຫຼົ່ານີ້, ຖ້າມີ, ເມື່ອມີຜົນບັງຄັບໃຊ້.

ການເປີດເຜີຍນະໂຍບາຍການບັນຊີ - ການປັບປຸງ IAS 1 ແລະ ຄຳຊີ້ແຈງຄັ້ງທີ 2 ໃນການປະຕິບັດ IFRS

ໃນເດືອນ ກຸມພາ 2021, IASB ໄດ້ອອກການປັບປຸງ IAS 1 ແລະ ຄຳຊີ້ແຈງຄັ້ງທີ 2 ໃນການປະຕິບັດ IFRS ການຕັດສິນທີ່ສຳຄັນ, ເຊິ່ງໃຫ້ແນວທາງ ແລະ ຕົວຢ່າງເພື່ອຊ່ວຍໃຫ້ໜ່ວຍງານຕ່າງໆໃຊ້ດຸນຜິນິດ ທີ່ມີຄວາມສຳຄັນກັບການເປີດເຜີຍນະໂຍບາຍການບັນຊີ, ການປັບປຸງນີ້ມີຈຸດປະສົງເພື່ອຊ່ວຍໃຫ້ບໍລິສັດໃນການເປີດເຜີຍນະໂຍບາຍການບັນຊີທີ່ສຳຄັນ, ດ້ວຍຂໍ້ກຳນົດໃນການເປີດເຜີຍນະໂຍບາຍການບັນຊີທີ່ສຳຄັນ ແລະ ເພີ່ມແນວທາງໃຫ້ບໍລິສັດໃຊ້ແນວຄິດກ່ຽວກັບຄວາມສຳຄັນແນວໃດໃນການຕັດສິນໃຈກ່ຽວກັບການເປີດເຜີຍນະໂຍບາຍການບັນຊີ.

5. ສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ (ຕໍ່)

5.18 *ມາດຕະຖານທີ່ໄດ້ອອກແລ້ວ ແຕ່ຍັງບໍ່ມີຜົນບັງຄັບໃຊ້* (ຕໍ່)

ການເປີດເຜີຍນະໂຍບາຍການບັນຊີ - ການປັບປຸງ IAS 1 ແລະ ຄຳຊີ້ແຈງຄັ້ງທີ 2 ໃນການປະຕິບັດ IFRS (ຕໍ່)

ການປັບປຸງ IAS 1 ແມ່ນໃຊ້ໄດ້ສຳລັບໄລຍະປະຈຳປີທີ່ເລີ່ມແຕ່ວັນທີ 1 ມັງກອນ 2023 ໂດຍອະນຸຍາດໃຫ້ຍື່ນຄຳຂໍກ່ອນໜ້າໄດ້. ນັບຕັ້ງແຕ່ການປັບປຸງຄຳຊີ້ແຈງຄັ້ງທີ 2 ໃນການປະຕິບັດ ໃຫ້ແນວທາງທີ່ບໍ່ຈຳເປັນກ່ຽວກັບການໃຊ້ຄຳຈຳກັດຄວາມຂອງເນື້ອຫາກັບຂໍ້ມູນຈຶ່ງບໍ່ຈຳເປັນຕ້ອງມີວັນທີທີ່ມີຜົນບັງຄັບໃຊ້ສຳລັບການປັບປຸງເຫຼົ່ານີ້.

ນິຍາມຂອງການຄາດຄະເນທາງບັນຊີ - ການປັບປຸງ IAS 8

ໃນເດືອນກຸມພາ 2021, IASB ໄດ້ອອກການປັບປຸງ IAS 8, ເຊິ່ງນຳສະເໜີນິຍາມຂອງ 'ການຄາດຄະເນທາງບັນຊີ'. ການປັບປຸງຊີ້ແຈງຄວາມແຕກຕ່າງລະຫວ່າງການປ່ຽນແປງໃນການຄາດຄະເນການບັນຊີ ແລະ ການປ່ຽນແປງນະໂຍບາຍການບັນຊີ ແລະ ການແກ້ໄຂຂໍ້ຜິດພາດ. ນອກຈາກນັ້ນ, ໄດ້ຊີ້ແຈງວິທີການນຳໃຊ້ເຕັກນິກວັດແທກ ແລະ ປັດໄຈເພື່ອພັດທະນາການຄາດຄະເນທາງບັນຊີ.

ການແກ້ໄຂມີຜົນບັງຄັບໃຊ້ສຳລັບໄລຍະການລາຍງານປະຈຳປີ ເລີ່ມຕົ້ນໃນ ຫຼື ຫຼັງຈາກ 1 ມັງກອນ 2023 ແລະ ນຳໃຊ້ກັບການປ່ຽນແປງນະໂຍບາຍບັນຊີ ແລະ ການປ່ຽນແປງໃນການຄາດຄະເນທາງບັນຊີທີ່ເກີດຂຶ້ນໃນ ຫຼື ຫຼັງຈາກການເລີ່ມຕົ້ນຂອງໄລຍະເວລານັ້ນ. ການນຳໃຊ້ກ່ອນໜ້ານີ້ແມ່ນໄດ້ຮັບອະນຸຍາດກໍ່ຕໍ່ເມື່ອຖືກເປີດເຜີຍ.

ການດັດແກ້ແມ່ນຄາດວ່າຈະບໍ່ມີຜົນກະທົບຢ່າງສຳຄັນຕໍ່ບໍລິສັດ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ

ໃນການກະກຽມເອກະສານລາຍງານການເງິນຂອງບໍລິສັດ, ຮຽກຮ້ອງໃຫ້ຄະນະບໍລິຫານຕ້ອງມີການພິຈາລະນາ, ຕີລາຄາ ແລະ ການປະເມີນຜົນກະທົບຕໍ່ຈຳນວນລາຍຮັບ, ລາຍຈ່າຍ, ຊັບສິນ ແລະ ໜີ້ສິນ ແລະ ການເປີດເຜີຍທີ່ກ່ຽວຂ້ອງ, ລວມທັງການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນ. ຄວາມບໍ່ແນ່ນອນໃນການປະເມີນ ແລະ ການຕີລາຄາ ອາດຈະເຮັດໃຫ້ເກີດມີຄວາມຮຽກຮ້ອງຕ້ອງການດ້ານການດັດແກ້ມູນຄ່າຂອງຍອດຍົກມາຂອງຊັບສິນ ແລະ ໜີ້ສິນທີ່ຈະສົ່ງຜົນກະທົບໃນອະນາຄົດ.

ໃນຂະບວນການຂອງການຈັດຕັ້ງປະຕິບັດນະໂຍບາຍການບັນຊີຂອງບໍລິສັດ, ຄະນະບໍລິຫານໄດ້ພິຈາລະນາດັ່ງນີ້ ເຊິ່ງມີຜົນກະທົບອັນສຳຄັນໃຫ້ແກ່ຕົວເລກການຮັບຮູ້ທີ່ມີຄວາມສ່ຽງຫຼາຍ ເຊິ່ງຜົນມາຈາກເຄື່ອງມືການດັດແກ້ທີ່ສຳຄັນຂອງມູນຄ່າຕົວຈິງຂອງຊັບສິນ ແລະ ໜີ້ສິນພາຍໃນປີການເງິນຕໍ່ໜ້າ. ສະຖານະການຕົວຈິງ ແລະ ສົມມຸດຕິຖານກ່ຽວກັບການພັດທະນາໃນອະນາຄົດອາດຈະມີການປ່ຽນແປງເນື່ອງຈາກສະຖານະການນອກເໜືອການຄວບຄຸມຂອງບໍລິສັດ ແລະ ສະທ້ອນໃຫ້ເຫັນໃນສົມມຸດຕິຖານຖ້າຫາກວ່າ ແລະ ເມື່ອມີການເກີດຂຶ້ນ. ລາຍການທີ່ມີຜົນກະທົບທີ່ສຳຄັນຕໍ່ຈຳນວນທີ່ຮັບຮູ້ໃນເອກະສານລາຍງານການເງິນທີ່ມີການຕັດສິນຂອງຄະນະບໍລິຫານໃນການໃຊ້ດຸນຍພິນິດ ແລະ/ຫຼື ການຄາດຄະເນແມ່ນລວມຢູ່ຂ້າງລຸ່ມນີ້ກ່ຽວດຸນພິນິດ/ການຄາດຄະເນທີ່ກ່ຽວຂ້ອງ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.1 ຄ່າເສື່ອມມູນຄ່າຂອງຊັບສິນທາງການເງິນ

ໃນການປະເມີນຄ່າເສື່ອມມູນຄ່າພາຍໃຕ້ຮູບແບບ IFRS 9 ໃນທຸກປະເພດຂອງຊັບສິນທາງການເງິນຕາມຂອບເຂດທີ່ຮຽກຮ້ອງໃຫ້ມີການພິຈາລະນາ, ໂດຍສະເພາະການຄາດຄະເນຈຳນວນ ແລະ ໄລຍະເວລາຂອງກະແສເງິນສົດໃນອະນາຄົດ ເມື່ອມີການກຳນົດຄ່າເສື່ອມ ແລະ ການປະເມີນຄວາມສ່ຽງສຳຄັນທີ່ອາດເພີ່ມຂຶ້ນ. ການຄາດຄະເນດັ່ງກ່າວໄດ້ຖືກຂັບເຄື່ອນ ໂດຍປັດໃຈດ້ານຈຳນວນ, ການປ່ຽນແປງທີ່ອາດສົ່ງຜົນໃຫ້ເກີດມີເງິນແຮຫຼາຍລະດັບທີ່ແຕກຕ່າງກັນ.

ການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນຂອງບໍລິສັດແມ່ນມີຜົນລັບເປັນຮູບແບບທີ່ຊັບຊ້ອນໂດຍມີພື້ນຖານຂໍ້ສົມມຸດຖານຈຳນວນໜຶ່ງທີ່ກ່ຽວກັບປັດໃຈຂໍ້ມູນ ແລະ ຄວາມເປັນອິດສະຫຼະຂອງບັນດາຂໍ້ມູນ. ອົງປະກອບຂອງວິທີການ ECL ທີ່ຖືກພິຈາລະນາໃນການຕັດສິນໃຈທາງການບັນຊີ ແລະ ການຄາດຄະເນລວມທັງ:

- ວິທີການຈັດອັນດັບສິນເຊື່ອພາຍໃນບໍລິສັດ, ເຊິ່ງມອບໝາຍໂດຍ PDs ຕາມແຕ່ລະອັນດັບ;
- ເງື່ອນໄຂຂອງບໍລິສັດສຳລັບການປະເມີນ ຖ້າມີຄວາມສ່ຽງດ້ານສິນເຊື່ອທີ່ເພີ່ມຂຶ້ນຢ່າງຫຼວງຫຼາຍ ແລະ ສະນັ້ນ, ເງິນແຮສຳລັບຊັບສິນທາງການເງິນຄວນຖືກວັດແທກບົນພື້ນຖານ LTECL ແລະ ຖືກປະເມີນຄຸນນະພາບ;
- ການແບ່ງສ່ວນຂອງຊັບສິນທາງການເງິນ ເມື່ອວິທີການ ECL ຫຼື ອົງປະກອບຂອງ ECL ໄດ້ຖືກປະເມີນບົນພື້ນຖານການຮຽກເກັບຄືນ;
- ການພັດທະນາວິທີແບບ ECL, ລວມທັງຮູບແບບຕ່າງໆ ແລະ ທາງເລືອກໃນການປ້ອນເຂົ້າຂໍ້ມູນ;
- ການກຳນົດການພົວພັນລະຫວ່າງເສດຖະກິດມະຫາພາກ ແລະ ການປ້ອນເຂົ້າຂໍ້ມູນທາງເສດຖະກິດເຊັ່ນ: ການຂະຫຍາຍຕົວຂອງ GDP, ດັດສະນີ CPI ແລະ ອັດຕາຂອງການຊຳລະຊ້າ, ແລະ ຜົນກະທົບຂອງ PDs;
- ການຄັດເລືອກເສດຖະກິດມະຫາພາກທີ່ຄາດວ່າຈະເກີດຂຶ້ນລ່ວງໜ້າ ແລະ ອາດຈະເກີດຂຶ້ນໄດ້ ເພື່ອຫາປັດໃຈທີ່ໃຊ້ໃນການປ້ອນເຂົ້າຂໍ້ມູນທາງເສດຖະກິດເຂົ້າໃນໂມດູນ ECL.

ບໍລິສັດມີນະໂຍບາຍທີ່ຈະກວດກາວິທີການດັ່ງກ່າວຢ່າງສະໝ່ຳສະເໝີ ອີງຕາມໜີ້ເສຍທີ່ເກີດຂຶ້ນຜ່ານມາ ແລະ ມີການດັດແກ້ຫາກຈຳເປັນ.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.2 *ຄວາມສືບເນື່ອງໃນການດຳເນີນທຸລະກິດ*

ຄະນະບໍລິຫານຂອງບໍລິສັດໄດ້ປະເມີນຄວາມອາດສາມາດຂອງບໍລິສັດ ກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ ແລະ ເປັນທີ່ໜ້າພໍໃຈວ່າບໍລິສັດມີແຫຼ່ງທຶນ ເພື່ອສືບຕໍ່ໃນການດຳເນີນທຸລະກິດໃນອະນາຄົດ. ຍິ່ງໄປກວ່ານັ້ນ, ຄະນະບໍລິຫານບໍ່ມີສິ່ງຜິດປົກກະຕິໃດໆເປັນທີ່ໜ້າສົງໃສຕໍ່ກັບຄວາມອາດສາມາດຂອງບໍລິສັດ ເພື່ອສືບຕໍ່ດຳເນີນງານກໍ່ຄືຄວາມສືບເນື່ອງໃນການດຳເນີນທຸລະກິດ. ເພາະສະນັ້ນ, ເອກະສານລາຍງານການເງິນ ຍັງສືບຕໍ່ສ້າງຂຶ້ນບົນພື້ນຖານຄວາມສືບເນື່ອງໃນການດຳເນີນທຸລະກິດ.

6.3 *ວິທີການຄິດໄລ່ອັດຕາດອກເບ້ຍທີ່ແທ້ຈິງ (EIR)*

ດັ່ງທີ່ໄດ້ອະທິບາຍໄວ້ໃນປົດອະທິບາຍເລກທີ 5.2.1, ການຮັບຮູ້ດອກເບ້ຍພາຍໃຕ້ອັດຕາຂອງເງິນໄດ້ຮັບຄືນ ທີ່ສາມາດກຳນົດໄດ້ຢ່າງຖືກຕ້ອງທີ່ສຸດໂດຍນຳໃຊ້ອັດຕາຄົງທີ່ ຕາມອາຍຸຂອງການເຊົ່າຊື້ ແລະ ການກູ້ຢືມ ແລະ ຮັບຮູ້ຜົນກະທົບຂອງອັດຕາດອກເບ້ຍທີ່ອາດຈະແຕກຕ່າງໃນແຕ່ລະຂັ້ນຕອນ ແລະ ລັກສະນະອື່ນໆ ຈາກວົງຈອນອາຍຸຂອງແຕ່ລະຜະລິດຕະພັນ (ເຊັ່ນ: ການຈ່າຍລ່ວງໜ້າ, ຄ່າປັບໃໝ, ດອກເບ້ຍ ແລະ ຄ່າທຳນຽມອື່ນໆ). ການຄາດຄະເນນີ້ໄດ້ອີງໃສ່ລັກສະນະ, ອົງປະກອບຂອງການຕັດສິນໃຈ ກ່ຽວກັບລັກສະນະທີ່ຄາດຄະເນໄວ້ ແລະ ວົງຈອນຊີວິດຂອງເຄື່ອງມື, ເນື່ອງຈາກການປ່ຽນແປງຂອງລາຍຮັບ/ລາຍຈ່າຍອື່ນໆເປັນສ່ວນສຳຄັນຂອງເຄື່ອງມື.

6.4 *ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ*

ມູນຄ່າຍຸດຕິທຳຂອງບັນດາເຄື່ອງມືການເງິນແມ່ນລາຄາທີ່ຄວນຈະໄດ້ຮັບຈາກການຂາຍຊັບສິນ ຫຼື ໄດ້ຈ່າຍສຳລັບການໂອນໜີ້ສິນ ຕາມລາຍການເຄື່ອນໄຫວຢູ່ໃນຫຼັກການ (ຫຼື ຜົນປະໂຫຍດສູງສຸດ) ໃນຕະຫຼາດນະເວລາທີ່ວັດແທກພາຍໃຕ້ເງື່ອນໄຂຕະຫຼາດໃນປະຈຸບັນ (ລາຄາຈ້ຽ) ໂດຍບໍ່ຄຳນຶງເຖິງວ່າເປັນລາຄາຈາກການສັງເກດການຕົວຈິງ ຫຼື ຈາກການຄາດຄະເນຈາກການນຳໃຊ້ເຕັກນິກການຕີມູນຄ່າອື່ນ.

ໃນເວລາທີ່ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນຖືກບັນທຶກໃນໃບລາຍງານຖານະການເງິນແລ້ວ ແມ່ນບໍ່ສາມາດປ່ຽນໄປຕາມການເຄື່ອນໄຫວຂອງຕະຫຼາດ, ເຊິ່ງໄດ້ກຳນົດວິທີເຕັກນິກການຕີມູນຄ່າລວມເຖິງຮູບແບບການຕີມູນຄ່າ. ປັດໄຈຂອງຮູບແບບເຫຼົ່ານີ້ໄດ້ມາຈາກການສັງເກດການຄວາມເປັນໄປໄດ້ໃນຕະຫຼາດ, ແຕ່ວ່າຖ້າຫາກບໍ່ມີຄວາມເປັນໄປໄດ້, ການຄາດຄະເນແມ່ນມາຈາກການສ້າງມູນຄ່າຍຸດຕິທຳ. ການຕັດສິນໃຈ ແລະ ການຄາດຄະເນ ລວມເຖິງການພິຈາລະນາດ້ານສະພາບຄ່ອງ ແລະ ຮູບແບບຂອງປັດໄຈທີ່ກ່ຽວຂ້ອງກັບລາຍການຄວາມສ່ຽງດ້ານໜີ້ສິນ (ທັງສ່ວນເຈົ້າຂອງ ແລະ ພາກສ່ວນທີ່ກ່ຽວຂ້ອງ), ການດັດແກ້ມູນຄ່າທຶນ, ຄວາມສຳພັນກັນ ແລະ ການເໜັງຕີງ. ສຳລັບລາຍລະອຽດອື່ນໆກ່ຽວກັບການກຳນົດມູນຄ່າຍຸຕິທຳ ກະລຸນາເບິ່ງປົດອະທິບາຍເລກທີ 5.5 ແລະ 31.

6. ການຄາດຄະເນທີ່ສຳຄັນທາງບັນຊີ ແລະ ການຕັ້ງສົມມຸດຖານ (ຕໍ່)

6.5 *ອາກອນລ່ວງໜ້າສະສາງດ້ານຊັບສິນ*

ອາກອນລ່ວງໜ້າສະສາງດ້ານຊັບສິນແມ່ນຖືກຮັບຮູ້ເປັນການຂາດທຶນທາງອາກອນໃນຂອບເຂດທີ່ເປັນໄປໄດ້ວ່າຜົນກຳໄລທີ່ຕ້ອງເສຍອາກອນໃນອະນາຄົດພຽງພໍສຳລັບການຂາດທຶນທາງອາກອນນັ້ນ. ເຖິງວ່າການຂາດທຶນທາງອາກອນໃນລາວສາມາດນຳໃຊ້ໄດ້ຢ່າງບໍ່ມີກຳນົດ, ແຕ່ຕ້ອງມີດຸນພິນິດເພື່ອກຳນົດມູນຄ່າອາກອນລ່ວງໜ້າສະສາງດ້ານຊັບສິນທີ່ສາມາດຮັບຮູ້ໄດ້, ໂດຍອີງຕາມໄລຍະເວລາ ແລະ ລະດັບຂອງກຳໄລທີ່ຕ້ອງເສຍອາກອນໃນອະນາຄົດ, ບວກກັບຍຸດທະສາດການວາງແຜນອາກອນໃນອະນາຄົດ.

ເມື່ອບໍລິສັດສາມາດຕີມູນຄ່າການຫຼຸດລົງຂອງຜົນປະໂຫຍດທາງເສດຖະກິດທີ່ກ່ຽວຂ້ອງກັບກໍລະນີສະເພາະໃດໜຶ່ງ ແລະ ພິຈາລະນາການຫຼຸດລົງດັ່ງກ່າວຕາມຄວາມເປັນໄປໄດ້, ບໍລິສັດຈະບັນທຶກການຂໍ້ກຳນົດສຳລັບກໍລະນີດັ່ງກ່າວ. ໃນກໍລະນີທີ່ເປັນໄປໄດ້ຂອງການຫຼຸດລົງແມ່ນຖືວ່າຍັງຫ່າງໄກ, ຫຼື ເປັນໄປໄດ້, ແຕ່ບໍ່ສາມາດຄາດຄະເນທີ່ເຊື່ອຖືໄດ້, ຄວາມຮັບຜິດຊອບທີ່ອາດຈະເກີດຂຶ້ນແມ່ນເປີດເຜີຍ. ເຖິງຢ່າງໃດກໍ່ຕາມ, ເມື່ອບໍລິສັດມີຄວາມເຫັນວ່າການເປີດເຜີຍການຄາດຄະເນເຫຼົ່ານີ້ເປັນກໍລະນີຕ່ຳໆ ໄປຈະຂັດກັບຜົນໄດ້ຮັບຂອງພວກເຂົາ, ຫຼັງຈາກນັ້ນ, ບໍລິສັດບໍ່ໄດ້ລວມເອົາການເປີດເຜີຍລາຍລະອຽດສະເພາະໃນເອກະສານລາຍງານການເງິນຂອງຕົນ.

ເນື່ອງຈາກຫົວຂໍ້ ແລະ ຄວາມບໍ່ແນ່ນອນໃນການກຳນົດຄວາມເປັນໄປໄດ້ ແລະ ມູນຄ່າທີ່ຂາດທຶນ, ບໍລິສັດໄດ້ພິຈາລະນາປັດໄຈຈຳນວນໜຶ່ງລວມທັງຄຳແນະນຳທາງດ້ານກົດໝາຍ, ຂັ້ນຕອນຂອງບັນຫາ ແລະ ຫຼັກຖານທາງອະດີດທີ່ເຫດການຄ້າຍຄືກັນ. ການຕັດສິນທີ່ສຳຄັນແມ່ນຈຳເປັນ ເພື່ອສະຫຼຸບກ່ຽວກັບການຄາດຄະເນເຫຼົ່ານີ້.

6.6 *ເງິນຮ ແລະ ໜີ້ສິນອື່ນໆທີ່ຄາດວ່າຈະເກີດຂຶ້ນ*

ບໍລິສັດດຳເນີນທຸລະກິດພາຍໃຕ້ລະບຽບການ ແລະ ສະພາບແວດລ້ອມທີ່ມີກົດໝາຍ, ຕາມລັກສະນະແລ້ວ, ມີອົງປະກອບທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການດຳເນີນຄະດີທີ່ເກີດຂຶ້ນກັບການດຳເນີນງານຂອງບໍລິສັດ. ດັ່ງນັ້ນ, ບໍລິສັດມີສ່ວນຮ່ວມໃນການດຳເນີນຄະດີ, ການຊຳຂາດ ແລະ ການສືບສວນ ແລະ ການດຳເນີນຄະດີຕ່າງໆ, ເຊິ່ງເກີດຂຶ້ນໃນແບບປົກກະຕິໃນທຸລະກິດຂອງບໍລິສັດ.

7. *ພາກສ່ວນຂອງຂໍ້ມູນ*

ພາກສ່ວນໜຶ່ງແມ່ນສ່ວນປະກອບທີ່ກຳນົດແຍກຕ່າງຫາກ ເຊິ່ງປະກອບດ້ວຍທຸລະກິດໃນການຈັດຫາຜະລິດຕະພັນ ຫຼື ການບໍລິການທີ່ກ່ຽວຂ້ອງ (ພາກສ່ວນທຸລະກິດ) ຫຼື ການຈັດຫາຜະລິດຕະພັນ ຫຼື ການບໍລິການໃນສະພາບແວດລ້ອມທາງເສດຖະກິດສະເພາະ (ພາກສ່ວນທາງພູມສັນຖານ), ເຊິ່ງຂຶ້ນກັບຄວາມສ່ຽງ ແລະ ຜົນຕອບແທນທີ່ແຕກຕ່າງຈາກພາກສ່ວນໃດໜຶ່ງຂອງພາກສ່ວນອື່ນໆ.

ກິດຈະກຳຕົ້ນຕໍຂອງບໍລິສັດຕໍ່ໃບອະນຸຍາດດຳເນີນທຸລະກິດແມ່ນ ການບໍລິການເຊົ່າຊື້-ຂາຍ ໂດຍຜ່ານການສະໜອງສິນເຊື່ອສຳລັບລູກຄ້າສ່ວນບຸກຄົນ ແລະ ບໍລິສັດໃນການຊື້ລົດຈັກ ແລະ ລົດໃຫຍ່. ນອກຈາກນັ້ນ, ກິດຈະກຳເຫຼົ່ານີ້ແມ່ນດຳເນີນຢູ່ໃນ ສປປ ລາວ ເທົ່ານັ້ນ. ດັ່ງນັ້ນ, ຄວາມສ່ຽງ ແລະ ຜົນຕອບແທນຂອງບໍລິສັດຈຶ່ງບໍ່ໄດ້ຮັບຜົນກະທົບຈາກການບໍລິການ ທີ່ບໍລິສັດສະໜອງ ຫຼື ສະຖານທີ່ທີ່ບໍລິສັດດຳເນີນທຸລະກິດ. ດັ່ງນັ້ນ, ການຄຸ້ມຄອງຂອງບໍລິສັດແມ່ນຖືວ່າມີພຽງແຕ່ສ່ວນໜຶ່ງສຳລັບທຸລະກິດ ແລະ ພູມສາດ ແລະ ດັ່ງນັ້ນການນຳສະເໜີຂໍ້ມູນສ່ວນແມ່ນບໍ່ຈຳເປັນ.

8. ລາຍຮັບດອກເບ້ຍສຸດທິ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ລາຍຮັບດອກເບ້ຍຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ:		
ໜີ້ຕ້ອງຮັບສັນຍາເຊົ່າຊື້	203,723,856,315	208,311,330,624
ເງິນຝາກປະຢັດ	155,013,138	199,547,553
	203,878,869,453	208,510,878,177
ລາຍຮັບດອກເບ້ຍ ແລະ ຄ້າຍຄືດອກເບ້ຍອື່ນໆ	13,310,108,672	13,804,473,111
	217,188,978,125	**222,315,351,288**
ລາຍຈ່າຍດອກເບ້ຍຄິດໄລ່ໂດຍວິທີອັດຕາດອກເບ້ຍທີ່ແທ້ຈິງ:		
ລາຍຈ່າຍດອກເບ້ຍການກູ້ຢືມ	(1,147,859,937)	(1,228,372,796)
ລາຍຈ່າຍດອກເບ້ຍຄ່າເຊົ່າ	-	(14,907,261)
ລາຍຮັບດອກເບ້ຍສຸດທິ	**216,041,118,188**	**221,072,071,231**

9. ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ລາຍຈ່າຍຄ່າທຳນຽມ ແລະ ຄ່ານາຍໜ້າສຳລັບ		
ຄ່ານາຍໜ້າ	4,249,380,880	1,799,718,143
ຄ່າທຳນຽມໂອນກຳມະສິດ	1,123,897,000	1,406,467,600
ຄ່າທຳນຽມອື່ນໆ	701,321,305	1,250,288,952
	6,074,599,185	**4,456,474,695**

10. ລາຍຮັບອື່ນໆຈາກການດຳເນີນງານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ລາຍຮັບອື່ນໆຈາກການດຳເນີນງານ	932,073,404	1,199,843,509
	932,073,404	**1,199,843,509**

11. ເກັບຄືນ/(ລາຍຈ່າຍ)ຂາດທຶນສິນເຊື່ອຂອງຊັບສິນທາງການເງິນ

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄ່າ ECL ເກັບຄືນ/(ລາຍຈ່າຍ) ຂາດທຶນສິນເຊື່ອຂອງຊັບສິນທາງການເງິນກາງປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ທີ່ບັນທຶກໄວ້ໃນໃບລາຍງານຜົນການດຳເນີນ ຫຼື ຂາດທຶນກາງປີ:

	ບົດອະທິບາຍເລກທີ	*ຂັ້ນທີ 1*	*ຂັ້ນທີ 2*	*ຂັ້ນທີ 3*	ລວມ
ເງິນສົດ ແລະ ທຽບເທົ່າເງິນສົດ	14	-	-	-	-
ເງິນຝາກຢູ່ທະນາຄານ	15	-	-	-	-
ໜີ້ຕ້ອງຮັບສັນຍາເຊົ່າຊື້	16	10,622,323,758	4,811,895,415	(16,762,505,137)	(1,328,285,964)
		10,622,323,758	**4,811,895,415**	**(16,762,505,137)**	**(1,328,285,964)**

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄ່າ ECL ເກັບຄືນ/(ລາຍຈ່າຍ) ຂາດທຶນສິນເຊື່ອຂອງຊັບສິນທາງການເງິນສຳລັບປີທີ່ສິ້ນສຸດວັນທີ 30 ມິຖຸນາ 2023 ທີ່ບັນທຶກໄວ້ໃນໃບລາຍງານຜົນການດຳເນີນ ຫຼື ຂາດທຶນ:

	ຂັ້ນທີ 1	*ຂັ້ນທີ 2*	*ຂັ້ນທີ 3*	ລວມ
ເງິນສົດ ແລະ ທຽບເທົ່າເງິນສົດ	-	-	-	-
ເງິນຝາກຢູ່ ທຫລ	-	-	-	-
ໜີ້ຕ້ອງຮັບສັນຍາເຊົ່າຊື້	1,970,479,228	2,566,076,906	3,337,782,461	7,874,338,595
	1,970,479,228	**2,566,076,906**	**3,337,782,461**	**7,874,338,595**

12. ລາຍຈ່າຍທີ່ກ່ຽວຂ້ອງກັບພະນັກງານ

	ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ	*ສຳລັບໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ຄ່າຈ້າງ ແລະ ເງິນເດືອນ	26,477,955,437	18,179,584,566
ຄ່າໃຊ້ຈ່າຍອື່ນໆໃຫ້ພະນັກງານ	5,509,011,027	5,106,137,835
	31,986,966,464	**23,285,722,401**

13. ລາຍຈ່າຍອື່ນໆໃນການດຳເນີນງານ

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ກີບ	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ກີບ*
ລາຍຈ່າຍການຕະຫຼາດ	158,670,100	11,807,011
ຄ່ານ້ຳມັນ	877,911,749	941,816,900
ອຸປະກອນ	909,589,139	882,152,837
ຄ່າທຳນຽມທາງກົດໝາຍ	260,800,900	327,040,010
ການສ້ອມແປງ ແລະ ບຳລຸງຮັກສາ	1,036,647,535	1,336,457,781
ຄ່າສາທາລະນຸປະໂພກ	3,386,162,590	4,734,717,495
ປະກັນໄພ	80,863,440	96,725,386
ຄ່າໃຊ້ຈ່າຍໃນການຂົນສົ່ງ ແລະ ເດີນທາງ	2,947,499,538	2,458,026,958
ອາກອນ ແລະ ພັນທະປະກັນສັງຄົມ	4,488,192,614	7,788,601,476
ລາຍຈ່າຍຄ່າເຊົ່າ	1,362,634,358	3,479,248,743
ລາຍຈ່າຍທີ່ປຶກສາ	4,959,671,058	3,943,425,539
ອື່ນໆ	4,142,182,489	1,910,717,089
	24,610,825,510	**27,910,737,225**

14. ເງິນສົດ ແລະ ທຽບເທົ່າເງິນສົດ

	30 ມິຖຸນາ 2024 ກີບ	*31 ທັນວາ 2023 ກີບ*
ເງິນສົດໃນຄັງ	3,324,910,788	2,793,658,833
ເງິນຝາກທະນາຄານ/ເງິນຝາກປະຢັດຢູ່ທະນາຄານ		
- ສະກຸນເງິນກີບ	2,511,304,618	1,132,742,630
- ສະກຸນເງິນບາດ	1,418,112,240	1,976,006,120
- ສະກຸນເງິນໂດລາ	192,588,608,336	183,140,770,174
- ສະກຸນເງິນອື່ນໆ	171,192,433	173,281,039
ເງິນຝາກມີກຳນົດອາຍຸຕ່ຳກວ່າ 3 ເດືອນ ສະກຸນເງິນໂດລາ	2,274,694,840	2,098,749,421
ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ	-	-
	202,288,823,255	**191,315,208,217**

14. ເງິນສົດ ແລະ ທຽບເທົ່າເງິນສົດ (ຕໍ່)

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄຸນນະພາບສິນເຊື່ອ ແລະ ຄວາມສ່ຽງສູງສຸດຂອງການປ່ອຍສິນເຊື່ອໂດຍອີງໃສ່ລະບົບການຈັດອັນດັບສິນເຊື່ອພາຍໃນຂອງບໍລິສັດ ແລະ ການຈັດລະດັບປະເພດ. ລາຍລະອຽດຂອງລະບົບການໃຫ້ຄະແນນພາຍໃນຂອງບໍລິສັດແມ່ນໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 29.

	30 ມິຖຸນາ 2024		*31 ທັນວາ 2023*
	ຂັ້ນທີ 1	*ລວມ*	*ລວມ*
	ກີບ	*ກີບ*	*ກີບ*
0 DPD	2,274,694,840	2,274,694,840	2,098,749,421
	2,274,694,840	**2,274,694,840**	**2,098,749,421**

ການສົມທຽບກັນຂອງການປ່ຽນແປງຂອງມູນຄ່າຕາມບັນຊີລວມແມ່ນມີດັ່ງນີ້:

	ຂັ້ນທີ 1 ແບບດ່ຽວ
	ກີບ
ມູນຄ່າຕາມບັນຊີນະວັນທີ 01 ມັງກອນ 2024	**2,098,749,421**
ເກີດຂຶ້ນໃໝ່	18,959,618
ສ່ວນຕ່າງຈາກອັດຕາແລກປ່ຽນ	156,985,801
ມູນຄ່າຕາມບັນຊີນະວັນທີ 30 ມິຖຸນາ 2024	**2,274,694,840**

15. ເງິນຝາກຢູ່ທະນາຄານ

	30 ມິຖຸນາ 2024	*31 ທັນວາ 2023*
	ກີບ	*ກີບ*
ບັນຊີເງິນຝາກກັບ ທຫລ		
- ຄ້ຳສຳຮອງທຶນຈົດທະບຽນສະກຸນເງິນກີບ (*)	1,968,900,001	1,968,900,001
ບັນຊີເງິນຝາກກັບທະນາຄານພາຍໃນປະເທດ		
- ເງິນຝາກມີກຳນົດສະກຸນເງິນໂດລາ	28,968,769,817	6,383,610,191
ເງິນຮອສຳລັບການເສື່ອມມູນຄ່າຫນີ້ເສຍ	-	-
	30,937,669,818	**8,352,510,192**

(*) ພາຍໃຕ້ກົດລະບຽບຂໍ້ບັງຄັບຂອງ ທຫລ, ບໍລິສັດຈະຕ້ອງຮັກສາຍອດເງິນຝາກຕ່ຳສຸດນຳ ທະນາຄານແຫ່ງ ສປປ ລາວ ເຊິ່ງຍອດຕ່ຳສຸດແມ່ນ 5% ຂອງທຶນຈົດທະບຽນ, ໂດຍອີງຕາມການແຈ້ງການຈາກ ທຫລ ເປັນແຕ່ລະໄລຍະ. ຍອດຂອງເງິນຝາກນີ້ແມ່ນຈະບໍ່ໄດ້ຮັບດອກເບ້ຍ.

15. ເງິນຝາກຢູ່ທະນາຄານ (ຕໍ່)

ມູນຄ່າຕາມບັນຊີໜີ້ຄ້າງຮັບຈາກທະນາຄານ

ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄຸນນະພາບສິນເຊື່ອ ແລະ ຄວາມສ່ຽງສູງສຸດຂອງການປ່ອຍສິນເຊື່ອໂດຍອີງໃສ່ລະບົບການຈັດອັນດັບສິນເຊື່ອພາຍໃນຂອງບໍລິສັດ ແລະ ການຈັດລະດັບປະເພດ. ລາຍລະອຽດຂອງລະບົບການໃຫ້ຄະແນນພາຍໃນຂອງບໍລິສັດແມ່ນໄດ້ອະທິບາຍໄວ້ໃນ ບົດອະທິບາຍຊ້ອນທ້າຍທີ 29.

	30 ມິຖຸນາ 2024		*31 ທັນວາ 2023*
	ຂັ້ນທີ 1	*ລວມ*	*ລວມ*
	LAK	*ກີບ*	*ກີບ*
0 DPD	28,968,769,817	28,968,769,817	6,383,610,191
	28,968,769,817	**28,968,769,817**	**6,383,610,191**

ການສົມທຽບກັນຂອງການປ່ຽນແປງຂອງມູນຄ່າຕາມບັນຊີລວມແມ່ນມີດັ່ງນີ້:

	ຂັ້ນທີ 1
	ແບບດ່ຽວ
	ກີບ
ມູນຄ່າຕາມບັນຊີນະວັນທີ 01 ມັງກອນ 2024	**6,383,610,191**
ການຊື້ຊັບສິນໃໝ່	22,107,667,580
ສ່ວນຕ່າງຈາກອັດຕາແລກປ່ຽນ	477,492,046
ມູນຄ່າຕາມບັນຊີນະວັນທີ 30 ມິຖຸນາ 2024	**28,968,769,817**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້

16.1 ໜີ້ຕ້ອງຮັບສັນຍາເຊົ່າຊື້

	30 ມິຖຸນາ 2024	*31 ທັນວາ 2023*
	ກີບ	*ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້	1,440,321,830,769	1,316,092,063,889
ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ	(266,193,615,221)	(245,872,873,217)
	1,174,128,215,548	**1,070,219,190,672**
ເຊິ່ງລວມ:		
ສ່ວນທີ່ໝຸນວຽນ	*1,104,526,270,171*	*995,388,274,173*
ສ່ວນທີ່ບໍ່ໝຸນວຽນ	*69,601,945,377*	*74,830,916,499*

ກຳມະສິດຂອງສິນຄ້າແມ່ນຈະຖືກໂອນໄປເປັນຊື່ຂອງລູກຄ້າໂດຍສົມບູນພາຍຫຼັງທີ່ມີການຊຳລະເງິນຕົ້ນ ແລະ ດອກເບ້ຍຮຽບຮ້ອຍແລ້ວ.

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.1 ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

ອັດຕາດອກເບ້ຍສຳລັບໜີ້ຕ້ອງຮັບສັນຍາເຊົ່າຊື້ພາຍໃນໄລຍະແມ່ນດັ່ງລຸ່ມນີ້:

	2024 *% ຕໍ່ເດືອນ*	*2023* *% ຕໍ່ເດືອນ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກຜະລິດຕະພັນລິດໃຫຍ່	0.00% - 5.00%	0.00% - 6.00%
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກຜະລິດຕະພັນລິດຈັກ	1.90% - 10.00%	1.00% - 16.00%
ໜີ້ຕ້ອງຮັບສັນຍາເຊົ່າຊື້ຈາກອະສັງຫາລິມະຊັບ	2.50% - 4.50%	2.50% - 4.50%

ວິເຄາະຕາມໄລຍະເວລາກູ້ຢືມ

	30 ມິຖຸນາ 2024 *ກີບ*	*31 ທັນວາ 2023* *ກີບ*
ໄລຍະສັ້ນ	398,579,374,168	383,088,962,230
ໄລຍະກາງ	981,960,325,307	876,709,232,537
ໄລຍະຍາວ	59,782,131,294	56,293,869,122
	1,440,321,830,769	**1,316,092,063,889**

ວິເຄາະຕາມສະກຸນເງິນ

	30 ມິຖຸນາ 2024 *ກີບ*	*31 ທັນວາ 2023* *ກີບ*
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນກີບ	235,032,325,061	164,357,472,887
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນໂດລາ	1,023,816,381,454	1,001,951,198,759
ໜີ້ຕ້ອງຮັບສັນຍາເຊົ່າຊື້ໃນສະກຸນເງິນບາດ	181,473,124,254	149,783,392,243
	1,440,321,830,769	**1,316,092,063,889**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.2 *ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ*

ຕາຕະລາງລຸ່ມນີ້ສະແດງເຖິງຄຸນນະພາບຂອງສິນເຊື່ອ ແລະ ຄວາມສ່ຽງດ້ານສິນເຊື່ອທີ່ເກີດຂຶ້ນສູງສຸດໃນການຈັດອັນດັບສິນເຊື່ອຂອງລະບົບພາຍໃນ, ມູນຄ່າທີ່ສະແດງລຸ່ມນີ້ແມ່ນລວມເງິນແຮຄ່າເສື່ອມມູນຄ່າໜີ້ເສຍ:

	30 ມິຖຸນາ 2024			
ການຈັດອັນດັບພາຍໃນ (ຈຳນວນDPD)	*ຂັ້ນທີ 1 ແບບກຸ່ມ ກີບ*	*ຂັ້ນທີ 2 ແບບກຸ່ມ ກີບ*	*ຂັ້ນທີ 3 ແບບກຸ່ມ ກີບ*	*ລວມ ແບບກຸ່ມ ກີບ*
0 DPD	860,696,170,229	-	-	860,696,170,229
1 - 89 DPD	-	281,697,125,096	-	281,697,125,096
90+ DPD	-	-	297,928,535,444	297,928,535,444
	860,696,170,229	**281,697,125,096**	**297,928,535,444**	**1,440,321,830,769**

ມູນຄ່າທີ່ສະແດງລຸ່ມນີ້ແມ່ນລວມເງິນແຮຄ່າເສື່ອມມູນຄ່າໜີ້ເສຍສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023 ດັ່ງລຸ່ມນີ້:

	31 ທັນວາ 2023			
ການຈັດອັນດັບພາຍໃນ (ຈຳນວນDPD)	*ຂັ້ນທີ 1 ແບບກຸ່ມ ກີບ*	*ຂັ້ນທີ 2 ແບບກຸ່ມ ກີບ*	*ຂັ້ນທີ 3 ແບບກຸ່ມ ກີບ*	*ລວມ ແບບກຸ່ມ ກີບ*
0 DPD	707,399,511,769	-	-	707,399,511,769
1 - 89 DPD	-	312,564,937,858	-	312,564,937,858
90+ DPD	-	-	296,127,614,262	296,127,614,262
	707,399,511,769	**312,564,937,858**	**296,127,614,262**	**1,316,092,063,889**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.2 ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ (ຕໍ່)

ການສົມທຽບການປ່ຽນແປງຂອງມູນຄ່າຕາມບັນຊີດັ່ງລຸ່ມນີ້:

	ຂັ້ນທີ 1 ແບບກຸ່ມ ກີບ	*ຂັ້ນທີ 2 ແບບກຸ່ມ ກີບ*	*ຂັ້ນທີ 3 ແບບກຸ່ມ ກີບ*	*ລວມ ກີບ*
ຍອດຍົກມາ ນະວັນທີ 01/01/2023	**542,096,532,550**	**280,707,935,042**	**590,489,868,052**	**1,413,294,335,644**
ຊັບສິນທີ່ເກີດຂຶ້ນໃໝ່ ຫຼື ຊື້ເພີ່ມ	548,982,690,889	205,374,355,227	62,310,428,244	816,667,474,360
ການຈ່າຍ ແລະ ຊັບສິນທີ່ຢຸດຮັບຮູ້	(429,094,064,941)	(220,051,891,618)	(200,257,784,988)	(849,403,741,547)
ໂອນໄປຂັ້ນທີ 1	47,587,770,793	(23,694,215,277)	(23,893,555,516)	-
ໂອນໄປຂັ້ນທີ 2	(56,662,873,963)	69,214,871,445	(12,551,997,482)	-
ໂອນໄປຂັ້ນທີ 3	(18,909,926,255)	(43,160,164,190)	62,070,090,445	-
ສະສາງອອກ	(22,525,034,068)	(8,020,116,625)	(247,296,873,558)	(277,842,024,251)
ການດັດແກ້ອັດຕາແລກປ່ຽນເງິນຕາຕ່າງປະເທດ	95,924,416,764	52,194,163,854	65,257,439,065	213,376,019,683
ຍອດຍົກມາ ນະວັນທີ 31/12/2023	**707,399,511,769**	**312,564,937,858**	**296,127,614,262**	**1,316,092,063,889**
ຊັບສິນທີ່ເກີດຂຶ້ນໃໝ່ ຫຼື ຊື້ເພີ່ມ	468,976,343,739	115,368,397,181	11,661,106,655	596,005,847,575
ການຈ່າຍ ແລະ ຊັບສິນທີ່ຢຸດຮັບຮູ້	(374,024,157,236)	(134,732,938,943)	(53,733,293,688)	(562,490,389,867)
ໂອນໄປຂັ້ນທີ 1	77,930,003,087	(70,644,997,723)	(7,285,005,364)	-
ໂອນໄປຂັ້ນທີ 2	(84,455,344,133)	86,620,379,961	(2,165,035,828)	-
ໂອນໄປຂັ້ນທີ 3	(17,395,516,372)	(35,023,061,571)	52,418,577,943	-
ສະສາງອອກ	-	-	-	-
ການດັດແກ້ອັດຕາແລກປ່ຽນເງິນຕາຕ່າງປະເທດ	82,265,329,375	7,544,408,333	904,571,464	90,714,309,174
ຍອດຍົກມາ ນະວັນທີ 30/6/2024	**860,696,170,229**	**281,697,125,096**	**297,928,535,444**	**1,440,321,830,769**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.2 ເງິນຮັບສຳລັບການເສື່ອມມູນຄ່າໜີ້ເສຍ (ຕໍ່)

ການສົມທຽບການປ່ຽນແປງເງິນຮັບສຳລັບ ECL ດັ່ງລຸ່ມນີ້:

	ຂັ້ນທີ 1 ແບບຖຸ່ມ ກີບ	*ຂັ້ນທີ 2 ແບບຖຸ່ມ ກີບ*	*ຂັ້ນທີ 3 ແບບຖຸ່ມ ກີບ*	*ລວມ ກີບ*
ມູນຄ່າເງິນຮັບຍົກມາ ນະວັນທີ 01/01/2023	**24,908,579,940**	**21,305,848,059**	**331,788,622,609**	**378,003,050,608**
ຊັບສິນທີ່ເກີດຂຶ້ນໃໝ່ ຫຼື ຊື້ເພີ່ມ	1,574,955,101	7,127,916,070	6,334,341,751	15,037,212,922
ການຈ່າຍ ແລະ ຊັບສິນທີ່ຢຸດຮັບຮູ້	(2,311,904,422)	(9,905,762,168)	(50,358,159,688)	(62,575,826,278)
ໂອນໄປຂັ້ນທີ 1	8,092,694,553	(1,323,052,512)	(6,769,642,041)	-
ໂອນໄປຂັ້ນທີ 2	(392,695,951)	3,931,988,819	(3,539,292,868)	-
ໂອນໄປຂັ້ນທີ 3	(208,384,001)	(2,234,156,138)	2,442,540,139	-
ກະທົບເງິນຮັບສຳລັບການເສື່ອມມູນຄ່າໜີ້ເສຍທີ່ຖືກໂອນລະຫວ່າງຂັ້ນຕອນໃນລະຫວ່າງໄລຍະ	(8,502,242,633)	816,908,596	41,345,670,142	33,660,336,105
ການປ່ຽນແປງແບບຈຳລອງ ແລະ ຂໍ້ມູນປ້ອນທີ່ໃຊ້ສຳລັບການຄິດໄລ່ເງິນຮັບສຳລັບການເສື່ອມມູນຄ່າ	656,618,824	8,392,258,255	131,479,499,072	140,528,376,151
ການປ່ຽນແປງ ECL ພາຍໃນໄລຍະ	*(1,090,958,529)*	*6,806,100,922*	*120,934,956,507*	*126,650,098,900*
ສະສາງອອກ	(22,525,034,068)	(8,020,116,625)	(247,296,873,558)	(277,842,024,251)
ການດັດແກ້ອັດຕາແລກປ່ຽນເງິນຕາຕ່າງປະເທດ	1,629,330,213	2,445,236,561	14,987,181,186	19,061,747,960
ມູນຄ່າເງິນຮັບນະວັນທີ 31/12/2023	**2,921,917,556**	**22,537,068,917**	**220,413,886,744**	**245,872,873,217**

16. ໜີ້ຕ້ອງຮັບສັນຍາເຊົ່າຊື້ (ຕໍ່)

16.2 ເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍ (ຕໍ່)

	ຂັ້ນທີ 1 ແບບກຸ່ມ ກີບ	*ຂັ້ນທີ 2 ແບບກຸ່ມ ກີບ*	*ຂັ້ນທີ 3 ແບບກຸ່ມ ກີບ*	*ລວມ ກີບ*
ຊັບສິນທີ່ເກີດຂຶ້ນໃໝ່ ຫຼື ຊື້ເພີ່ມ	2,204,495,079	8,192,749,571	4,821,816,570	15,219,061,220
ການຈ່າຍ ແລະ ຊັບສິນທີ່ຢຸດຮັບຮູ້	(21,186,673,933)	(9,770,270,133)	(34,380,910,512)	(65,337,854,578)
ໂອນໄປຂັ້ນທີ 1	9,764,313,904	(5,463,317,363)	(4,300,996,541)	-
ໂອນໄປຂັ້ນທີ 2	(504,932,065)	1,442,637,566	(937,705,501)	-
ໂອນໄປຂັ້ນທີ 3	(1,171,850,080)	(3,951,436,908)	5,123,286,988	-
ກະທົບເງິນແຮສຳລັບການເສື່ອມມູນຄ່າໜີ້ເສຍທີ່ຖືກໂອນລະຫວ່າງຂັ້ນຕອນໃນລະຫວ່າງໄລຍະ	(81,296,346)	4,928,933,214	16,394,084,289	21,241,721,157
ການປ່ຽນແປງແບບຈຳລອງ ແລະ ຂໍ້ມູນປ້ອນທີ່ໃຊ້ສຳລັບການຄິດໄລ່ເງິນແຮສຳລັບການເສື່ອມມູນຄ່າ	353,619,683	(191,191,362)	30,042,929,844	30,205,358,165
ການປ່ຽນແປງ ECL ພາຍໃນໄລຍະ (ບົດອະທິບາຍເລກທີ 11)	*(10,622,323,758)*	*(4,811,895,415)*	*16,762,505,137*	*1,328,285,964*
ການສະສາງ	-	-	-	-
ການດັດແກ້ອັດຕາແລກປ່ຽນເງິນຕາຕ່າງປະເທດ	25,644,163,143	1,748,563,420	(8,400,270,522)	18,992,456,040
ມູນຄ່າເງິນແຮນະວັນທີ 30/6/2024	**17,943,756,941**	**19,473,736,922**	**228,776,121,359**	**266,193,615,221**

17. ຊັບສິນອື່ນໆ

	30 ມິຖຸນາ 2024	*31 ທັນວາ 2023*
	ກີບ	*ກີບ*
ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 24.2.1) (*)	507,474,248,379	433,335,490,508
ເງິນລ່ວງໜ້າໃຫ້ແກ່ການສ້າງອາພາດເມັ້ນ (**)	8,104,871,580	11,634,420,560
ອາກອນເງິນປັນຜົນລ່ວງໜ້າ	1,487,761,490	1,487,761,490
ເງິນລ່ວງໜ້າໃຫ້ພະນັກງານ	287,923,608	7,020,382,227
ຄ່າເຊົ່າຈ່າຍລ່ວງໜ້າ	809,562,320	83,668,694
ຊັບສິນອື່ນໆ	3,065,069,354	2,228,106,887
	521,229,436,731	**455,789,830,366**

(*) ລວມເຖິງການຈ່າຍຕາງໜ້າຂອງບໍລິສັດ Pawn Shop Number One Individual Enterprise ແລະ ບໍລິສັດ O International ເພື່ອຈຸດປະສົງໃນການຊື້ທີ່ດິນຂອງບໍລິສັດເຫຼົ່ານັ້ນຕາມຂໍ້ຕົກລົງລະຫວ່າງ ບໍລິສັດ ລາວອາຊຽນ ມະຫາຊົນ ແລະ ບໍລິສັດ Pawn Shop Number One Individual Enterprise ແລະ ບໍລິສັດ O International ລົງລາຍເຊັນໃນເດືອນ ມັງກອນ 2021. ທັງສອງບໍລິສັດຈະຊຳລະໜີ້ຄືນໃຫ້ແກ່ບໍລິສັດລາວອາຊຽນ ມະຫາຊົນ ພາຍໃນ 5 ປີ. ການຊື້ທີ່ດິນແມ່ນນຳໃຊ້ເປັນຫຼັກຊັບຄ้ำປະກັນສຳລັບເງິນລ່ວງໜ້າ ແລະ ເຈົ້າຂອງກຳມະສິດທີ່ດິນຈະຖືກໂອນມາເປັນຊື່ຂອງບໍລິສັດ ລາວ ອາຊຽນ ມະຫາຊົນ ໃນກໍລະນີແຕ່ລະບໍລິສັດບໍ່ຊຳລະຕາມກຳນົດເວລາ. ບໍລິສັດ ລາວອາຊຽນ ມະຫາຊົນແມ່ນຖືຄອງໃບຢັ້ງຢືນກຳມະສິດທີ່ດິນທັງໝົດ ແລະ ຈະສົ່ງຄືນເມື່ອໄດ້ຮັບການຊຳລະເຕັມຈຳນວນ.

(**) ຍອດຄົງເຫຼືອ ແມ່ນຈຳນວນຍອດເຫຼືອເງິນລ່ວງໜ້າຂອງບໍລິສັດໃຫ້ແກ່ ACEB Estate development Co., Ltd ອີງຕາມສັນຍາເພື່ອການລົງທຶນໃນການກໍ່ສ້າງອາພາດເມັ້ນ. ເງິນລ່ວງໜ້າແມ່ນຖືກຈ່າຍເປັນສະກຸນເງິນໂດລາ ໃນມູນຄ่າ ລວມ 1,000,000 ໂດລາ.

18. ຊັບສິນບັດ ແລະ ອຸປະກອນ ແລະ ສິດໃນການນຳໃຊ້ຊັບສິນ

ການເຄື່ອນໄຫວຂອງຊັບສິນບັດ ແລະ ອຸປະກອນ ກາງປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ມີດັ່ງລຸ່ມນີ້:

	ພາຫະນະ	*ເຟີນີເຈີ ແລະ ສິ່ງຕິດຕັ້ງ*	*ອຸປະກອນ ຄອມພິວເຕີ*	*ສິດໃນການນຳໃຊ້ ຊັບສິນ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ					
ນະວັນທີ 1 ມັງກອນ 2024	8,229,669,143	2,104,365,191	7,273,917,218	3,849,194,340	21,457,145,892
ຊື້ເພີ່ມ	-	655,383,027	111,727,900	4,160,368,320	4,927,479,247
ນະວັນທີ 30 ມິຖຸນາ 2024	8,229,669,143	2,759,748,218	7,385,645,118	8,009,562,660	26,384,625,139
ຄ່າຫຼ້ຍຫ້ຽນສະສົມ					
ນະວັນທີ 1 ມັງກອນ 2024	4,737,846,412	858,264,099	4,492,773,135	2,171,476,008	12,260,359,654
ຄ່າຫຼ້ຍຫ້ຽນພາຍໃນໄລຍະ	427,548,354	255,296,754	542,742,402	2,470,766,321	3,696,353,831
ນະວັນທີ 30 ມິຖຸນາ 2024	5,165,394,766	1,113,560,853	5,035,515,537	4,642,242,329	15,956,713,485
ມູນຄ່າສຸດທິຕາມບັນຊີ					
ນະວັນທີ 1 ມັງກອນ 2024	3,491,822,731	1,246,101,092	2,781,144,083	1,677,718,332	9,196,786,238
ນະວັນທີ 30 ມິຖຸນາ 2024	3,064,274,377	1,646,187,365	2,350,129,581	3,367,320,331	10,427,911,654

18. ຊັບສິນປັດ ແລະ ອຸປະກອນສິດໃນການນຳໃຊ້ຊັບສິນ (ຕໍ່)

ການເຄື່ອນໄຫວຂອງຊັບສິນປັດ ແລະ ອຸປະກອນ ກາງປີທີ່ສິ້ນສຸດວັນທີ 31 ທັນວາ 2023 ມີດັ່ງລຸ່ມນີ້:

	ພາຫະນະ	*ເຟີນີເຈີ ແລະ ສິ່ງຕິດຕັ້ງ*	*ອຸປະກອນ ຄອມພິວເຕີ*	*ສິດໃນການນຳໃຊ້ ຊັບສິນ*	*ລວມ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*
ຕົ້ນທຶນ					
ນະວັນທີ 1 ມັງກອນ 2023	4,369,517,343	1,360,587,275	5,882,533,935	1,678,823,758	13,291,462,311
ຊື້ເພີ່ມ	3,860,151,800	743,777,916	1,391,383,283	2,170,370,582	8,165,683,581
ນະວັນທີ 31 ທັນວາ 2023	8,229,669,143	2,104,365,191	7,273,917,218	3,849,194,340	21,457,145,892
ຄ່າໜ້ຍຫ້ຽນສະສົມ					
ນະວັນທີ 1 ມັງກອນ 2023	4,187,281,526	572,950,066	3,359,284,648	569,342,019	8,688,858,259
ຄ່າໜ້ຍຫ້ຽນພາຍໃນໄລຍະ	550,564,886	285,314,033	1,133,488,487	1,602,133,989	3,571,501,395
ນະວັນທີ 31 ທັນວາ 2023	4,737,846,412	858,264,099	4,492,773,135	2,171,476,008	12,260,359,654
ມູນຄ່າສຸດທິຕາມບັນຊີ					
ນະວັນທີ 1 ມັງກອນ 2023	182,235,817	787,637,209	2,523,249,287	1,109,481,739	4,602,604,052
ນະວັນທີ 31 ທັນວາ 2023	3,491,822,731	1,246,101,092	2,781,144,083	1,677,718,332	9,196,786,238

19. ພັນທະທາງກົດໝາຍ

	30 ມິຖຸນາ 2024	*31 ທັນວາ 2023*
	ກີບ	*ກີບ*
ອາກອນເງິນເດືອນ	499,683,782	404,976,126
ອາກອນກຳໄລ (*)	149,130,605,653	121,372,016,630
ອື່ນໆ	9,712,072,612	13,187,345,294
	159,342,362,047	**134,964,338,050**

19. ພັນທະທາງກົດໝາຍ (ຕໍ່)

(*) ລາຍລະອຽດຂອງໜີ້ຕ້ອງສົ່ງອາກອນກຳໄລແມ່ນມີດັ່ງລຸ່ມນີ້:

	30 ມິຖຸນາ 2024 *ກີບ*	*30 ມິຖຸນາ 2023* *ກີບ*
ອາກອນກຳໄລປີຜ່ານມາຮອດປີ 2020 (i)	57,480,815,245	57,480,815,245
ອາກອນກຳໄລພາຍໃນປີ 2021 (ii)	16,661,197,099	16,661,197,099
ອາກອນກຳໄລພາຍໃນປີ 2022 (iii)	9,799,578,881	13,126,318,809
ອາກອນກຳໄລພາຍໃນປີ 2023 (iv)	34,103,685,477	34,103,685,477
ອາກອນກຳໄລພາຍໃນໄລຍະປັດຈຸບັນ (v)	31,085,328,951	-
	149,130,605,653	**121,372,016,630**

(i) ຈົນເຖິງປີ 2020, ມູນຄ່າສ່ວນຕ່າງລະຫວ່າງໜີ້ຕ້ອງສົ່ງອາກອນກຳໄລ ແລະ ມູນຄ່າຮັບຮູ້ໃນເອກະສານລາຍງານການເງິນ ແລະ ອີງຕາມບົດບັນທຶກການກວດກາຂອງເຈົ້າໜ້າທີ່ສ່ວຍສາອາກອນ ກ່ຽວກັບຜົນໄດ້ຮັບຈາກການກວດກາ ສຳລັບປີ 2015 – 2020 ລວມມູນຄ່າ 57.5 ຕື້ກີບ.

(ii) ໃນປີ 2021 ບໍລິສັດມີສ່ວນຕ່າງຂອງອາກອນກຳໄລທີ່ຕ້ອງຈ່າຍລະຫວ່າງຈຳນວນທີ່ຮັບຮູ້ໃນລາຍງານການເງິນ ແລະ ບົດສະໜຸບການກວດກາອາກອນ ໂດຍອີງໃສ່ບົດລາຍງານການກວດກາອາກອນໂດຍອີງການສ່ວຍສາອາກອນກ່ຽວກັບຜົນການກວດສອບພາສີສຳລັບປີ 2021 ແມ່ນ 16.6 ຕື້ກີບ.

(iii) ໃນປີ 2022, ສ່ວນຕ່າງຂອງກຳໄລຄ້າງຈ່າຍລະຫວ່າງມູນຄ່າທີ່ຮັບຮູ້ເອກະສານລາຍງານການເງິນ ແລະ ບົດສະໜຸບການກວດກາອາກອນໂດຍອີງໃສ່ບົດລາຍງານການກວດກາອາກອນຂອງເຈົ້າໜ້າທີ່ສ່ວຍສາອາກອນກ່ຽວກັບຜົນການກວດກາອາກອນສຳລັບປີ 2022 ແມ່ນ 13.1 ຕື້ກີບ. ໃນເດືອນທັນວາ 2023, ເຈົ້າໜ້າທີ່ສ່ວຍສາອາກອນໄດ້ດຳເນີນການກວດກາເຊິ່ງລາຍຈ່າຍອາກອນກຳໄລຂອງບໍລິສັດສຳລັບປີສິ້ນສຸດ 2022 ແມ່ນ 4.3 ຕື້ກີບ. ບໍລິສັດໄດ້ມີການຊຳລະເພີ່ມເຕີມໃນເດືອນມັງກອນ 2024.

(iv) ໃນປີ 2023, ສ່ວນຕ່າງຂອງໜີ້ຕ້ອງສົ່ງອາກອນກຳໄລລະຫວ່າງເອກະສານລາຍງານການເງິນ ແລະ ບໍລິສັດແຈ້ງເສຍເກີດຂຶ້ນພາຍໃນປີ 2023 ແມ່ນ 34.1 ຕື້ກີບ.

ໃນເດືອນມິຖຸນາ 2024 ບໍລິສັດມີບົດສະໜຸບການກວດກາອາກອນ, ບົດສະໜຸບການກວດກາອາກອນດັ່ງກ່າວມີ ໜີ້ຕ້ອງສົ່ງອາກອນກຳໄລສຳລັບປີສິ້ນສຸດ 2023 ແມ່ນ 3.5 ຕື້ກີບ. ບໍລິສັດຍັງບໍ່ໄດ້ຊຳລະຈຳນວນດັ່ງກ່າວ.

(v) ໃນປີ 2024, ໜີ້ຕ້ອງສົ່ງອາກອນກຳໄລຂອງບໍລິສັດທີ່ເກີດຂຶ້ນພາຍໃນ 6 ເດືອນປີ 2024 ແມ່ນ 31 ຕື້ກີບ. ພາຍໃນປີ 2024, ບໍລິສັດຍັງບໍ່ໄດ້ຖືກກວດກາຈາກເຈົ້າໜ້າທີ່ສ່ວຍສາອາກອນ.

ອາກອນບໍລິສັດໄດ້ຍື່ນກ່ອນໜ້ານີ້ແມ່ນຍັງສາມາດຖືກກວດສອບຄືນຫຼັງຈາກເຈົ້າໜ້າທີ່ສ່ວຍສາອາກອນ ເນື່ອງຈາກວ່າກົດໝາຍ ແລະ ກົດລະບຽບກ່ຽວກັບອາກອນປັດຈຸບັນແມ່ນຍັງມີຄວາມສ່ຽງໃນການຕີຄວາມໝາຍຄືນ. ມູນຄ່າທີ່ລາຍງານໃນເອກະສານລາຍງານການເງິນສາມາດປ່ຽນແປງໃນພາຍຫຼັງຕາມການກຳນົດຂັ້ນສຸດທ້າຍຂອງເຈົ້າໜ້າທີ່ສ່ວຍສາອາກອນ.

20. ເງິນກູ້ຢືມ

ເງິນກູ້ຢືມກາງປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ມີດັ່ງນີ້:

ຜູ້ໃຫ້ກູ້ຢືມ	*30 ມິຖຸນາ 2024* *ກີບ*	*31 ທັນວາ 2023* *ກີບ*
Kasikornthai Bank Sole Limited	19,000,000,000	-
RHB Bank Lao Sole Co., Ltd	20,512,487,642	22,307,655,164
	39,512,487,642	**22,307,655,164**
ເຊິ່ງມີ:		
ສ່ວນທີ່ໝຸນວຽນ	*19,000,000,000*	-
ສ່ວນທີ່ບໍ່ໝຸນວຽນ	*20,512,487,642*	*22,307,655,164*

21. ອາກອນກຳໄລ

ອາກອນກຳໄລພາຍໃນປີ

ສ່ວນປະກອບຫຼັກຂອງລາຍຈ່າຍອາກອນກຳໄລກາງປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ແລະ ສຳລັບປີທີ່ສິ້ນສຸດ 30 ມິຖຸນາ 2023 ປະກອບມີ:

	ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 *ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023* *ກີບ*
ອາກອນກຳໄລໃນປີ:		
ອາກອນກຳໄລໃນປີ	50,723,477,831	48,904,282,233
ການດັດແກ້ອື່ນໆ	(19,638,148,880)	(19,728,967,629)
ລາຍຈ່າຍອາກອນກຳໄລທີ່ລາຍງານໃນໃບລາຍງານກຳໄລ ຫຼື ຂາດທຶນ	**31,085,328,951**	**29,175,314,604**

ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນສັກສິດນັບຕັ້ງແຕ່ວັນທີ 1 ມັງກອນ 2020, ບໍລິສັດທີ່ຈົດທະບຽນເຂົ້າຕະຫຼາດຫຼັກຊັບລາວເປັນໄລຍະເວລາ 4 ປີ ນັບຕັ້ງແຕ່ມື້ຈົດທະບຽນຈະນຳໃຊ້ອັດຕາ 13% ແລະ 20% ສຳລັບປີຖັດໄປ. ດັ່ງນັ້ນ, ອັດຕາອາກອນກຳໄລທີ່ຖືກນຳໃຊ້ໃນໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2024 ແມ່ນ 20% ແລະ ໄລຍະຫົກເດືອນຕົ້ນປີທີ່ສິ້ນສຸດ ວັນທີ 30 ມິຖຸນາ 2023 ແມ່ນ 13%.

ເນື່ອງຈາກກົດໝາຍ ແລະ ລະບຽບທາງດ້ານສ່ວຍສາອາກອນແມ່ນຖືກນຳໃຊ້ກັບລາຍການເຄື່ອນໄຫວຫຼາຍບໍລິສັດ ເຊິ່ງອາດຈະມີການຕີຄວາມໝາຍທີ່ແຕກຕ່າງກັນ, ມູນຄ່າທີ່ໄດ້ສະແດງຢູ່ໃນເອກະສານລາຍງານການເງິນອາດຈະຖືກປ່ຽນແປງຫຼັງຈາກມື້ໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

22. ກຳໄລຕໍ່ຮຸ້ນ

ພື້ນຖານຄິດໄລ່ກຳໄລຕໍ່ຮຸ້ນ ແມ່ນຄິດໄລ່ເງິນປັນຜົນຂອງກຳໄລສຳລັບໄລຍະຫົກເດືອນທ້າຍປີຫານໃຫ້ຈຳນວນຜູ້ຖືຮຸ້ນສາມັນ ດ້ວຍການເອົາຈຳນວນສະເລ່ຍຈຳນວນຮຸ້ນສາມັນທັງໝົດພາຍໄລຍະ.

ຕາຕະລາງຕໍ່ໄປນີ້ສະແດງໃຫ້ເຫັນລາຍຮັບ ແລະ ຂໍ້ມູນຂອງຮຸ້ນທີ່ໃຊ້ເຂົ້າໃນການຄິດໄລ່ຫາກຳໄລຕໍ່ຮຸ້ນ:

	30 ມິຖຸນາ 2024	*31 ທັນວາ 2023*
	ກີບ	*ກີບ*
ກຳໄລທີ່ປັນໃຫ້ສ່ວນຂອງຜູ້ຖືຮຸ້ນສາມັນ	167,532,060,202	293,165,317,964
ຈຳນວນຮຸ້ນສາມັນສະເລ່ຍທັງໝົດ	301,500,000	301,500,000
ກຳໄລຕໍ່ຮຸ້ນ	556	972

ການຄິດໄລ່ເງິນປັນຜົນໃນໄລຍະນີ້ບໍລິສັດແມ່ນບໍ່ໄດ້ນຳໃຊ້ຮູບແບບຮຸ້ນແປງສະພາບເພື່ອຄິດໄລ່ ແລະ ບໍ່ໄດ້ນຳສະເໜີພື້ນຖານ ການຄິດໄລ່ກຳໄລຕໍ່ຮຸ້ນແປງສະພາບ.

23. ທຶນຈົດທະບຽນຖອກແລ້ວ

23.1 ຮຸ້ນສາມັນ

	30 ມິຖຸນາ 2024		*31 ທັນວາ 2023*	
	ຈຳນວນຮຸ້ນ	*ມູນຄ່າ (ກີບ)*	*ຈຳນວນຮຸ້ນ*	*ມູນຄ່າ (ກີບ)*
ຮຸ້ນທີ່ໄດ້ຮັບອະນຸມັດ				
ຮຸ້ນທີ່ໄດ້ອອກ ແລະ ຖອກແລ້ວ				
ຮຸ້ນສາມັນ	301,500,000	30,150,000,000	301,500,000	30,150,000,000
ຍອດເຫຼືອທ້າຍປີ	**301,500,000**	**30,150,000,000**	**301,500,000**	**30,150,000,000**

ໃນວັນທີ 9 ກັນຍາ 2019, ບໍລິສັດໄດ້ຮັບໜັງສືຢັ້ງຢືນຜົນການອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ອອກໃຫ້ ໂດຍສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບລາວ. ເນື່ອງຈາກວ່າບໍລິສັດໄດ້ສຳເລັດຂັ້ນຕອນອອກ IPO ດ້ວຍການອອກ ຈຳນວນ 60,300,000 ຮຸ້ນ ໃນລາຄາໜ້າບັດ 100 ກີບ/ຮຸ້ນ ແລະ ມີລາຄາຂາຍມູນຄ່າ 2,700 ກີບ/ຮຸ້ນ ທີ່ໄດ້ອອກແລ້ວ.

ມູນຄ່າຂອງຮຸ້ນທັງໝົດຂອງບໍລິສັດຈຳນວນ 301,500,000 ຮຸ້ນ (ພາຍໃຕ້ຊື່ "LALCO") ຖືກຈົດທະບຽນຢ່າງເປັນທາງການ ໃນຕະຫຼາດຫຼັກຊັບ ນະວັນທີ 19 ສິງຫາ 2019. ມູນຄ່າໜ້າບັດຂອງແຕ່ລະຮຸ້ນແມ່ນ 100 ກີບ.

23. ທຶນຈົດທະບຽນຖອກແລ້ວ (ຕໍ່)

23.1 ຮຸ້ນສາມັນ (ຕໍ່)

ລາຍລະອຽດຜູ້ຖືຮຸ້ນຂອງບໍລິສັດມີດັ່ງນີ້:

	30 ມິຖຸນາ 2024		*31 ທັນວາ 2023*	
	ລວມ (ກີບ)	*ຈຳນວນຮຸ້ນ ສາມັນ*	*ລວມ (ກີບ)*	*ຈຳນວນຮຸ້ນ ສາມັນ*
O International Ltd. (i)	803,300,000	8,033,000	803,300,000	8,033,000
LALCO Holdings Pte Ltd. (ii)	23,617,480,000	236,174,800	23,617,480,000	236,174,800
Plumeria Investment Ltd (iii)	5,415,510,000	54,155,100	5,415,510,000	54,155,100
ຜູ້ລົງທຶນອື່ນໆ	313,710,000	3,137,100	313,710,000	3,137,100
	30,150,000,000	**301,500,000**	**30,150,000,000**	**301,500,000**

(i) O International Ltd ເປັນບໍລິສັດຈຳກັດໜ້ີສິນຕັ້ງຢູ່ໝູ່ເກາະເຄແມນ ຕາມໃບທະບຽນເລກທີ 293031 ອອກ ໃນເດືອນ ຕຸລາ ປີ 2014. ການດຳເນີນທຸລະກິດຫຼັກຂອງ O International Ltd ແມ່ນການລົງທຶນ, ອຸດສາຫະກຳ, ອະສັງຫາລິມະຊັບ ແລະ ການໃຫ້ຄຳປຶກສາ ແລະ ການບໍລິການທາງການເງິນ.

(ii) LALCO Holdings Pte Ltd. ເປັນບໍລິສັດຈຳກັດໜ້ີສິນຢູ່ໃນປະເທດສິງກະໂປ ຕາມໃບທະບຽນເລກທີ 201542276K ອອກໃນເດືອນ ທັນວາ ປີ 2015. ການດຳເນີນທຸລະກິດຫຼັກຂອງ LALCO Holdings Pte Ltd. ແມ່ນການບໍລິຫານ, ເທັກໂນໂລຢີ, ແລະ ສະໜອງການບໍລິການສະໜັບສະໜຸນທຸລະກິດ ແລະ ທຸລະກິດການ ລົງທຶນ.

(iii) Plumeria Investments Ltd. ເປັນບໍລິສັດຈຳກັດໜ້ີສິນຕັ້ງຢູ່ໝູ່ເກາະເຄແມນ ຕາມໃບທະບຽນເລກທີ 320262 ອອກໃນເດືອນ ກຸມພາ ປີ 2015. ການດຳເນີນທຸລະກິດຫຼັກຂອງ Plumeria Investments Ltd ແມ່ນການ ລົງທຶນ ເພື່ອຖືຄອງຮຸ້ນ ແລະ ການສະໜອງທີ່ປຶກສາ ແລະ ການບໍລິການທາງດ້ານການເງິນ.

23.2 ສ່ວນເພີ່ມມູນຄ່າຮຸ້ນ

ສ່ວນເພີ່ມມູນຄ່າຮຸ້ນເກີດຈາກການອອກຮຸ້ນໃຫ້ແກ່ມວນຊົນຄັ້ງທຳອິດ (IPO) ຈຳນວນ 155,497,646,314 ກີບ, ແມ່ນ ສ່ວນຕ່າງລະຫວ່າງລາຄາຈຳໜ່າຍ (162,810,000,000 ກີບ) ແລະ ມູນຄ່າໜ້າບັດຂອງຮຸ້ນທັ້ງໝົດ (6,030,000,000 ກີບ) ຫຼັງຈາກຫັກຕົ້ນທຶນໃນການອອກຮຸ້ນ (1,282,353,686 ກີບ).

24. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ລວມເອົາທຸກໆລາຍການເຄື່ອນໄຫວທີ່ໄດ້ດຳເນີນງານກັບພາກສ່ວນອື່ນໆ ເຊິ່ງ ມີສາຍພົວພັນກັບບໍລິສັດ, ພາກສ່ວນທີ່ຈະກ່ຽວຂ້ອງກັບບໍລິສັດຖ້າຫາກວ່າ:

(ກ) ແບບທາງກົງ ຫຼື ແບບທາງອ້ອມ ໂດຍຜ່ານໜຶ່ງ ຫຼື ຫຼາຍສື່ກາງ, ເຊິ່ງພາກສ່ວນດັ່ງກ່າວ:
- ມີການຄວບຄຸມຖືກຄວບຄຸມໂດຍ, ຫຼື ຢູ່ພາຍໃຕ້ການຄວບຄຸມໂດຍ ບໍລິສັດ (ໃນນີ້ລວມມີ ບໍລິສັດແມ່, ບໍລິສັດ ໃນເຄືອ ແລະ ບໍລິສັດໃນເຄືອລາຍຍ່ອຍ);
- ມີຜົນປະໂຫຍດນຳກັນກັບບໍລິສັດ ເຊິ່ງສິ່ງຜົນກະທົບທີ່ໃຫຍ່ຫຼວງຕໍ່ກັບ ບໍລິສັດ; ຫຼື
- ມີການຄວບຄຸມຮ່ວມກັບບໍລິສັດ;

(ຂ) ພາກສ່ວນດັ່ງກ່າວແມ່ນເປັນບໍລິສັດຮ່ວມທຶນ ເຊິ່ງບໍລິສັດເປັນຜູ້ຮ່ວມທຶນ;
(ຄ) ພາກສ່ວນດັ່ງກ່າວແມ່ນສະມາຊິກຄົນສຳຄັນຂອງ ຜູ້ບໍລິຫານຫຼັກຂອງ ບໍລິສັດ ຫຼື ບໍລິສັດແມ່;
(ງ) ພາກສ່ວນດັ່ງກ່າວແມ່ນສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນສະເພາະທີ່ໄດ້ກ່າວເຖິງໃນຂໍ້ (ກ) ຫຼື (ຄ);
(ຈ) ພາກສ່ວນດັ່ງກ່າວກໍ່ແມ່ນຜູ້ທີ່ຄວບຄຸມ ບໍລິສັດ, ມີສ່ວນຮ່ວມໃນການຄວບຄຸມ ຫຼື ມີອິດທິພົນອັນໃຫຍ່ຫຼວງ, ຫຼື ມີ ສິດທິອຳນາດໃນການອອກສຽງສ່ວນໃຫຍ່ຕໍ່ໜ່ວຍງານທີ່ດຳເນີນທຸລະກິດຢູ່ໂດຍທາງກົງ ຫຼື ທາງອ້ອມ ທຸກໆພາກສ່ວນ ທີ່ໄດ້ກ່າວເຖິງໃນຂໍ້ (ຄ) ຫຼື (ງ); ຫຼື
(ສ) ພາກສ່ວນດັ່ງກ່າວທີ່ມີແຜນໄດ້ຮັບຜົນປະໂຫຍດພາຍຫຼັງອອກວຽກສຳລັບພະນັກງານຂອງບໍລິສັດ ຫຼື ໜ່ວຍງານອື່ນໆທີ່ ມີສາຍພົວພັນກັບ ບໍລິສັດ.

ພາກສ່ວນທີ່ກ່ຽວຂ້ອງ	*ສາຍພົວພັນ*
► O International Ltd.	ຜູ້ຖືຮຸ້ນ
► Pawn shop number one individual Enterprise	ບໍລິສັດໃນເຄືອ
► Lao Thongkeo leasing Company Limited	ເປັນເຈົ້າຂອງໂດຍຫົວໜ້າຝ່າຍປະຕິບັດການ
► Lalco Trading.,Ltd	ເປັນເຈົ້າຂອງໂດຍຜູ້ອຳນວຍການ

24. ບັນດາລາຍການພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

24.1 *ການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ*

ພາກສ່ວນທີ່ກ່ຽວຂ້ອງ	*ລາຍການເຄື່ອນໄຫວ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2024 ກີບ*	*ສຳລັບໄລຍະຫົກເດືອນ ຕົ້ນປີທີ່ສິ້ນສຸດວັນທີ 30 ມິຖຸນາ 2023 ກີບ*
Pawn Shop Number One Individual Enterprise	ການຈ່າຍເງິນໃນນາມຂອງ ພາກສ່ວນທີ່ກ່ຽວຂ້ອງ	12,496,671,134	74,764,133,671
O International Ltd.	ເງິນລ່ວງໜ້າໃຫ້ພາກສ່ວນທີ່ ກ່ຽວຂ້ອງ	62,611,480,737	79,818,964,444
Lalco Trading.,Ltd	ການຈ່າຍເງິນໃນນາມຂອງ ພາກສ່ວນທີ່ກ່ຽວຂ້ອງ	(969,394,000)	-

24.2 *ຍອດເຫຼືອຈາກສ່ວນທີ່ກ່ຽວຂ້ອງ*

24.2.1 *ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍເລກທີ 17)*

	30 ມິຖຸນາ 2024 ກີບ	*31 ທັນວາ 2023 ກີບ*
Pawn Shop Number One Individual Enterprise	206,886,298,089	194,389,626,955
O International Ltd.	286,287,815,292	223,676,334,555
Lalco trading., Ltd .	14,300,134,998	15,269,528,998
	507,474,248,379	**433,335,490,508**

24.2.2 *ເງິນລ່ວງໜ້າໃຫ້ພາກສ່ວນທີ່ກ່ຽວຂ້ອງ*

	30 ມິຖຸນາ 2024 ກີບ	*31 ທັນວາ 2023 ກີບ*
Lao Thongkeo Leasing Company Limited	1,316,180,748	1,316,180,748
	1,316,180,748	**1,316,180,748**

25. ນະໂຍບາຍບໍລິຫານຄວາມສ່ຽງ

ພາກສະໜໍ

ຄວາມສ່ຽງໝາຍເຖິງຄວາມສ່ຽງໃນຕໍ່ທີ່ເກີດຂຶ້ນກັບກິດຈະກຳຂອງບໍລິສັດ ໂດຍຜ່ານຕໍ່ຊຶ້ບອກທີ່ຊັດເຈນ, ຜ່ານການວັດແທກ ແລະ ການຄວບຄຸມ, ຂອບເຂດຄວາມສ່ຽງ ແລະ ການຄຸ້ມຄອງອື່ນໆ. ການບໍລິຫານຄວາມສ່ຽງ ແມ່ນສິ່ງທີ່ສຳຄັນຕໍ່ ຄວາມສາມາດ ສ້າງກຳໄລຢ່າງຕໍ່ເນື່ອງຂອງບໍລິສັດ ແລະ ພະນັກງານແຕ່ລະຄົນພາຍໃນບໍລິສັດ ແມ່ນຕ້ອງຮັບຜິດຊອບຕໍ່ຄວາມສ່ຽງທີ່ເກີດຂຶ້ນ ເຊິ່ງ ກ່ຽວຂ້ອງກັບໜ້າທີ່ຂອງຕົນ.

ບໍລິສັດມີຄວາມສ່ຽງທາງດ້ານສິນເຊື່ອ, ຄວາມສ່ຽງສະພາບຄ່ອງ ແລະ ຄວາມສ່ຽງທາງດ້ານຕະຫຼາດ ແລະ ຫຼັງຈາກນັ້ນໄດ້ແບ່ງອອກ ເປັນກຸ່ມຄວາມສ່ຽງຍ່ອຍຄື: ຄວາມສ່ຽງການຄ້າ ແລະ ຄວາມສ່ຽງທີ່ບໍ່ແມ່ນການຄ້າ. ນອກນັ້ນ, ບໍລິສັດຍັງມີຄວາມສ່ຽງອື່ນໆອີກທີ່ ເກີດຈາກການດຳເນີນງານ.

ຂະບວນການໃນການຄຸ້ມຄອງຄວາມສ່ຽງເອກະລາດ ບໍ່ໄດ້ລວມເອົາຄວາມສ່ຽງທຸລະກິດ ເຊັ່ນ: ການປ່ຽນແປງຂອງສະພາບແວດ ລ້ອມ, ເຕັກໂນໂລຢີ ແລະ ອຸດສາຫະກຳ. ນະໂຍບາຍຂອງບໍລິສັດແມ່ນເພື່ອຄວບຄຸມຄວາມສ່ຽງທຸລະກິດຜ່ານຂັ້ນຕອນ ແລະ ແຜນ ຍຸດທະສາດຂອງບໍລິສັດ.

ໂຄງສ້າງຂອງການຄຸ້ມຄອງຄວາມສ່ຽງ

ສະພາບໍລິຫານແມ່ນມີຄວາມຮັບຜິດຊອບສຳລັບການບໍລິຫານຄວາມສ່ຽງໂດຍລວມ ແລະ ສຳລັບການອະນຸມັດກົນລະຍຸດ ແລະ ຫຼັກການບໍລິຫານຄວາມສ່ຽງ.

ສະພາໄດ້ແຕ່ງຕັ້ງພະນັກງານຄວບຄຸມຄວາມສ່ຽງເຊິ່ງຮັບຜິດຊອບກ່ຽວກັບການຄວບຄຸມການຈັດການຄວາມສ່ຽງໂດຍລວມຂອງ ບໍລິສັດ.

ພະນັກງານຄວບຄຸມຄວາມສ່ຽງມີຄວາມຮັບຜິດຊອບໃນການພັດທະນາກົນລະຍຸດ ແລະ ຫຼັກການໂດຍລວມ, ຂອບເຂດວຽກ, ນະໂຍບາຍ ແລະ ຂອບເຂດ. ພະນັກງານຄວບຄຸມຄວາມສ່ຽງແມ່ນຮັບຜິດຊອບໃນການຕັດສິນໃຈ ແລະ ຄວບຄຸມຄວາມສ່ຽງ ແລະ ລາຍງານໃຫ້ສະພາບໍລິຫານ.

26. ຄວາມສ່ຽງທາງດ້ານເງິນຕາ

ຄວາມສ່ຽງທາງດ້ານເງິນຕາແມ່ນຄວາມສ່ຽງໂດຍກົງຕໍ່ບໍລິສັດເນື່ອງຈາກການປ່ຽນແປງອັດຕາແລກປ່ຽນເງິນຕາຕ່າງປະເທດທີ່ມີຜົນກະທົບຕໍ່ການແລກປ່ຽນເງິນຕາຕ່າງປະເທດຂອງບໍລິສັດ. ອີງໃສ່ລະບົບການປະເມີນຄວາມສ່ຽງພາຍໃນ ແລະ ລະບຽບການຂອງ ທຫລ, ທາງບໍລິສັດໄດ້ກຳໜົດຂອບເຂດຂອງແຕ່ລະສະກຸນເງິນ ພະນັກງານມີໜ້າທີ່ຕິດຕາມໃນແຕ່ລະມື້ ເພື່ອຮັບປະກັນວ່າສະຖານະພາບຖືກຮັກສາໄວ້ພາຍໃນຂອບເຂດທີ່ກຳນົດໄວ້. ການແປງປັນຊັບສິນ ແລະ ໜີ້ສິນທີ່ໄດ້ຖືກປ່ຽນເປັນ ກີບ ນະວັນທີ 30 ມິຖຸນາ 2024 ມີດັ່ງນີ້:

	ໂດລາ ທຽບເທົ່າກີບ	*ບາດ ທຽບເທົ່າກີບ*	*ເຢນ ທຽບເທົ່າກີບ*	*ລວມ ທຽບເທົ່າກີບ*
ຊັບສິນ				
ເງິນສົດ ແລະ ທຽບເທົ່າເງິນສົດ	197,852,285,306	1,455,155,398	171,192,434	199,478,633,138
ເງິນຝາກຢູ່ທະນາຄານ	28,968,769,818	-	-	28,968,769,818
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	1,023,816,381,454	181,473,124,254	-	1,205,289,505,708
ຊັບສິນທາງການເງິນອື່ນໆ	413,315,153,966	12,940,314,632	-	426,255,468,598
ລວມຊັບສິນ	**1,663,952,590,544**	**195,868,594,284**	**171,192,434**	**1,859,992,377,262**
ຄວາມສ່ຽງສຸດທິ	**1,663,952,590,544**	**195,868,594,284**	**171,192,434**	**1,859,992,377,262**

(*) ບໍ່ລວມເງິນແຮ ຄ່າເສື່ອມມູນຄ່າ

ຕັ້ງສົມມຸດຖານວ່າຄວາມແຕກຕ່າງອື່ນໆແມ່ນບໍ່ປ່ຽນແປງ, ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນຄວາມອ່ອນໄຫວຂອງກຳໄລກ່ອນອາກອນຂອງບໍລິສັດໄດ້ມີການປ່ຽນແປງທີ່ເກີດຂຶ້ນໃນລະດັບທີ່ເໝາະສົມຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ. ດັ່ງນັ້ນ, ຄວາມສ່ຽງທີ່ເກີດຈາກການປ່ຽນແປງອັດຕາແລກປ່ຽນເງິນຕາຕ່າງປະເທດຂອງບໍລິສັດແມ່ນບໍ່ຈຳເປັນຕ້ອງພິຈາລະນາ.

	ອັດຕາແລກປ່ຽນເພີ່ມຂຶ້ນ 7%	ອັດຕາແລກປ່ຽນຫຼຸດລົງ 7%
ໂດລາ	116,476,681,338	(116,476,681,338)
ບາດ	13,710,801,600	(13,710,801,600)
ເຢນ	11,983,470	(11,983,470)
ລວມ	**130,199,466,408**	**(130,199,466,408)**

27. ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ຄວາມສ່ຽງດ້ານອັດຕາດອກເບ້ຍເກີດຂຶ້ນຈາກການປ່ຽນແປງອັດຕາດອກເບ້ຍເຊິ່ງຈະມີຜົນຕໍ່ລາຍໄດ້ໃນອະນາຄົດ ຫຼື ມູນຄ່າຍຸດຕິທຳຂອງເຄື່ອງມືທາງການເງິນ. ບໍລິສັດໄດ້ຮັບຄວາມສ່ຽງຈາກອັດຕາດອກເບ້ຍຈາກການຄິດໄລ່ອັດຕາດອກເບ້ຍຕາມເວລາຂອງມູນຄ່າຊັບສິນ ແລະ ໜີ້ສິນບໍ່ກົງກັນ. ບໍລິສັດຈັດການຄວາມສ່ຽງນີ້ໂດຍຄິດໄລ່ໄລຍະເວລາຂອງຊັບສິນ ແລະ ໜີ້ສິນໃຫ້ຕົງກັນໂດຍອີງໃສ່ຍຸດທະສາດການຄຸ້ມຄອງຄວາມສ່ຽງ. ຕາຕະລາງຂ້າງລຸ່ມປະເມີນຄວາມສ່ຽງອັດຕາດອກເບ້ຍລະຫວ່າງຊັບສິນທາງດ້ານການເງິນ ແລະ ໜີ້ສິນທາງດ້ານການເງິນຂອງບໍລິສັດ. ບໍລິສັດນຳສະເໜີຊັບສິນ ແລະ ໜີ້ສິນຕາມມູນຄ່າໜ້າບັດ ແລະ ຈັດປະເພດໂດຍວັນທີປ່ຽນແປງຂອງອັດຕາດອກເບ້ຍ ຫຼື ມື້ຄົບກຳນົດທີ່ໃກ້ຄຽງທີ່ສຸດ:

	ຕາຕະລາງຕາມໄລຍະເວລາ					
	ລວມ	*ຕ່ຳກວ່າ 3 ເດືອນ*	*ຈາກ 3 ຫາ 12 ເດືອນ*	*ຈາກ 1 ຫາ 5 ປີ*	*ຫຼາຍກວ່າ 5 ປີ*	*ບໍ່ມີດອກເບ້ຍ*
	ກີບ	*ກີບ*	*ກີບ*	*ກີບ*	*ກີບ*	*ກີບ*
ຊັບສິນ						
ເງິນສົດ ແລະ ທຽບເທົ່າເງິນສົດ	202,288,823,255	2,274,694,840	-	-	-	200,014,128,415
ເງິນຝາກຢູ່ທະນາຄານ	30,937,669,818	-	28,968,769,818	-	-	1,968,900,000
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	1,440,321,830,769	201,557,436,824	563,276,243,526	675,488,150,419	-	-
ຊັບສິນທາງການເງິນອື່ນໆ	515,579,119,959	-	-	-	515,579,119,959	-
ຊັບສິນລວມ	**2,189,127,443,801**	**203,832,131,664**	**592,245,013,344**	**675,488,150,419**	**515,579,119,959**	**201,983,028,415**
ໜີ້ສິນ						
ເງິນກູ້ຢືມ	39,512,487,642	8,000,000,000	11,000,000,000	20,512,487,642	-	-
ໜີ້ສິນທາງການເງິນອື່ນໆ	2,635,219,000	2,635,219,000	-	-	-	-
ໜີ້ສິນລວມ	**42,147,706,642**	**10,635,219,000**	**11,000,000,000**	**20,512,487,642**	**-**	**-**
ຊ່ອງຫວ່າງຄວາມອ່ອນໄຫວຂອງດອກເບ້ຍ ທາງດ້ານໜີ້ສິນສຸດທິ	**2,146,979,737,159**	**193,196,912,664**	**581,245,013,344**	**654,975,662,777**	**515,579,119,959**	**201,983,028,415**

(*) ບໍ່ລວມເງິນແຮ່ຄ່າເສື່ອມມູນຄ່າ

ຕັ້ງຂໍ້ສົມມຸດຖານວ່າຕົວແປອື່ນໆບໍ່ມີການປ່ຽນແປງ, ການປ່ຽນແປງອັດຕາດອກເບ້ຍນະວັນທີ 30 ມິຖຸນາ 2024 ທີ່ມີຜົນກະທົບຕໍ່ກຳໄລກ່ອນອາກອນຕະຫຼອດໄລຍະ 12 ເດືອນຕໍ່ໜ້າຂອງບໍລິສັດຕາມວັນທີລາຍງານດັ່ງຕໍ່ໄປນີ້:

ເພີ່ມຂຶ້ນ/(ຫຼຸດລົງ) ພື້ນຖານຄະແນນ	*ຄວາມອ່ອນໄຫວຂອງກຳໄລກ່ອນອາກອນ*
+ 100 bps	3,870,141,786
- 100 bps	(3,870,141,786)

28. ຄວາມສ່ຽງສະພາບຄ່ອງ

ຄວາມສ່ຽງດ້ານສະພາບຄ່ອງໝາຍເຖິງຄວາມສ່ຽງທີ່ບໍລິສັດບໍ່ສາມາດປະຕິບັດຕາມພັນທະໃນການຈ່າຍເງິນເມື່ອຮອດກຳນົດເວລາຊຳລະໃນກໍລະນີປົກກະຕິ ແລະ ກໍລະນີພິເສດ. ຕາຕະລາງລຸ່ມນີ້ສະຫຼຸບກະແສເງິນຊັບສິນ ແລະ ໜີ້ສິນທາງການເງິນຂອງບໍລິສັດໃນມື້ລາຍງານ:

	ມູນຄ່າຕາມບັນຊີ ກີບ	*ຕ່ຳກວ່າ 3 ເດືອນ ກີບ*	*ຈາກ 3 ຫາ 12 ເດືອນ ກີບ*	*ຈາກ 1 ຫາ 5 ປີ ກີບ*	*ຫຼາຍກວ່າ 5 ປີ ກີບ*
ຊັບສິນ					
ເງິນສົດ ແລະ ທຽບເທົ່າເງິນສົດ	202,288,823,255	202,288,823,255	-	-	-
ເງິນຝາກຢູ່ທະນາຄານ	30,937,669,818	1,968,900,000	28,968,769,818	-	-
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	1,440,321,830,769	201,557,436,824	563,276,243,526	675,488,150,419	-
ຊັບສິນທາງການເງິນອື່ນໆ	515,579,119,959	-	-	-	515,579,119,959
ຊັບສິນລວມ	**2,189,127,443,801**	**405,815,160,079**	**592,245,013,344**	**675,488,150,419**	**515,579,119,959**
ໜີ້ສິນ					
ເງິນກູ້ຢືມ	39,512,487,642	8,000,000,000	11,000,000,000	20,512,487,642	-
ໜີ້ສິນທາງການເງິນອື່ນໆ	2,635,219,000	2,635,219,000	-	-	-
ໜີ້ສິນລວມ	**42,147,706,642**	**10,635,219,000**	**11,000,000,000**	**20,512,487,642**	**-**
ຊ່ອງຫວ່າງຄວາມອ່ອນໄຫວຂອງສະພາບຄ່ອງ ສຸດທິ	**2,146,979,737,159**	**395,179,941,079**	**581,245,013,344**	**654,975,662,777**	**515,579,119,959**

(*) ບໍ່ລວມເງິນແຮຄ່າເສື່ອມມູນຄ່າ

ບໍລິສັດໄດ້ປະເມີນຄວາມສ່ຽງທີ່ມີຕໍ່ການຊຳລະໜີ້ແລ້ວສະຫຼຸບໄດ້ວ່າຄວາມສ່ຽງຍັງຢູ່ໃນລະດັບຕ່ຳ. ບໍລິສັດມີຄວາມສາມາດເຂົ້າເຖິງແຫຼ່ງທຶນທີ່ຫຼາກຫຼາຍ ແລະ ສາມາດຊຳລະຄືນຕາມກຳນົດ 12 ເດືອນ.

29. ຄວາມສ່ຽງທາງດ້ານສິນເຊື່ອ

ຄວາມສ່ຽງດ້ານສິນເຊື່ອແມ່ນຄວາມສ່ຽງທີ່ອາດເຮັດໃຫ້ບໍລິສັດຂາດທຶນ ເນື່ອງມາຈາກລູກຄ້າ ແລະ ຄູ່ສັນຍາບໍ່ສາມາດປະຕິບັດຕາມພາລະຜູກພັນສັນຍາ. ບໍລິສັດມີການຈັດການ ແລະ ຄວບຄຸມຄວາມສ່ຽງທາງດ້ານສິນເຊື່ອ ໂດຍການກຳນົດຂໍ້ຈຳກັດຂອງຄວາມສ່ຽງທີ່ຍອມຮັບໄດ້ຂອງຄູ່ສັນຍາ ແລະ ໂດຍການຕິດຕາມຄວາມສ່ຽງທີ່ກ່ຽວຂ້ອງກັບຂໍ້ຈຳກັດດັ່ງກ່າວ.

ຄວາມສ່ຽງດ້ານສິນເຊື່ອຈາກການຄ້າເຫຼືອກັບບໍລິສັດແມ່ນຄຸ້ມຄອງໂດຍພະແນກຄັງເງິນຂອງບໍລິສັດຕາມນະໂຍບາຍຂອງບໍລິສັດ. ການລົງທຶນຂອງກອງທຶນເກີນດຸນແມ່ນເຮັດກັບຄູ່ສັນຍາທີ່ໄດ້ອະນຸມັດ ແລະ ຢູ່ໃນຂອບເຂດສິນເຊື່ອທີ່ມອບໃຫ້ແຕ່ລະຄູ່ຮ່ວມສັນຍາ. ຂອບເຂດຈຳກັດແມ່ນຖືກກຳນົດເພື່ອຫຼຸດຜ່ອນຄວາມຮັດກຸມຂອງຄວາມສ່ຽງ ແລະ ດັ່ງນັ້ນຈຶ່ງຫຼຸດຜ່ອນການຂາດທຶນທາງດ້ານການເງິນໂດຍຜ່ານຄວາມລົ້ມເຫຼວທີ່ເປັນໄປໄດ້ຂອງຄູ່ສັນຍາໃນການຊຳລະເງິນ.

ບໍລິສັດໄດ້ສ້າງຕັ້ງຂັ້ນຕອນການກວດກາຄຸນນະພາບສິນເຊື່ອເພື່ອລະບຸການປ່ຽນແປງທີ່ເປັນໄປໄດ້ໃນຄວາມໜ້າເຊື່ອຖືຂອງຄູ່ສັນຍາ. ຂັ້ນຕອນການກວດກາຄຸນນະພາບສິນເຊື່ອມີວັດຖຸປະສົງເພື່ອໃຫ້ບໍລິສັດສາມາດປະເມີນການສູນເສຍທີ່ອາດຈະເກີດຂຶ້ນທີ່ເປັນຜົນມາຈາກຄວາມສ່ຽງທີ່ຈະເກີດຂຶ້ນ ແລະ ຕ້ອງດຳເນີນການແກ້ໄຂ.

29.1 ການປະເມີນການເສື່ອມມູນຄ່າ

ເອກະສານອ້າງອີງຂ້າງລຸ່ມນີ້ສະແດງໃຫ້ເຫັນບ່ອນທີ່ການປະເມີນຄວາມບົກພ່ອງ ແລະ ວິທີການວັດແທກຂອງບໍລິສັດໄດ້ຖືກກຳນົດໄວ້ໃນບົດລາຍງານນີ້. ເຊິ່ງຄວນຈະອ່ານພ້ອມກັບ ການສະຫຼຸບນະໂຍບາຍການບັນຊີທີ່ສຳຄັນ.

ເພື່ອນຳໃຊ້ວິທີການຄາດຄະເນໜີ້ເສຍສຳລັບການຮັບຮູ້ໜີ້ເສຍຂອງຄ່າເສື່ອມຊັບສິນທາງການເງິນສຳລັບເອກະສານລາຍງານການເງິນ, ບໍລິສັດໄດ້ພັດທະນາວິທີການດ້ວຍຕົນເອງໃນການຄິດໄລ່ໜີ້ເສຍທີ່ຄາດວ່າຈະເກີດຂຶ້ນ. ວິທີການດັ່ງກ່າວເປັນການລວບລວມຂໍ້ມູນທີ່ຜ່ານມານັບຕັ້ງແຕ່ບໍລິສັດສ້າງຕັ້ງ, ບັນດາເງື່ອນໄຂປັດຈຸບັນ ແລະ ການຄາດຄະເນຂອງເງື່ອນໄຂສະພາບເສດຖະກິດໃນອະນາຄົດ. ອີງຕາມການທົດສອບ, ການນຳໃຊ້ຂໍ້ມູນທີ່ຜ່ານມາສຳລັບວິທີການດັ່ງກ່າວຄວນມີການຕິດຕາມຜາຍໃນໄລຍະ 5 ຫາ 7 ປີເພື່ອໃຫ້ແນ່ໃຈວ່າ ການວິເຄາະສະຖິຕິດັ່ງກ່າວສາມາດນຳໃຊ້ໄດ້. ເຖິງຢ່າງໃດກໍຕາມ IFRS 9 ເປັນພຽງແຕ່ຂໍ້ກຳນົດໃຫ້ນຳໃຊ້ ECL ໃນການວັດແທກທີ່ສະແດງເຖິງຂໍ້ມູນທີ່ສົມເຫດສົມຜົນ ແລະ ຮອງຮັບໄດ້ເຊິ່ງຫາໄດ້ໂດຍຕ້ອງບໍ່ນຳໃຊ້ຄ່າໃຊ້ຈ່າຍ ຫຼື ຄວາມພະຍາຍາມທີ່ສູງເກີນໄປນະວັນທີຂອງບົດລາຍງານ, ບໍລິສັດໄດ້ນຳໃຊ້ຂໍ້ມູນເກົ່າທີ່ຜ່ານມາ ແລະ ຈະປັບປຸງວິທີການດັ່ງກ່າວໃນອະນາຄົດ.

ຄວາມໝາຍຂອງການຜິດນັດຊຳລະ

ບໍລິສັດພິຈາລະນາເຄື່ອງມືການເງິນແບບທີ່ຜິດນັດຊຳລະ ແລະ ຫັນເປັນຂັ້ນທີ 3 (ຄ່າເສື່ອມສິນເຊື່ອ) ສຳລັບການຄິດໄລ່ ECL ໃນທຸກໆກໍລະນີ ເມື່ອຜູ້ກູ້ຢືມກາຍນັດຊຳລະ 90 ວັນຕາມສັນຍາ.

29. ຄວາມສ່ຽງທາງດ້ານສິນເຊື່ອ (ຕໍ່)

29.1 *ການປະເມີນການເສື່ອມມູນຄ່າ* (ຕໍ່)

ຂັ້ນຕອນການຄາດຄະເນຄວາມເປັນໄປໄດ້ຂອງການຜິດນັດຊຳລະ

ບໍລິສັດໄດ້ນຳໃຊ້ເງື່ອນໄຂຂອງມື້ຜິດນັດຊຳລະ ເພື່ອຈັດອັນດັບລູກຄ້າໃນການກະກຽມໝວດໝູ່ຂໍ້ມູນສຳລັບການຄາດຄະເນ PD. ອີງຕາມຂໍ້ມູນທີ່ມີໃນປີທີ່ມີການດຳເນີນງານ, ບໍລິສັດໄດ້ຄາດຄະເນວ່າ PD ສຳລັບແຕ່ລະກຸ່ມຂອງລູກຄ້າ, ຫຼັງຈາກນັ້ນ ຈຶ່ງ ລວບລວມຂໍ້ມູນທີ່ຄາດວ່າຈະເກີດຂຶ້ນລ່ວງໜ້າ ເພື່ອນຳໃຊ້ໃນ PDs ໃນການຄິດໄລ່ພາຍໃຕ້ຮູບແບບ ECL ຂອງ IFRS 9.

ຜົນຂອງອັດຕາ PDs ທີ່ບໍລິສັດນຳໃຊ້ໜີ້ຕ້ອງຮັບສຳລັບສັນຍາເຊົ່າຊື້ມີດັ່ງລຸ່ມນີ້:

ກຸ່ມ (ຈຳນວນມື້ຜິດນັດຊຳລະ ("DPD"))	*ຂັ້ນທີ*	*ລະດັບ PD ຂອງ 12 ເດືອນ*
0 DPD	ຂັ້ນທີ 1	2.64% - 23.64%
1 - 89 DPD	ຂັ້ນທີ 2	16.43% - 58.06%
90+ DPD	ຂັ້ນທີ 3	100.00% - 100.00%

ຍອດໜີ້ເມື່ອຜິດນັດຊຳລະ

ຍອດໜີ້ເມື່ອຜິດນັດຊຳລະ (EAD) ແມ່ນສະແດງໃຫ້ເຫັນເຖິງມູນຄ່າຂອງເຄື່ອງມືທາງການເງິນທີ່ຂຶ້ນຢູ່ກັບການຄິດໄລ່ຄ່າ ເສື່ອມມູນຄ່າ.

ເພື່ອທີ່ຈະຄຳນວນ EAD ສຳລັບໜີ້ຕ້ອງຮັບສຳລັບສັນຍາເຊົ່າຊື້ຂັ້ນທີ 1, ບໍລິສັດປະເມີນເຫດການການຜິດນັດຊຳລະທີ່ເປັນໄປ ໄດ້ໃນ 12 ເດືອນສຳລັບການຄິດໄລ່ ECL 12 ເດືອນ. ເຖິງຢ່າງໃດກໍຕາມ, ຖ້າຫາກວ່າ ໜີ້ຕ້ອງຮັບສຳລັບສັນຍາເຊົ່າຊື້ ຂັ້ນທີ 1 ຖືກຄາດການໄວ້ວ່າຈະຜິດນັດຊຳລະໃນ 12 ເດືອນຈາກວັນທີ່ໃນລາຍງານຖານະການເງິນ ແລະ ຍັງຖືກຄາດການວ່າຫຼັງຈາກ ການຮັກສາແກ້ໄຂ ແລ້ວຈະຍັງຜິດນັດຊຳລະອີກພາຍຫຼັງ, ສະນັ້ນເຫດການການຜິດນັດຊຳລະທັງໝົດທີ່ເຊື່ອມຕໍ່ກັນແມ່ນ ຖືກນຳມາພິຈາລະນາ. ສຳລັບຊັບສິນທາງດ້ານການເງິນໃນ ຂັ້ນທີ 2, ຂັ້ນທີ 3, ຍອດໜີ້ເມື່ອຜິດນັດຊຳລະແມ່ນຖືກນຳມາ ພິຈາລະນາສຳລັບເຫດການທີ່ເກີດຂຶ້ນຕະຫຼອດອາຍຸຂອງເຄື່ອງມື.

ຄວາມເສຍຫາຍທີ່ເກີດຂຶ້ນເມື່ອຜິດນັດຊຳລະ

ບໍລິສັດໄດ້ລວບລວມຂໍ້ມູນໜີ້ເສຍທີ່ເກີດຂຶ້ນຜ່ານມາ ໂດຍອີງຕາມປະເພດຂອງຜະລິດຕະພັນໃນການກຳນົດອັດຕາ LGD ສຳ ລັບແຕ່ລະກຸ່ມຂອງເຄື່ອງມືທາງການເງິນ.

ການເພີ່ມຂຶ້ນຢ່າງມີສາລະສຳຄັນໃນຄວາມສ່ຽງສິນເຊື່ອ

ບໍລິສັດຕິດຕາມຢ່າງຕໍ່ເນື່ອງໃນຊັບສິນທັງໝົດທີ່ເປັນ ECLs. ເພື່ອກຳນົດວ່າເຄື່ອງມື ຫຼື ກຸ່ມຂອງເຄື່ອງມືທີ່ຕິດຕາມ 12 ເດືອນ ຫຼື ຕະຫຼອດອາຍຸເຄື່ອງມື, ບໍລິສັດປະເມີນວ່າ ມີຄວາມສຳຄັນທີ່ເພີ່ມຂຶ້ນທາງດ້ານຄວາມສ່ຽງສິນເຊື່ອ ຫຼື ບໍ່ ຕັ້ງແຕ່ການ ຮັບຮູ້ເບື້ອງຕົ້ນ. ບໍລິສັດພິຈາລະນາວ່າ ຖ້າຫາກການຊຳລະຕາມສັນຍາກາຍຫຼາຍກວ່າ 1 ມື້, ຈະຖືເປັນການເພີ່ມຂຶ້ນອັນສຳຄັນ ໃນຄວາມສ່ຽງດ້ານສິນເຊື່ອ ນັບຕັ້ງແຕ່ການຮັບຮູ້ຄັ້ງທຳອິດ.

30. ການບໍລິຫານທຶນ

ທຶນຂອງບໍລິສັດ ລວມມີການປະກອບທຶນ.

ຈຸດປະສົງຫຼັກຂອງການບໍລິຫານທຶນຂອງບໍລິສັດແມ່ນເພື່ອໃຫ້ແນ່ໃຈວ່າ ທຶນໄດ້ຖືການຳໃຊ້ເຂົ້າໃນທຸລະກິດຂອງຕົນຢ່າງມີປະສິດທິພາບ.

ສຳລັບຈຸດປະສົງຂອງການບໍລິຫານທຶນຂອງບໍລິສັດ, ທຶນລວມທັງທຶນທີ່ອອກ, ຮຸ້ນບຸລິມະສິດທີ່ແປສະພາບໄດ້, ສ່ວນເກີນມູນຄ່າຮຸ້ນ ແລະ ທຶນສຳຮອງອື່ນໆທີ່ມາຈາກຜູ້ຖືຮຸ້ນຂອງບໍລິສັດແມ່.

ຈຸດປະສົງຂອງການບໍລິຫານທຶນຂອງບໍລິສັດແມ່ນການເພີ່ມມູນຄ່າຂອງຜູ້ຖືຮຸ້ນໃຫ້ສູງຂຶ້ນ.

ບໍລິສັດບໍລິຫານໂຄງສ້າງຂອງທຶນຕົນເອງ ແລະ ດັດແກ້ຕາມການປ່ຽນແປງຂອງສະພາບເສດຖະກິດ ແລະ ຂໍ້ກຳນົດຂອງເງື່ອນໄຂທາງການເງິນ. ເພື່ອຮັກສາ ຫຼື ດັດແກ້ໂຄງສ້າງຂອງທຶນ, ບໍລິສັດອາດຈະດັດແກ້ການຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ, ສົ່ງຄືນທຶນໃຫ້ຜູ້ຖືຮຸ້ນ ຫຼື ອອກຮຸ້ນໃໝ່.

	30 ມິຖຸນາ 2024 *ກີບ*	*30 ມິຖຸນາ 2023* *ກີບ*
ລວມໜີ້ສິນທັງໝົດ	203,837,920,814	170,774,110,967
ຫັກ: ເງິນສົດ	(202,288,823,255)	(156,589,618,260)
ໜີ້ສິນສຸດທິ	**1,549,097,559**	**14,184,492,707**
ທຶນ	1,735,174,136,195	1,493,831,920,883
ທຶນບວກໜີ້ສິນສຸດທິ	**1,736,723,233,754**	**1,508,016,413,590**
ອັດຕາສ່ວນໜີ້ສິນຕໍ່ທຶນ	0.1%	1%

31. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ

ມູນຄ່າຍຸດຕິທຳໝາຍເຖິງ ມູນຄ່າທີ່ຊັບສິນສາມາດແລກປ່ຽນເປັນເງິນ ຫຼື ການຊຳລະສະສາງໜີ້ສິນປົ່ນຜົ່ນຖ່ານລາຍການເຄື່ອນໄຫວໃນເງື່ອນໄຂຕົກລົງກັນ. ເນື່ອງຈາກວ່າບໍ່ມີລາຄາສົມທຽບຂອງຕະຫຼາດ, ຊັບສິນ ແລະ ໜີ້ສິນ ຂອງບໍລິສັດຈຶ່ງບໍ່ສາມາດປະເມີນລາຄາຕາມຕະຫຼາດໄດ້. ດັ່ງນັ້ນ, ມູນຄ່າຍຸດຕິທຳຈຶ່ງຖືກປະເມີນຕາມການຕັ້ງຂໍ້ສົມມຸດຖານອີງຕາມລັກສະນະຂອງຊັບສິນ ແລະ ໜີ້ສິນ. ຕາມຄຳເຫັນຂອງຄະນະບໍລິຫານ, ມູນຄ່າຕາມບັນຊີຂອງ ຊັບສິນ ແລະ ໜີ້ສິນທາງການເງິນທີ່ຢູ່ໃນໃບລາຍງານຖານະການເງິນແມ່ນຖືກຄາດຄະເນຢ່າງສົມເຫດສົມຜົນກັບມູນຄ່າຍຸດຕິທຳ. ໃນການປະເມີນດັ່ງກ່າວ, ຄະນະບໍລິຫານຂອງບໍລິສັດ ສົມມຸດຖານວ່າ ໜີ້ຕ້ອງຮັບສັນຍາເຊົ່າຊື້ສ່ວນໃຫຍ່ຖືຈົນຄົບກຳນົດ ດ້ວຍມູນຄ່າຍຸດຕິທຳເທົ່າກັບມູນຄ່າຕາມບັນຊີທີ່ຖືກດັດແກ້ເງິນແຮຈາກຄ່າເສື່ອມໜີ້ເສຍ.

ບໍລິສັດໄດ້ຈັດລຳດັບດັ່ງລຸ່ມນີ້ໃນການກຳນົດ ແລະ ເປີດເຜີຍມູນຄ່າຍຸດຕິທຳຂອງເຄື່ອງທາງການເງິນໂດຍນຳໃຊ້ເຕັກນິກການປະເມີນຄ່າ:

- ລະດັບ 1: ລາຄາທີ່ສະເໜີ (ລາຄາທີ່ບໍ່ທັນດັດແກ້) ທີ່ໃຊ້ສຳລັບຊັບສິນ ແລະ ໜີ້ສິນອັນດຽວກັນໃນຕະຫຼາດ ໃນຕະຫຼາດເພື່ອຈຳແນກຊັບສິນ ຫຼື ໜີ້ສິນ.
- ລະດັບ 2: ເຕັກນິກອື່ນໆ ທີ່ຂໍ້ມູນປ້ອນທັງໝົດທີ່ມີຜົນກະທົບທີ່ສຳຄັນຕໍ່ມູນຄ່າຍຸດຕິທຳທີ່ບັນທຶກໄວ້ແມ່ນສາມາດສັງເກດໄດ້, ບໍ່ວ່າຈະທາງກົງ ຫຼື ທາງອ້ອມ.
- ລະດັບ 3: ເຕັກນິກທີ່ນຳໃຊ້ຂໍ້ມູນທີ່ມີຜົນກະທົບທີ່ສຳຄັນຕໍ່ມູນຄ່າຍຸດຕິທຳທີ່ບັນທຶກໄວ້ທີ່ບໍ່ໄດ້ອີງໃສ່ຂໍ້ມູນຕະຫຼາດທີ່ສັງເກດໄດ້.

31. ມູນຄ່າຍຸດຕິທຳຂອງຊັບສິນ ແລະ ໜີ້ສິນທາງການເງິນ (ຕໍ່)

ຊັບສິນ ແລະ ໜີ້ສິນທາງການເງິນທັງໝົດຖືກຄິດໄລ່ ປະເມີນມູນຄ່າຍຸຕິທຳໂດຍໃຊ້ເຕັກນິກການປະເມີນຄ່າລະດັບ 3 ໃນທັງສອງປີໂດຍບໍ່ມີການໂອນລະຫວ່າງມູນຄ່າຍຸດຕິທຳໃນຊ່ວງເວລາລາຍງານດັ່ງລຸ່ມນີ້:

		ມູນຄ່າຍຸດຕິທຳ			
	ມູນຄ່າຕາມບັນຊີ	*ລະດັບ 1*	*ລະດັບ 2*	*ລະດັບ 3*	*ລວມ*
ຊັບສິນທາງການເງິນ					
ເງິນສົດ ແລະ ທຽບເທົ່າເງິນສົດ	202,288,823,255	202,288,823,255	-	-	202,288,823,255
ເງິນຝາກຢູ່ທະນາຄານ	30,937,669,818	30,937,669,818	-	-	30,937,669,818
ໜີ້ຕ້ອງຮັບສັນຍາເຊົ່າຊື້ (*)	1,174,128,215,548	-	-	1,174,128,215,548	1,174,128,215,548
ຊັບສິນທາງການເງິນອື່ນໆ	515,579,119,959	-	-	515,579,119,959	515,579,119,959
	1,922,933,828,580	**233,226,493,073**	**-**	**1,689,707,335,507**	**1,922,933,828,580**
ໜີ້ສິນທາງການເງິນ					
ເງິນກູ້ໄລຍະຍາວ	39,512,487,642	-	-	39,512,487,642	39,512,487,642
ໜີ້ສິນທາງການເງິນອື່ນໆ	2,635,219,000	2,635,219,000	-	-	2,635,219,000
	42,147,706,642	**2,635,219,000**	**-**	**39,512,487,642**	**42,147,706,642**

(*) ລວມມີເງິນແຮຄ່າເສື່ອມມູນຄ່າ

ບໍ່ມີການໂອນຍ້າຍລະດັບມູນຄ່າຍຸດຕິທຳໃນໄລຍະເວລາອອກບົດລາຍງານ.

32. ອັດຕາແລກປ່ຽນສະກຸນເງິນຕາຕ່າງປະເທດທີ່ນຳໃຊ້ຕໍ່ກັບເງິນກີບລາວໃນມື້ລາຍງານ

	30 ມິຖຸນາ 2024	*30 ມິຖຸນາ 2023*
	ກີບ	*ກີບ*
ໂດລາ ສະຫະລັດ	21,999	19,037
ບາດ ໄທ	674	555

33. ເຫດການພາຍຫຼັງວັນທີຂອງການລາຍງານ

ນອກເໜືອຈາກທີ່ເປີດເຜີຍໃນເອກະສານລາຍງານການເງິນເຫຼົ່ານີ້, ນະວັນທີຂອງບົດລາຍງານສະບັບນີ້ແມ່ນບໍ່ມີເຫດການໃດ ເກີດຂຶ້ນນັບຕັ້ງແຕ່ ວັນທີ 30 ມິຖຸນາ 2024 ທີ່ຈຳເປັນຕ້ອງໃຫ້ມີການດັດແກ້ ຫຼື ການເປີດເຜີຍໃນເອກະສານລາຍງານການ ເງິນຂອງບໍລິສັດ.

ທ່ານ Yoshihito Oshima
ຜູ້ອຳນວຍການໃຫຍ່

ທ່ານ Takuro Nishida
ຫົວໜ້າຝ່າຍການເງິນ

ນະຄອນຫຼວງວຽງຈັນ, ສປປ ລາວ

31 ສິງຫາ 2024